# ລະບຽບການຂອງອົງການແຮງງານສາກົນ ກ່ຽວກັບໂລກເອດສ໌ ກັບການເຮັດວຽກ

**ສາລະບານ** ........ ໜ້າ


1. ຈຸດປະສົງ ........ 4
2. ການນຳໃຊ້ ........ 4
3. ຂອບເຂດແລະຄຳສັບທີ່ໃຊ້ໃນລະບຽບການປະຕິບັດສະບັບນີ້ ........ 5
3.1 ຂອບເຂດ ........ 5
3.2 ຄຳສັບທີ່ໃຊ້ ........ 5
4. ຫຼັກການສຳຄັນ ........ 8
4.1 ການຮັບຮູ້ໂລກເອດສ໌ເປັນບັນຫາຢູ່ໃນສະຖານທີ່ເຮັດວຽກ ........ 8
4.2 ການບໍ່ຈຳແນກ ........ 8
4.3 ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ ........ 8
4.4 ສະພາບແວດລ້ອມຂອງການເຮັດວຽກທີ່ມີສຸຂະພາບ ........ 9
4.5 ການໃຫ້ປຶກສາຄົ້ນຄວ້າທາງສັງຄົມ ........ 9
4.6 ການກວດຫາການຕິດເຊື້ອເພື່ອໃຫ້ອອກຈາກວຽກ ຫຼື ຂະບວນການເຮັດວຽກ ........ 9
4.7 ການຮັກສາຄວາມລັບ ........ 9
4.8 ຄວາມຕໍ່ເນື່ອງຂອງສາຍພົວພັນແຮງງານ ........ 10
4.9 ການປ້ອງກັນ/ການຕ້ານ ........ 10
4.10 ການເບິ່ງແຍງແລະການຊ່ວຍເຫຼືອ ........ 10
5. ສິດທິໂດຍທົ່ວໄປແລະຄວາມຮັບຜິດຊອບ ........ 11
5.1 ລັດຖະບານແລະອົງການລັດທີ່ຮັບຜິດຊອບ ........ 11
5.2 ຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ........ 14
5.3 ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ........ 17
6. ການປ້ອງກັນໂດຍການໃຫ້ຂໍ້ມູນຂ່າວສານແລະການສຶກສາ ........ 20
6.1. ການໃຫ້ຂໍ້ມູນຂ່າວສານແລະການໂຄສະນາປູກຈິດສຳນຶກ ........ 20
6.2 ແຜນງານໃຫ້ການສຶກສາອົບຮົມ ........ 21
6.3 ແຜນງານທີ່ມີລັກສະນະສະເພາະດ້ານບົດບາດຍິງ-ຊາຍ ........ 23
6.4 ການເຊື່ອມສານກັບແຜນງານສົ່ງເສີມສຸຂະພາບ ........ 24
6.5 ມາດຕະການໃນພາກປະຕິບັດເພື່ອສະໜັບສະໜູນໃຫ້ມີການປ່ຽນແປງດ້ານພຶດຕິກຳ ........ 24
6.6 ແຜນງານເຂົ້າເຖິງຊຸມຊົນ ........ 25
7. ການຝຶກອົບຮົມ ........ 25
7.1. ການຝຶກອົບຮົມໃຫ້ແກ່ຜູ້ຈັດການ, ຜູ້ຊີ້ນຳວຽກແລະພະນັກງານຝ່າຍບຸກຄະລາກອນ ........ 25

7.2. ການຝຶກອົບຮົມໃຫ້ແກ່ອາສາສະໝັກເພື່ອນສອນເພື່ອນ ..........26
7.3 ການຝຶກອົບຮົມໃຫ້ແກ່ຜູ້ຕາງໜ້າຂອງຜູ້ອອກແຮງງານ..........26
7.4 ການຝຶກອົບຮົມໃຫ້ແກ່ພະນັກງານຝ່າຍສຸຂະພາບ ແລະຄວາມປອດໄພແຮງງານ ..........27
7.5 ການຝຶກອົບຮົມໃຫ້ແກ່ພະນັກງານກວດກາແຮງງານ/ໂຮງງານ ..........28
7.6 ການຝຶກອົບຮົມໃຫ້ແກ່ຜູ້ອອກແຮງງານທີ່ເຂົ້າໃກ້ເລືອດ ..........
ຫຼື ທາດແຫຼວຈາກຮ່າງກາຍມະນຸດ..........29
8. ການກວດ..........29
8.1 ຂໍ້ຫ້າມກ່ຽວກັບການບັນຈຸພະນັກງານແລະການຈ້າງງານ ..........30
8.2 ຂໍ້ຫ້າມກ່ຽວກັບການເຮັດປະກັນ ..........30
8.3 ການເຝົ້າລະວັງທາງລະບາດວິທະຍາ..........30
8.4. ການກວດແບບສະມັກໃຈ ..........31
8.5. ການກວດແລະການປິ່ນປົວຫຼັງມີການຈັບບາຍເຊື້ອເນື່ອງຈາກການເຮັດວຽກ ..........31
9. ການເບິ່ງແຍງແລະການຊ່ວຍເຫຼືອ ..........32
9.1. ຄວາມເທົ່າທຽມກັບການເຈັບປ່ວຍຂັ້ນຮ້າຍແຮງຈາກພະຍາດອື່ນໆ..........32
9.2. ການໃຫ້ຄຳປຶກສາ..........33
9.3. ບໍລິການສຸຂະພາບແຮງງານແລະບໍລິການສຸຂະພາບດ້ານອື່ນໆ..........34
9.4 ການເຊື່ອມສານກັບກຸ່ມກຸ່ມຊ່ວຍເຫຼືອຕົນເອງແລະກຸ່ມຕ່າງໆໃນລະດັບຊຸມຊົນ ..........34
9.5 ອຸດໜູນປະເພດຕ່າງໆ ..........34
9.6 ການປົກຄຸມຂອງການປະກັນສັງຄົມ ..........35
9.7 ຄວາມເປັນສ່ວນຕົວແລະການຮັກສາຄວາມລັບ ..........35
9.8 ແຜນງານຊ່ວຍເຫຼືອຜູ້ອອກແຮງງານແລະຄອບຄົວ..........36

**ເອກະສານຊ້ອນທ້າຍ**

I. ຄວາມເປັນຈິງພື້ນຖານກ່ຽວກັບພະຍາດລະບາດດັ່ງກ່າວ ແລະຜົນກະທົບທີ່ກ່ຽວຂ້ອງ..........38
II. ການຄວບຄຸມການຕິດເຊື້ອຢູ່ສະຖານທີ່ເຮັດວຽກ ..........46
III. ບັນຊີກວດສອບສຳລັບການສ້າງແລະການຈັດຕັ້ງປະຕິບັດ..........
ນະໂຍບາຍວ່າດ້ວຍໂລກເອດສ໌ຢູ່ສະຖານທີ່ເຮັດວຽກ ..........48

## 1. ຈຸດປະສົງ.

ເພື່ອສະໜອງແນວທາງສໍາລັບການແກ້ໄຂບັນຫາການແຜ່ລະບາດຂອງໂລກເອດສ໌ ຢູ່ໃນສະຖານທີ່ເຮັດວຽກ ແລະ ໃນການສົ່ງເສີມວຽກເຮັດທີ່ເໝາະສົມເປັນທໍາ. ລະບຽບປະຕິບັດສະບັບນີ້ ກວມເອົາບັນດາຂົງເຂດການດໍາເນີນງານທີ່ສໍາຄັນດັ່ງຕໍ່ໄປນີ້.

ກ. ການປ້ອງກັນໂລກເອດສ໌.

ຂ. ການຄຸ້ມຄອງແລະການຫລຸດຜ່ອນຜົນກະທົບຂອງໂລກເອດສ໌ ໃນສະຖານທີ່ເຮັດວຽກ.

ຄ. ການເບິ່ງແຍງແລະການຊ່ວຍເຫຼືອຜູ້ອອກແຮງງານ ທີ່ຕິດເຊື້ອ ແລະ ໄດ້ຮັບຜົນກະທົບຈາກໂລກເອດສ໌.

ງ. ການລົບລ້າງຄວາມມີປອມດ້ອຍແລະການຈໍາແນກບົນພື້ນຖານສະຖານະພາບການຕິດເຊື້ອ HIV ຫຼື ເຊື້ອໂລກເອດສ໌ຕົວຈິງ ຫຼື ທີ່ເຂົ້າໃຈວ່າຕິດເຊື້ອ.

## 2. ການນໍາໃຊ້.

ຄວນນໍາໃຊ້ລະບຽບປະຕິບັດສະບັບນີ້ດັ່ງນີ້:

ກ. ສ້າງການປ້ອງກັນແລະຕອບໂຕ້ທີ່ໜັກແໜ້ນຂຶ້ນໃນລະດັບວິສາຫະກິດ, ຊຸມຊົນ, ຂະແໜງການ, ລະດັບຊາດ, ພາກພື້ນແລະສາກົນ;

ຂ. ສົ່ງເສີມຂະບວນການສຶກສາຄົ້ນຄວ້າ, ການຂໍຄໍາປຶກສາ, ການເຈລະຈາ ແລະ ທຸກແບບການຮ່ວມມືລະຫວ່າງພາກລັດ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານແລະບັນດາຜູ້ຕາງໜ້າຂອງຜູ້ໃຊ້ແຮງງານແລະຜູ້ອອກແຮງງານ, ບຸກຄະລາກອນດ້ານສຸຂະພາບແຮງງານ, ຊ່ຽວຊານໂລກເອດສ໌ ແລະ ທຸກພາກສ່ວນກ່ຽວຂ້ອງ (ເຊິ່ງອາດຈະລວມເອົາທັງບັນດາອົງການຈັດຕັ້ງໃນລະດັບຊຸມຊົນ ແລະ ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດ (NGOs));

ຄ. ໃຫ້ຄວາມສໍາຄັນຕໍ່ເນື້ອໃນຂອງລະບຽບປະຕິບັດສະບັບນີ້ພາຍໃຕ້ການຂໍຄໍາປຶກສາຮ່ວມກັບບັນດາຄູ່ຮ່ວມງານທາງສັງຄົມດ້ວຍການນໍາໃຊ້ເຂົ້າໃນ:

- ກົດໝາຍ, ນະໂຍບາຍແລະແຜນດໍາເນີນງານແຫ່ງຊາດ,
- ບັນດາຂໍ້ກໍານົດກົດລະບຽບພາຍໃນຫົວໜ່ວຍແຮງງານ/ວິສາຫະກິດ, ແລະ
- ນະໂຍບາຍແລະແຜນດໍາເນີນງານພາຍໃນຫົວໜ່ວຍແຮງງານ.

## 3. ຂອບເຂດແລະຄຳສັບທີ່ໃຊ້ໃນລະບຽບສະບັບນີ້

### 3.1 ຂອບເຂດ

ລະບຽບປະຕິບັດສະບັບນີ້ ນຳໃຊ້ສຳລັບ:

ກ. ຜູ້ໃຊ້ແຮງງານແລະຜູ້ອອກແຮງງານທຸກຄົນ (ລວມທັງຜູ້ສະມັກງານ) ທັງໃນພາກລັດ ແລະເອກະຊົນ, ແລະ

ຂ. ວຽກທຸກດ້ານ ບໍ່ວ່າຈະເປັນວຽກພາຍໃນຂະແໜງເສດຖະກິດໃນລະບົບແລະນອກລະບົບ.

### 3.2 ຄຳສັບທີ່ໃຊ້.

*HIV:* Human Immunodeficiency Virus - ໄວຣັດສ໌ພູມຕ້ານທານຂອງຮ່າງກາຍບົກຜ່ອງ, ເປັນ ໄວຣັດສ໌ທີ່ເຮັດໃຫ້ລະບົບພູມຕ້ານທານຂອງຮ່າງກາຍອ່ອນແອແລະໃນທີ່ສຸດກໍ່ຈະເປັນສາເຫດເຮັດໃຫ້ ເປັນໂລກເອດສ໌.

***ໂລກເອດສ໌-AIDS:*** ໄດ້ມາຈາກຄຳວ່າ Acquired Immune Deficiency Syndrome ເຊິ່ງໝາຍເຖິງກຸ່ມອາການທີ່ເກີດຈາກພູມຕ້ານທານຂອງຮ່າງກາຍເຊື່ອມລົງຈົນເຮັດໃຫ້ນຳໄປສູ່ການຕິດເຊື້ອພະຍາດແຊກຊ້ອນອື່ນໆແລະໂລກມະເຮັງໄດ້ງ່າຍ ເຊິ່ງມາຮອດປະຈຸບັນນີ້ຍັງບໍ່ທັນມີຢາຮັກສາໄດ້ເທື່ອ.

***ຜູ້ທີ່ໄດ້ຮັບຜົນລະທົບຈາກໂລກເອດສ໌:*** ໝາຍເຖິງບຸກຄົນທີ່ມີຊີວິດປ່ຽນໄປໃນທາງໃດທາງໜຶ່ງຍ້ອນການຕິດເຊື້ອໂລກເອດສ໌ ອັນເປັນຜົນເນື່ອງມາຈາກຜົນກະທົບໃນວົງກວ້າງຂອງພະຍາດຕິດແປດດັ່ງກ່າວນີ້.

***ການຈຳແນກ:*** ຄຳສັບທີ່ນຳໃຊ້ໃນລະບຽບປະຕິບັດສະບັບນີ້ແມ່ນສອດຄ່ອງກັບຄຳນິຍາມທີ່ຖືກກຳນົດໄວ້ໃນສົນທິສັນຍາຂອງອົງການແຮງງານສາກົນວ່າດ້ວຍການຈຳແນກ (ໃນຂົງເຂດການຈ້າງງານແລະການປະກອບອາຊີບ), ສະບັບປີ 1958 (ເລກທີ 111) ເຊິ່ງລວມເອົາທັງການຈຳແນກບົນພື້ນຖານສະຖານະພາບການຕິດເຊື້ອໂລກເອດສ໌. ສົນທິສັນຍາດັ່ງກ່າວຍັງລວມເອົາການຈຳແນກບົນພື້ນໃນການເຂົ້າໃຈວ່າ ມີການຕິດເຊື້ອໂລກເອດສ໌ ທີ່ລວມເອົາທັງການຈຳແນກບົນພື້ນຖານວິຖີທາງເພດ (ເພດທີສາມ).

***ຜູ້ທີ່ມີຄວາມພິການ:*** ຄຳສັບທີ່ນຳໃຊ້ໃນລະບຽບປະຕິບັດສະບັບນີ້ແມ່ນສອດຄ່ອງກັບຄຳນິຍາມທີ່ຖືກກຳນົດໄວ້ໃນສົນທິສັນຍາຂອງອົງການແຮງງານສາກົນວ່າດ້ວຍການຟື້ນຟູວິຊາຊີບແລະການຈ້າງງານ (ສຳລັບຄົນພິການ), ສະບັບປີ 1983 (ເລກທີ 159), ເຊິ່ງມີເນື້ອໃນຢູ່ວ່າ: ຜູ້ທີ່ມີຄວາມ

ພິການແມ່ນບຸກຄົນທີ່ໂອກາດໃນການໄດ້ເຮັດ, ຮັກສາ ແລະ ກ້າວໜ້າໃນວຽກທີ່ເໝາະສົມນັ້ນຫຼຸດລົງ ຢ່າງຫຼວງຫຼາຍອັນເນື່ອງມາຈາກຄວາມເສຍອົງຄະທາງຮ່າງກາຍ ຫຼື ທາງມັນສະໝອງທີ່ຖືກຮັບຮູ້.

***ຜູ້ໃຊ້ແຮງງານ:*** ໝາຍເຖິງບຸກຄົນ ຫຼື ອົງການຈັດຕັ້ງທີ່ຈ້າງຜູ້ອອກແຮງງານເຂົ້າເຮັດວຽກ ພາຍໃຕ້ສັນຍາຈ້າງທີ່ເປັນລາຍລັກອັກສອນ ຫຼື ປາກເປົ່າ ເຊິ່ງເປັນສັນຍາທີ່ກຳນົດສິດແລະໜ້າທີ່ ຂອງທັງສອງຝ່າຍທີ່ສອດຄ່ອງຕາມກົດໝາຍແລະແບບວິທີການປະຕິບັດຂອງປະເທດ. ຜູ້ໃຊ້ແຮງ ງານນັ້ນ ອາດຈະເປັນລັດຖະບານ, ອົງການຈັດຕັ້ງຂອງລັດ, ວິສາຫະກິດເອກະຊົນ ແລະ ສ່ວນ ບຸກຄົນ.

***ອົງການບໍລິການສຸຂະພາບແລະຄວາມປອດໄພແຮງງານຂອງລັດ (OHS):*** ຄຳສັບທີ່ນຳໃຊ້ ໃນລະບຽບປະຕິບັດສະບັບນີ້ ແມ່ນສອດຄ່ອງກັບຄຳນິຍາມທີ່ຖືກກຳນົດໄວ້ໃນສົນທິສັນຍາຂອງ ອົງ ການແຮງງານສາກົນ ວ່າດ້ວຍບໍລິການສຸຂະພາບແຮງງານ, ສະບັບປີ 1958, (ເລກທີ 161) ເຊິ່ງມີ ເນື້ອໃນຢູ່ວ່າ: ອົງການ ບໍລິການສຸຂະພາບແຮງງານແລະຄວາມປອດໄພແຮງງານຂອງລັດ ເປັນອົງການບໍລິການສຸຂະພາບທີ່ມີໜ້າທີ່ປ້ອງກັນຈຳເປັນພື້ນຖານ ແລະ ຮັບຜິດຊອບໃນການໃຫ້ ຄຳແນະນຳແກ່ຜູ້ໃຊ້ແຮງງານ ກໍ່ຄື ຜູ້ອອກແຮງງານ ແລະ ບັນດາຜູ້ຕາງໜ້າຂອງເຂົາເຈົ້າໃຫ້ຮູ້ກ່ຽວ ກັບບັນດາເງື່ອນໄຂຂອງການສ້າງ ແລະ ຮັກສາສະພາບແວດລ້ອມໃນສະຖານທີ່ເຮັດວຽກແລະວິທີ ການເຮັດວຽກທີ່ປອດໄພ ແລະ ມີສຸຂະພາບ ເພື່ອເຮັດແນວໃດໃຫ້ມີສຸຂະພາບທາງຮ່າງກາຍແລະ ທາງມັນສະໝອງທີ່ດີເລີດໃນເວລາເຮັດວຽກ. OHS ຍັງໃຫ້ຄຳແນະນຳກ່ຽວກັບການປັບປຸງນວຽກ ໃຫ້ເໝາະສົມກັບຄວາມສາມາດຂອງຜູ້ອອກແຮງງານຕາມສຸຂະພາບທາງຮ່າງກາຍ ແລະ ທາງມັນ ສະໝອງຂອງເຂົາເຈົ້າ.

***ການປັບປຸງແບບສົມເຫດສົມຜົນ/ການເອື້ອອຳນວຍຕາມສົມຄວນ (ຫຼື reasonable accommodation):*** ໝາຍເຖິງການດັດແປງ ຫຼື ການດັດປັບໃດກໍ່ຕາມທີ່ມີຕໍ່ວຽກ ຫຼື ສະຖານທີ່ ເຮັດວຽກ ເຊິ່ງສາມາດປະບັດໄດ້ຢ່າງສົມເຫດສົມຜົນ ແລະ ຊ່ວຍເຮັດໃຫ້ຜູ້ຕິດເຊື້ອ ຫຼື ຄົນປ່ວຍໂລກ ເອດສ໌ ສາມາດເຂົ້າເຖິງ ຫຼື ເຂົ້າຮ່ວມ ໃນການປະກອບອາຊີບ ຫລື ວຽກງານ.

***ການກວດຫາການຕິດເຊື້ອ (screening):*** ຈະວັດແທກເບິ່ງວ່າ: ໄດ້ມີການກວດຫາເຊື້ອ ໂລກເອດສ໌ທາງກົງ ຫຼື ທາງອ້ອມ (ການປະເມີນພຶດຕິກຳສ່ຽງ) ຫຼື ມີການຕັ້ງຄຳຖາມກ່ຽວກັບການ ກວດເລືອດແລ້ວຫຼືບໍ່ ຫຼື ມີການຖາມກ່ຽວກັບການປິ່ນປົວດ້ວຍຢາແລ້ວຫຼືບໍ່.

***ເພດແລະບົດບາດຍິງ-ຊາຍ:*** ລະຫວ່າງແມ່ຍິງກັບຜູ້ຊາຍພົບວ່າ: ມີຄວາມແຕກຕ່າງກັນທັງ ທາງດ້ານຊີວະແລະບົດຍາດທາງສັງຄົມ. ຄຳວ່າ "ເພດ" ໃນທີ່ນີ້ໝາຍເຖິງຄວາມແຕກຕ່າງທາງຊີວະ, ສ່ວນຄຳວ່າ "ບົດບາດຍິງ-ຊາຍ" ໝາຍເຖິງຄວາມແຕກຕ່າງດ້ານບົດບາດທາງສັງຄົມ ແລະ ສາຍ ພົວພັນລະຫວ່າງແມ່ຍິງກັບຜູ້ຊາຍ. ບົດບາດຍິງ-ຊາຍ ເປັນສິ່ງທີ່ຜ່ານການຮຽນຮູ້ດ້ວຍການເຂົ້າສັງ ຄົມ ແລະ ມີຄວາມແຕກຕ່າງຫຼາກຫຼາຍຕາມວັດທະນາທຳ. ບົດບາດຍິງ-ຊາຍ ໄດ້ຮັບຜົນກະທົບ

ຈາກອາຍຸ, ຊົນຊັ້ນ, ເຊື້ອຊາດ, ຊົນຊາດ-ຊົນເຜົ່າແລະສາສະໜາ, ພ້ອມນັ້ນຍັງໄດ້ຮັບຜົນກະທົບຈາກແວດລ້ອມທາງພູມສາດ, ເສດຖະກິດແລະການເມືອງ.

***ການຕິດຕໍ່ທາງເພດສຳພັນ (STI):*** ໝາຍເຖິງການຕິດຕໍ່ຜ່ານການມີເພດສຳພັນ ເຊິ່ງໃນນັ້ນລວມມີ: ໜອງໃນ, ຫູດຫອນໄກ່, ລິງຂາວ, ແລະຍັງລວມເອົາທັງໂລກອື່ນໆທີ່ເມື່ອກ່ອນຮູ້ກັນໃນຊື່ຂອງພະຍາດຕິດຕໍ່ທາງເພດສຳພັນ (STDs).

***ມາດຕະການປ້ອງກັນທີ່ເປັນເອກະພາບ:*** ແມ່ນແບບວິທີປະຕິບັດຄວບຄຸມການຕິດເຊື້ອທີ່ເປັນມາດຕະຖານງ່າຍດາຍເພື່ອນຳໃຊ້ເຂົ້າໃນການຫຼຸດຜ່ອນຄວາມສ່ຽງຂອງພະຍາດຕິດຕໍ່ທາງສາຍເລືອດ (ສຳລັບຄຳອະທິບາຍຄົບຖ້ວນ, ໃຫ້ເບິ່ງໃນເອກະສານຊ້ອນທ້າຍ II).

***ການຍົກເລີກການຈ້າງງານ*** ໝາຍເຖິງສິ່ງທີ່ຖືກກຳນົດໄວ້ໃນສົນທິສັນຍາວ່າດ້ວຍການຍົກເລີກການຈ້າງງານ, ສະບັບປີ 1982 (ເລກທີ 158) ໂດຍມີເນື້ອໃນວ່າ: ການຍົກເລີກການຈ້າງງານ ແມ່ນການໃຫ້ຢຸຕິການເຮັດວຽກທີ່ເປັນຂໍ້ລິເລີ່ມຈາກຜູ້ໃຊ້ແຮງງານ.

***ຜູ້ອອກແຮງງານໃນກິດຈະກຳນອກລະບົບ (ໃນຂະແໜງເສດຖະກິດນອກລະບົບ) :*** ອີງຕາມຄວາມໝາຍໃນບົດລາຍງານຂອງຜູ້ອຳນວຍການໃຫຍ່ອົງການແຮງງານສາກົນ ໝາຍເຖິງຜູ້ອອກແຮງງານໃນຫົວໜ່ວຍທຸລະກິດຂະໜາດນ້ອຍທີ່ຜະລິດແລະແຈກຢາຍສິນຄ້າແລະບໍລິການ, ແລະ ສ່ວນຫຼາຍແລ້ວປະກອບດ້ວຍຜູ້ຜະລິດເອກະລາດ ຫຼື ເປັນຜູ້ປະກອບອາຊີບດ້ວຍຕົນເອງທີ່ຢູ່ຕາມບັນດາເມືອງໃຫຍ່ຂອງປະເທດກຳລັງພັດທະນາ, ຈຳນວນໜຶ່ງມີການຈ້າງແຮງງານຄອບຄົວ ແລະ/ຫຼື ຈ້າງຜູ້ອອກແຮງງານຈຳນວນໜຶ່ງ ຫຼື ຄົນຝຶກງານ, ເປັນຫົວໜ່ວຍທຸລະກິດທີ່ໃຊ້ທຶນນ້ອຍ ຫຼື ບໍ່ມີທຶນເລີຍ, ມີລະດັບເຕັກໂນໂລຊີແລະທັກສະຕ່ຳ, ດ້ວຍເຫດນັ້ນ ຈຶ່ງມີສະມັດຕະພາບໃນການຜະລິດຕ່ຳເຮັດໃຫ້ຜູ້ອອກແຮງງານໄດ້ຮັບລາຍໄດ້ຕ່ຳຫຼາຍແລະບໍ່ເປັນປົກກະຕິ (ລະອຽດ, ໃຫ້ເບິ່ງເອກະສານຊ້ອນທ້າຍ I).

***ຜູ້ຕາງໜ້າຜູ້ອອກແຮງງານ:*** ອີງຕາມສົນທິສັນຍາຂອງອົງການແຮງງານສາກົນວ່າດ້ວຍຜູ້ຕາງໜ້າຜູ້ອອກແຮງງານ, ສະບັບປີ 1951 (ເລກທີ 135), ຜູ້ຕາງໜ້າຜູ້ອອກແຮງງານ ແມ່ນບຸກຄົນທີ່ໄດ້ຮັບການຮັບຮູ້ຈາກກົດໝາຍ ຫຼື ແບບວິທີປະຕິບັດຂອງປະເທດໃນຖານະຂອງ:

ກ. ຜູ້ຕາງໜ້າກຳມະບານຄື: ຜູ້ທີ່ໄດ້ຮັບມອບໝາຍ ຫຼື ເລືອກຕັ້ງເອົາໂດຍກຳມະບານ ຫຼື ສາມະຊິກຂອງກຳມະບານ; ຫຼື

ຂ. ຜູ້ຕາງໜ້າທີ່ຖືກເລືອກຕັ້ງເອົາຄື: ຜູ້ຕາງໜ້າທີ່ໄດ້ຮັບການເລືອກຕັ້ງເອົາຢ່າງເສລີຈາກຜູ້ອອກແຮງງານຂອງວິສາຫະກິດ ໂດຍການເລືອກຕັ້ງເອົານັ້ນສອດຄ່ອງຕາມບັນດາບົດບັນຍັດທີ່ມີໃນກົດໝາຍຂອງປະເທດ ຫຼື ລະບຽບການ ຫຼື ຂໍ້ຕົກລົງຮ່ວມ

ກັນ, ໜ້າທີ່ຂອງຜູ້ຕາງໜ້າທີ່ເລືອກຕັ້ງເອົາໃນລັກສະນະນີ້ ຈະບໍ່ລວມເອົາກິດຈະກຳທີ່ຖືກຮັບຮູ້ວ່າເປັນສິດທິພິເສດສະເພາະຂອງກຳມະບານພາຍໃນປະເທດ.

*ຄວາມສ່ຽງ/ຄວາມບໍ່ສາມາດປົກປ້ອງຕົນເອງໄດ້ (vulnerability):* ໝາຍເຖິງການຂາດອຳນາດທາງເສດຖະກິດ-ສັງຄົມ, ເງື່ອນໄຂທາງວັດທະນະທຳແລະສະພາບຂອງວຽກທີ່ເຮັດໃຫ້ຜູ້ອອກແຮງງານສ່ຽງຕໍ່ການຕິດເຊື້ອ ແລະ ໝາຍເຖິງສະພາບຕ່າງໆທີ່ເຮັດໃຫ້ເດັກນ້ອຍຕົກໃນຄວາມສ່ຽງສູງຂຶ້ນກວ່າເກົ່າຕໍ່ການກາຍເປັນແຮງງານເດັກ(ລາຍລະອຽດ, ໃຫ້ເບິ່ງໃນເອກະສານຊ້ອນທ້າຍ I).

## 4. ຫຼັກການສຳຄັນ

### 4.1 ການຮັບຮູ້ໂລກເອດສ໌ເປັນບັນຫາຢູ່ສະຖານທີ່ເຮັດວຽກ

ໂລກເອດສ໌ ເປັນບັນຫາຢູ່ສະຖານທີ່ເຮັດວຽກ, ແລະ ຄວນຖືກປະຕິບັດຄືກັນກັບການເຈັບເປັນ/ອາການປ່ວຍຂັ້ນຮ້າຍແຮງອື່ນໆທີ່ມີໃນສະຖານທີ່ເຮັດວຽກ. ການຮັບຮູ້ໂລກເອດສ໌ເປັນບັນຫາຢູ່ສະຖານທີ່ເຮັດວຽກຖືວ່າຈຳເປັນເນື່ອງຈາກໂລກເອດສ໌ ບໍ່ໄດ້ສົ່ງຜົນກະທົບສະເພາະຕໍ່ຜູ້ອອກແຮງງານເທົ່ານັ້ນ ແຕ່ຍັງສົ່ງຜົນກະທົບຕໍ່ສະຖານທີ່ເຮັດວຽກນຳອີກ; ໃນຖານະທີ່ສະຖານທີ່ເຮັດວຽກກໍ່ເປັນພາກສ່ວນໜຶ່ງຂອງຊຸມຊົນທ້ອງຖິ່ນ, ສະຖານທີ່ເຮັດວຽກ ຈຶ່ງຄວນສະແດງບົດບາດສູ້ຊົນເພື່ອຈຳກັດການແຜ່ລະບາດແລະຜົນກະທົບຂອງພະຍາດຕິດແປດດັ່ງກ່າວ.

### 4.2 ການບໍ່ຈຳແນກ

ອີງຕາມຈິດໃຈຂອງວຽກທີ່ມີຄຸນຄ່າ-ເປັນທຳແລະການເຄົາລົບຕໍ່ສິດທິມະນຸດແລະກຽດສັກສີຂອງຜູ້ຕິດເຊື້ອ ຫຼື ໄດ້ຮັບຜົນກະທົບຈາກໂລກເອດສ໌, ສະຖານທີ່ເຮັດວຽກຈຶ່ງບໍ່ຄວນຈຳແນກຕໍ່ຜູ້ອອກແຮງງານບົນພື້ນຖານຂອງສະຖານະພາບການຕິດເຊື້ອຕົວຈິງ ຫຼື ທີ່ເຂົ້າໃຈວ່າຕິດເຊື້ອ. ການຈຳແນກແລະການສ້າງຄວາມມີປອມດ້ອຍຕໍ່ຜູ້ທີ່ຕິດເຊື້ອໂລກເອດສ໌ ຈະເປັນອຸປະສັກກີດຂວາງບັນດາຄວາມ ພະຍາຍາມທີ່ມີເປົ້າໝາຍແນໃສ່ສົ່ງເສີມການປ້ອງກັນ/ການຕ້ານໂລກເອດສ໌.

### 4.3 ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ

ຄວນມີການຮັບຮູ້ມິຕິດ້ານບົດບາດຍິງ-ຊາຍຂອງບັນຫາໂລກເອດສ໌. ແມ່ຍິງມີຄວາມສ່ຽງຕໍ່ການຕິດເຊື້ອສູງກວ່າຜູ້ຊາຍ ແລະ ພົບຢູ່ເປັນປະຈຳວ່າເຂົາເຈົ້າໄດ້ຮັບຜົນກະທົບໃນທາງລົບຈາກໂລກເອດສ໌ ຫຼາຍກວ່າຜູ້ຊາຍເນື່ອງຈາກເຫດຜົນທາງຊີວະ, ສັງຄົມ, ວັດທະນະທຳ ແລະເສດຖະກິດ. ຍິ່ງມີການຈຳແນກບົດບາດຍິງ-ຊາຍໃນສັງຄົມສູງເທົ່າໃດ ສະຖານະພາບຂອງແມ່ຍິງໃນສັງຄົມຍິ່ງຕ່ຳລົງເທົ່ານັ້ນແລະເຂົາເຈົ້າຍິ່ງຈະໄດ້ຮັບຜົນກະທົບໃນທາງລົບຈາກເຊື້ອໂລກເອດສ໌ຫຼາຍຂຶ້ນໄປເທົ່າ

ນັ້ນ. ດ້ວຍເຫດນັ້ນ, ການໃຫ້ອຳນາດແກ່ແມ່ຍິງແລະການມີສາຍພົບພັນດ້ານບົດບາດຍິງ-ຊາຍທີ່ສະເໝີພາບຫຼາຍ ຂຶ້ນກວ່າເກົ່າ ຈິ່ງເປັນເລື່ອງສຳຄັນຍິ່ງຕໍ່ຄວາມສຳເລັດໃນການຕ້ານການແຜ່ລະບາດຂອງ ເຊື້ອໂລກເອດສ໌ ແລະ ການຊ່ວຍໃຫ້ແມ່ຍິງສາມາດຈັດການກັບບັນຫາໂລກເອດສ໌.

## 4.4 ສະພາບແວດລ້ອມດ້ານການເຮັດວຽກທີ່ມີສຸຂະພາບ

ສິ່ງແວດລ້ອມການເຮັດວຽກ ຄວນເປັນສິ່ງແວດລ້ອມທີ່ມີສຸຂະພາບ ແລະ ປອດໄພເຊິ່ງທຸກພາກສ່ວນກ່ຽວຂ້ອງສາມາດປະຕິບັດໄດ້ໃນຕົວຈິງເພື່ອຊ່ວຍກັນຕ້ານການຕິດຕໍ່ຂອງເຊື້ອໂລກເອດສ໌,ໂດຍເຮັດແນວໃດໃຫ້ສອດຄ່ອງຕາມບັນດາບົດບັນຍັດໃນສົນທິສັນຍາຂອງອົງການແຮງງານສາກົນ ວ່າດ້ວຍສຸຂະພາບແລະຄວາມປອດໄພແຮງງານ, ສະບັບປີ 1981 (ເລກທີ 155).

ສິ່ງແວດລ້ອມການເຮັດວຽກທີ່ມີສຸຂະພາບ ຈະຊ່ວຍສິ່ງຜົນເຮັດໃຫ້ຜູ້ອອກແຮງງານມີສຸຂະພາບທາງຮ່າງກາຍແລະທາງມັນສະໝອງທີ່ດີເລີດໃນເວລາເຮັດວຽກ ແລະ ເອື້ອອຳນວຍໃຫ້ແກ່ການດັດປັບວຽກໃຫ້ເໝາະສົມກັບຄວາມສາມາດຂອງຜູ້ອອກແຮງງານຕາມສຸຂະພາບທາງຮ່າງກາຍແລະທາງມັນສະໝອງຂອງເຂົາເຈົ້າ.

## 4.5 ການປຶກສາຄົ້ນຄວ້າທາງສັງຄົມ

ການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນງານກ່ຽວກັບໂລກເອດສ໌ ໃຫ້ປະສົບຜົນສຳເລັດນັ້ນ ຮຽກຮ້ອງໃຫ້ມີການຮ່ວມມືແລະຄວາມໄວ້ໃຈເຊິ່ງກັນແລະກັນລະຫວ່າງຜູ້ໃຊ້ແຮງງານ, ຜູ້ອອກແຮງງານ, ຜູ້ຕາງໜ້າຂອງຜູ້ໃຊ້ແຮງງານແລະຜູ້ອອກແຮງງານ ແລະ ລັດຖະບານ (ຕາມທີ່ເຫັນວ່າເໝາະສົມ), ພ້ອມນັ້ນຍັງຮຽກຮ້ອງໃຫ້ມີການມີສ່ວນຮ່ວມຢ່າງຫ້າວຫັນຈາກຜູ້ອອກແຮງງານທີ່ຕິດເຊື້ອແລະທີ່ໄດ້ຮັບຜົນກະທົບຈາກໂລກເອດສ໌.

## 4.6 ການກວດຫາການຕິດເຊື້ອເພື່ອໃຫ້ອອກຈາກວຽກ ຫຼື ຂະບວນການເຮັດວຽກ

ການກວດຫາການຕິດເຊື້ອໂລກເອດສ໌ ບໍ່ຄວນໃຊ້ເປັນເງື່ອນໄຂກຳນົດຕໍ່ຜູ້ສະມັກວຽກ ຫຼື ຜູ້ທີ່ເຮັດວຽກຢູ່.

## 4.7 ການຮັກສາຄວາມລັບ

ເປັນເລື່ອງທີ່ບໍ່ມີເຫດຜົນໃນການຂໍໃຫ້ຜູ້ສະມັກວຽກ ຫຼື ຜູ້ອອກແຮງງານເປີດເຜີຍຂໍ້ມູນສ່ວນຕົວທີ່ກ່ຽວກັບເຊື້ອໂລກເອດສ໌ ຫຼື ການກຳນົດພັນທະຕໍ່ເພື່ອນຮ່ວມງານຂອງຜູ້ອອກແຮງງານໃຫ້ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ອອກແຮງງານນຳກັນ. ການເຂົ້າເຖິງຂໍ້ມູນສ່ວນຕົວທີ່ກ່ຽວກັບສະຖານະພາບການຕິດເຊື້ອໂລກເອດສ໌ຂອງຜູ້ອອກແຮງງານ ຄວນຢູ່ພາຍໃຕ້ລະບຽບການຮັກສາຄວາມລັບທີ່

ສອດຄ່ອງກັບລະບຽບປະຕິບັດຂອງອົງການ ILO ວ່າດ້ວຍການປົກປ້ອງຂໍ້ມູນສ່ວນຕົວຂອງຜູ້ອອກແຮງງານ, ສະບັບປີ 1977.

### 4.8 ຄວາມຕໍ່ເນື່ອງຂອງສາຍພົວພັນແຮງງານ

ການຕິດເຊື້ອໂລກເອດສ໌ ບໍ່ຄວນເປັນສາເຫດຂອງການຍົກເລີກການຈ້າງງານ ຄືກັນກັບອາການປ່ວຍແບບອື່ນໆ, ຜູ້ທີ່ເຈັບປ່ວຍເນື່ອງຈາກການຕິດເຊື້ອໂລກເອດສ໌ ຄວນສາມາດສືບຕໍ່ເຮັດວຽກຕໍ່ໄປດົນເທົ່າທີ່ສຸຂະພາບຮ່າງກາຍຈະອຳນວຍກັບວຽກທີ່ເໝາະສົມ.

### 4.9 ການປ້ອງກັນ/ການຕ້ານ

ການຕິດເຊື້ອໂລກເອດສ໌ ເປັນເລື່ອງທີ່ສາມາດປ້ອງກັນໄດ້. ວິທີປ້ອງກັນການຕິດເຊື້ອສາມາດບັນລຸໄດ້ດ້ວຍຫຼາກຫຼາຍຍຸດທະສາດທີ່ມີການກຳນົດເປົ້າໝາຍໃຫ້ເໝາະສົມກັບສະພາບເງື່ອນໄຂແລະວັດທະນະທຳຂອງປະເທດ.

ສາມາດດຳເນີນການປ້ອງກັນຂຶ້ນໄປຕື່ມອີກດ້ວຍການປ່ຽນແປງພຶດຕິກຳ, ການໃຫ້ຄວາມຮູ້ກ່ຽວກັບໂລກເອດສ໌,ການປ່ຽນແປງຮູບການປະຕິບັດຕໍ່ຜູ້ຕິດເຊື້ອແລະ ການສ້າງໃຫ້ມີສິ່ງ ແວດລ້ອມທີ່ບໍ່ຈຳແນກຜູ້ຕິດເຊື້ອ.

ບັນດາຄູ່ຮ່ວມງານທາງສັງຄົມມີບົດບາດພິເສດໃນການຊ່ວຍສົ່ງເສີມການປ້ອງກັນໂດຍສະເພາະໃນສ່ວນທີ່ພົວພັນກັບການປ່ຽນແປງທັດສະນະຄະຕິແລະພຶດຕິກຳດ້ວຍການສະໜອງຂໍ້ມູນຂ່າວສານແລະໃຫ້ການສຶກສາ, ພ້ອມນັ້ນເຂົາເຈົ້າຍັງມີບົດບາດພິເສດໃນການແກ້ໄຂບັນດາປັດໄຈທາງດ້ານເສດຖະກິດ-ສັງຄົມ.

### 4.10 ການເບິ່ງແຍງແລະການຊ່ວຍເຫຼືອ

ຄວາມສາມັກຄີ, ການເຍິ່ງແຍງເອົາໃຈໃສ່ແລະການຊ່ວຍເຫຼືອກັນ ຄວນເປັນທິດນຳໃຫ້ແກ່ການຕອບໂຕ້ໂລກເອດສ໌ໃນສະຖານທີ່ເຮັດວຽກ. ຜູ້ອອກແຮງງານທຸກຄົນລວມທັງຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ມີສິດໄດ້ຮັບການບໍລິການປິ່ນປົວສຸຂະພາບໃນລະດັບທີ່ເຂົາເຈົ້າສາມາດຈ່າຍໄດ້. ບໍ່ຄວນໃຫ້ມີການຈຳແນກຕໍ່ເຂົາເຈົ້າແລະຜູ້ທີ່ເພິ່ງພາອາໄສເຂົາເຈົ້າໃນດ້ານການເຂົ້າເຖິງ ຫຼືການເຂົ້າຮັບອຸດໜູນຈາກລະບົບປະກັນສັງຄົມພາກບັງຄັບ ແລະ ລະບົບປະກັນຕົນຕາມສາຍອາຊີບຕ່າງໆ.

## 5. ສິດທິໂດຍທົ່ວໄປແລະຄວາມຮັບຜິດຊອບ

### 5.1 ລັດຖະບານແລະອົງການຈັດຕັ້ງຂອງລັດທີ່ຮັບຜິດຊອບ

ກ. ***ຄວາມສອດຄ່ອງ.*** ລັດຖະບານຄວນຮັບປະກັນໃຫ້ມີຄວາມສອດຄ່ອງພາຍໃນແຜນງານແລະຍຸດທະສາດແຫ່ງຊາດວ່າດ້ວຍໂລກເອດສ໌ ໂດຍຕ້ອງຮັບຮູ້ຄວາມສຳຄັນໃນການລວມເອົາເລື່ອງໂລກເອດສ໌ຢູ່ສະຖານທີ່ເຮັດວຽກເຂົ້າໄວ້ໃນແຜນແຫ່ງຊາດຕົວຢ່າງ: ດ້ວຍການຮັບປະກັນໃຫ້ສາມະຊິກຂອງສະພາເອດສ໌ແຫ່ງຊາດປະກອບດ້ວຍຜູ້ຕາງໜ້າຈາກຜູ້ໃຊ້ແຮງງານ, ຜູ້ອອກແຮງງານ, ຜູ້ຕິດເຊື້ອແລະບັນດາກະຊວງທີ່ຮັບຜິດຊອບບັນຫາແຮງງານແລະບັນຫາສັງຄົມ.

ຂ. ***ການມີສ່ວນຮ່ວມຈາກຫຼາຍຂະແໜງການ.*** ອົງການລັດທີ່ຮັບຜິດຊອບ ຄວນລະດົມການມີສ່ວນຮ່ວມແລະການສະໜັບສະໜູນຈາກພາກສ່ວນຕ່າງໆໃນວົງກວ້າງໃຫ້ເຂົ້າມາມີສ່ວນຮ່ວມໃນການປົກປ້ອງແລະປ້ອງກັນ, ເຊິ່ງໃນນັ້ນລວມເອົາທັງອົງການຈັດຕັ້ງຕ່າງໆຂອງລັດ, ພາກເອກະຊົນ, ອົງການຈັດຕັ້ງຂອງຜູ້ໃຊ້ແຮງງານແລະຂອງຜູ້ອອກແຮງງານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງເພື່ອເຮັດແນວໃດໃຫ້ມີຈຳນວນຄູ່ຮ່ວມງານໃນໂລກແຫ່ງການເຮັດວຽກເຂົ້າມີສ່ວນຮ່ວມໃຫ້ໄດ້ຫຼາຍທີ່ສຸດ.

ຄ. ***ການປະສານງານ.*** ລັດຖະບານ ຄວນອຳນວຍຄວາມສະດວກໃຫ້ແກ່ການປະສານທຸກກິດຈະກຳຊ່ວຍເຫຼືອໃນລະດັບຊາດທີ່ສະໜອງສິ່ງແວດລ້ອມອັນເອື້ອອຳນວຍໃຫ້ແກ່ກິດຈະກຳຊ່ວຍເຫຼືອໃນສະຖານທີ່ເຮັດວຽກ ແລະ ຄວນໃຊ້ປະໂຫຍດຈາກຈຳນວນຄູ່ຮ່ວມທາງສັງຄົມທີ່ມີຢູ່ແລະທຸກພາກສ່ວນກ່ຽວຂ້ອງ. ການປະສານງານນັ້ນຄວນສານຕໍ່ຈາກບັນດາມາດຕະການແລະບໍລິການຊ່ວຍເຫຼືອທີ່ມີຢູ່ໃນລະບົບແລ້ວ.

ງ. ***ການປ້ອງກັນ ແລະ ການສົ່ງເສີມສຸຂະພາບ.*** ອົງການຈັດຕັ້ງຂອງລັດທີ່ຮັບຜິດຊອບ ຄວນລິເລີ່ມແລະເຮັດວຽກຮ່ວມກັນກັບບັນດາຄູ່ຮ່ວມງານທາງສັງຄົມເພື່ອໂຄສະນາປ້ອງກັນແລະປູກຈິດສຳນຶກ ໂດຍສະເພາະຢູ່ຕາມສະຖານທີ່ເຮັດວຽກ.

ຈ. ***ແນວທາງແນະນຳການປິ່ນປົວ.*** ສຳລັບປະເທດທີ່ຜູ້ໃຊ້ແຮງງານມີຄວາມຮັບຜິດຊອບຫຼັກໃນການສະໜອງບໍລິການປິ່ນປົວສຸຂະພາບໂດຍກົງໃຫ້ແກ່ຜູ້ອອກແຮງງານ, ລັດຖະບານຂອງປະເທດ ຄວນສະໜອງແນວທາງເພື່ອຊ່ວຍຜູ້ໃຊ້ແຮງງານໃນການຄຸ້ມຄອງການເບິ່ງແຍງແລະປິ່ນປົວຜູ້ທີ່ຕິດເຊື້ອໂລກເອດສ໌. ແນວທາງແນະນະດັ່ງກ່າວ ຄວນພິຈາລະນາເບິ່ງບັນດາບໍລິການປິ່ນປົວສຸຂະພາບທີ່ມີຢູ່.

ສ. ***ການປົກປ້ອງສັງຄົມ.*** ລັດຖະບານ ຄວນຮັບປະກັນວ່າ: ບັນດາປະເພດອຸດໜູນພາຍໃຕ້ກົດໝາຍແລະລະບຽບການແຫ່ງຊາດ ກໍ່ນຳໃຊ້ກັບຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌

ໃນລັກສະນະທີ່ສະເໝີພາບກັບຜູ້ອອກແຮງງານທີ່ເຈັບເປັນຂັ້ນຮ້າຍແຮງຍ້ອນພະຍາດອື່ນ. ໃນການອອກແບບແລະຈັດຕັ້ງປະຕິບັດລະບົບປະກັນສັງຄົມ, ລັດຖະບານ ຄວນພິຈາລະນາລັກສະນະການທຳລາຍໄປໜ້າແລະທຳມະຊາດທີ່ບໍ່ແນ່ນອນຂອງພະຍາດດັ່ງກ່າວນີ້ ແລ້ວຈຶ່ງອອກແບບລະບົບປະກັນສັງຄົມຕາມທີ່ເຫັນວ່າເໝາະສົມ, ຕົວຢ່າງ: ດ້ວຍການສະໜອງປະເພດອຸດໜູນຕ່າງໆໃຫ້ເມື່ອຄົນເຈັບຕ້ອງການ ແລະ ດ້ວຍການຕອບສະໜອງຕໍ່ການອ້າງສິດຂໍປິ່ນປົວໃນລັກສະນະວ່ອງໄວ.

ຊ. ***ການຄົ້ນຄວ້າ.*** ເພື່ອໃຫ້ບັນລຸຄວາມສອດຄ່ອງພາຍໃນບັນດາແຜນແຫ່ງຊາດວ່າດ້ວຍເອດສ໌, ເພື່ອລະດົມບັນດາຄູ່ຮ່ວມງານທາງສັງຄົມ, ເພື່ອປະເມີນມູນຄ່າຄວາມເສຍຫາຍທີ່ພະຍາດຕິດແປດດັ່ງກ່າວສ້າງໃຫ້ສະຖານທີ່ເຮັດວຽກ, ສຳລັບລະບົບປະກັນສັງຄົມແລະເສດຖະກິດ, ແລະ ເພື່ອອຳນວຍຄວາມສະດວກໃຫ້ແກ່ການວາງແຜນບັນເທົາຜົນກະທົບທາງດ້ານເສດຖະກິດ-ສັງຄົມ, ອົງການລັດທີ່ຮັບຜິດຊອບຄວນຊຸກຍູ້, ສະໜັບສະໜູນ, ດຳເນີນການສຶກສາ ແລະ ເຜີຍແຜ່ຜົນການສຶກສາການຄາດຄະເນປະຊາກອນ, ການສຶກສາອັດຕາແພ່ລະບາດ ແລະ ບັນດາກໍລະນີສຶກສາທີ່ເປັນແບບວິທີປະຕິບັດທີ່ດີທີ່ສຸດ. ລັດຖະບານຄວນພະຍາຍາມສູ້ຊົນສະໜອງຂອບທາງດ້ານສະຖາບັນແລະລະບຽບການເພື່ອໃຫ້ສາມາດບັນລຸໄດ້ຈຸດປະສົງດັ່ງກ່າວນີ້. ການຄົ້ນຄວ້າ ຄວນລວມເອົາການວິເຄາະທີ່ມີລັກສະນະລະອຽດອ່ອນຕໍ່ບັນຫາບົດບາດຍິງ-ຊາຍໂດຍນຳໃຊ້ປະໂຫຍດຈາກຂໍ້ມູນການຄົ້ນຄວ້າຂອງຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າຕະຫຼອດເຖິງອົງການຈັດຕັ້ງຂອງຜູ້ອອກແຮງງານ. ການເກັບກຳຂໍ້ມູນ ຄວນມີລັກສະນະສະເພາະຂະແໜງການແລະຈັດແບ່ງຕາມເພດ, ເຊື້ອຊາດ, ວິຖີທາງເພດ, ອາຍຸ, ສະຖານະພາບຂອງການຈ້າງງານແລະອາຊີບ, ແລະ ຄວນເກັບກຳຂໍ້ມູນໃນລັກສະນະທີ່ມີຄວາມລະອຽດອ່ອນທາງດ້ານວັດທະນະທຳ (ພາຍໃນຂອບເຂດທີ່ເຮັດໄດ້). ຄວນໃຫ້ມີກົນໄກການປະເມີນຜົນກະທົບແບບຍາວນານໃນສ່ວນທີ່ເຫັນວ່າເໝາະສົມ.

ຍ. ***ຊັບພະຍາກອນທາງດ້ານການເງິນ.*** ຕາມທີ່ເຫັນວ່າເໝາະສົມ, ລັດຖະບານໂດຍການຂໍຄຳປຶກສາກັບບັນດາຄູ່ຮ່ວມງານທາງສັງຄົມແລະພາກສ່ວນກ່ຽວຂ້ອງອື່ນໆ ຄວນປະເມີນຜົນກະທົບທາງການເງິນທີ່ເກີດຈາກການແພ່ລະບາດຂອງໂລກເອດສ໌ ແລະ ຊອກຫາວິທີລະດົມແຫຼ່ງທຶນທັງພາຍໃນແລະຕ່າງປະເທດເຂົ້າໃນແຜນຍຸດທະສາດວ່າດ້ວຍໂລກເອດສ໌ ໃນນັ້ນອາດຈະລວມເອົາການລະດົມທຶນເຂົ້າໃນລະບົບປະກັນສັງຄົມນຳຖ້າເຫັນວ່າສອດຄ່ອງ.

ດ. ***ນິຕິບັນຍັດ.*** ເພື່ອລົບລ້າງການຈຳແນກຢູ່ສະຖານທີ່ເຮັດວຽກແລະຮັບປະກັນໃຫ້ມີການປ້ອງກັນຢູ່ສະຖານທີ່ເຮັດວຽກແລະການປົກປ້ອງສັງຄົມ, ລັດຖະບານໂດຍການຂໍຄຳປຶກສານຳບັນດາຄູ່ຮ່ວມງານທາງສັງຄົມແລະຊ່ຽວຊານໂລກເອດສ໌ ຄວນສະໜອງຂອບລະບຽບ

ການທີ່ສອດຄ່ອງ, ພ້ອມທັງດັດແກ້ກົດໝາຍແຮງງານແລະນິຕິບັນຍັດອື່ນໆຕາມທີ່ເຫັນວ່າຈຳເປັນ.

ຓ. ***ເງື່ອນໄຂສຳລັບການຊ່ວຍເຫຼືອຂອງລັດ.*** ເມື່ອລັດຖະບານສະໜອງທຶນເລີ່ມຕົ້ນ ຫຼື ແຮງຈູງໃຈໃຫ້ແກ່ບັນດາວິສາຫະກິດພາຍໃນແລະຕ່າງປະເທດ, ລັດຄວນຮຽກຮ້ອງໃຫ້ຜູ້ຮັບປະຕິບັດຕາມກົດໝາຍຂອງປະເທດ ແລະ ຊຸກຍູ້ຜູ້ຮັບໃຫ້ປະຕິບັດຕາມລະບຽບປະຕິບັດສະບັບນີ້, ຕະຫຼອດເຖິງບັນດານະໂຍບາຍແລະລະບຽບປະຕິບັດທີ່ໃຫ້ຜົນສັກສິດຕໍ່ບັນດາບົດບັນຍັດໃນລະບຽບປະຕິບັດສະບັບນີ້.

ຖ. ***ການບັງຄັບປະຕິບັດ.*** ອົງການລັດທີ່ຮັບຜິດຊອບ ຄວນສະໜອງຂໍ້ມູນແລະຄຳແນະນຳດ້ານວິຊາການໃຫ້ແກ່ຜູ້ໃຊ້ແຮງງານແລະຜູ້ອອກແຮງງານໃຫ້ຮູ້ກ່ຽວກັບວິທີທີ່ມີປະສິດທິພາບສູງສຸດໃນການປະຕິບັດຕາມນິຕິບັນຍັດແລະລະບຽບການທີ່ນຳໃຊ້ກັບລະບຽບປະຕິບັດວ່າດ້ວຍໂລກເອດສ໌ໃນໂລກແຫ່ງການເຮັດວຽກ. ເຂົາເຈົ້າ ຄວນເສີມສ້າງຄວາມເຂັ້ມແຂງໃຫ້ແກ່ໂຄງຮ່າງແລະຂັ້ນຕອນການຈັດຕັ້ງປະຕິບັດເຊັ່ນ: ໜ່ວຍງານ/ກົມກວດກາແຮງງານ/ໂຮງງານ, ສານແລະຄະນະສານແຮງງານ.

ທ. ***ຜູ້ອອກແຮງງານໃນກິດຈະກຳນອກລະບົບ (ໃນຂະແໜງເສດຖະກິດນອກລະບົບ).*** ລັດຖະບານ ຄວນຂະຫຍາຍແລະຮັບຮອງບັນດາແຜນງານປ້ອງກັນໂລກເອດສ໌ ສຳລັບຜູ້ອອກແຮງງານໃນຂະແໜງເສດຖະກິດນອກລະບົບເຊິ່ງໃນນັ້ນຄວນລວມເອົາທັງການສ້າງລາຍໄດ້ແລະການປົກປ້ອງສັງຄົມ. ລັດຖະບານ ຄວນອອກແບບແລະພັດທະນາວິທີການດຳເນີນງານແບບໃໝ່ທີ່ມີການເຂົ້າຮ່ວມຂອງຊຸມຊົນທ້ອງຖິ່ນຕາມທີ່ເຫັນວ່າເໝາະສົມ.

ນ.***ການບັນເທົາ.*** ລັດຖະບານ ຄວນສົ່ງເສີມການເບິ່ງແຍງແລະການຊ່ວຍເຫຼືອຜ່ານທາງບັນດາລະບົບປິ່ນປົວສຸຂະພາບຂອງພາກລັດ, ລະບົບປະກັນສັງຄົມ, ແລະ/ຫຼື ຜ່ານທາງບັນດາແຜນງານລິເລີ່ມອື່ນໆທີ່ສອດຄ່ອງຂອງລັດ. ລັດຖະບານໂດຍຮ່ວມກັບອົງການຈັດຕັ້ງຂອງຜູ້ໃຊ້ແຮງງານແລະຂອງຜູ້ອອກແຮງງານ ຄວນສູ້ຊົນເພື່ອຮັບປະກັນໃຫ້ຜູ້ອອກແຮງງານທີ່ຕິດເຊື້ອສາມາດເຂົ້າເຖິງການປິ່ນປົວ ແລະ ວຽກເຮັດງານທຳຕາມຄວາມເໝາະສົມ.

ບ. ***ເດັກນ້ອຍແລະໄວໜຸ່ມ.*** ໃນແຜນງານລົບລ້າງການນຳໃຊ້ແຮງງານເດັກ, ລັດຖະບານຄວນຮັບປະກັນວ່າໄດ້ໃຫ້ຄວາມເອົາໃຈໃສ່ກັບຜົນກະທົບຂອງພະຍາດຕິດແປດດັ່ງກ່າວທີ່ມີຕໍ່ເດັກນ້ອຍແລະໄວໜຸ່ມຜູ້ທີ່ພໍ່ແມ່ເຈັບປ່ວຍ ຫຼື ເສຍຊີວິດຍ້ອນໂລກເອດສ໌.

ປ. ***ການຮ່ວມມືໃນລະດັບພາກພື້ນແລະສາກົນ.*** ລັດຖະບານ ຄວນສົ່ງເສີມແລະສະໜັບສະໜູນການຮ່ວມມືໃນລະດັບພາກພື້ນແລະສາກົນຜ່ານທາງບັນດາອົງການພົວພັນລະຫວ່າງລັດແລະທຸກພາກສ່ວນກ່ຽວຂ້ອງ ເພື່ອໃຫ້ມີທິດສຸມເອກະພາບໃສ່ຄວາມເອົາໃຈໃສ່ຂອງສາ

ກົນຕໍ່ບັນຫາໂລກເອດສ໌ ແລະ ບັນດາຄວາມຕ້ອງການຕ່າງໆທີ່ກ່ຽວຂ້ອງໃນໂລກແຫ່ງການເຮັດວຽກ.

ຜ. ***ການຊ່ວຍເຫຼືອຈາກສາກົນ.*** ລັດຖະບານ ຄວນຂໍການຊ່ວຍເຫຼືອຈາກສາກົນເຂົ້າໃນແຜນງານແຫ່ງຊາດຕາມທີ່ເຫັນວ່າເໝາະສົມ. ລັດ ຄວນຊຸກຍູ້ບັນດາແຜນງານລິເລີ່ມທີ່ມີເປົ້າໝາຍແນໃສ່ສະໜັບສະໜູນການໂຄສະນາທົ່ວສາກົນເພື່ອຫຼຸດຜ່ອນລາຄາ, ແລະ ເພີ່ມການເຂົ້າເຖິງຢາຕ້ານໄວຣັດສ໌ HIV (ຫຼື antiretroviral drugs).

ຝ. ***ຄວາມສ່ຽງ.*** ລັດຖະບານ ຄວນດຳເນີນມາດຕະການເພື່ອລະບຸກຸ່ມຜູ້ອອກແຮງງານທີ່ສ່ຽງຕໍ່ການຕິດເຊື້ອ, ແລະ ຮັບຮອງເອົາບັນດາຍຸດທະສາດທີ່ຈະໃຊ້ເອົາຊະນະບັນດາປັດໃຈທີ່ເຮັດໃຫ້ຜູ້ອອກແຮງງານເຫຼົ່ານັ້ນສ່ຽງຕໍ່ການຕິດເຊື້ອ. ລັດ ຄວນພະຍາຍາມສູ້ຊົນເພື່ອຮັບປະກັນວ່າ: ມີແຜນງານປ້ອງກັນທີ່ເໝາະສົມໄວ້ໃນລະບົບສຳລັບຊ່ວຍຜູ້ອອກແຮງງານເຫຼົ່ານັ້ນ.

## 5.2 ຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ

ກ. ***ນະໂຍບາຍຂອງສະຖານທີ່ເຮັດວຽກ.*** ຜູ້ໃຊ້ແຮງງານ ຄວນຂໍຄຳປຶກສາກັບຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າເພື່ອສ້າງແລະຈັດຕັ້ງປະຕິບັດນະໂຍບາຍທີ່ເໝາະສົມສຳລັບສະຖານທີ່ເຮັດວຽກຂອງເຂົາເຈົ້າ, ໂດຍເປັນນະໂຍບາຍທີ່ຖືກອອກແບບມາເພື່ອປ້ອງກັນການແຜ່ລະບາດຂອງການຕິດເຊື້ອແລະປົກປ້ອງຜູ້ອອກແຮງງານໝົດທຸກຄົນຈາກການຖືກຈຳແນກທີ່ກ່ຽວຂ້ອງກັບໂລກເອດສ໌. ລາຍລະອຽດໃຫ້ອ່ານເບິ່ງໃນບັນຊີກວດສອບສຳລັບການສ້າງແລະການຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍໂລກເອດສ໌ຢູ່ສະຖານທີ່ເຮັດວຽກ (ເອກະສານຊ້ອນທ້າຍ III).

ຂ. ***ຂໍ້ຕົກລົງລະດັບຊາດ, ລະດັບຂະແໜງການ, ລະດັບສະຖານທີ່ເຮັດວຽກ/ວິສາຫະກິດ.*** ຜູ້ໃຊ້ແຮງງານຄວນປະຕິບັດຕາມກົດໝາຍແລະແບບວິທີປະຕິບັດຂອງປະເທດໃນເວລາເຈລະຈາຂໍ້ກຳນົດແລະເງື່ອນໄຂຂອງການຈ້າງງານໃນດ້ານທີ່ກ່ຽວຂ້ອງກັບບັນຫາໂລກເອດສ໌ຮ່ວມກັບຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າ, ພ້ອມນັ້ນຜູ້ໃຊ້ແຮງງານຄວນພະຍາຍາມສູ້ຊົນໃຫ້ມີການລວມເອົາບັນດາບົດບັນຍັດວ່າດ້ວຍການປົກປ້ອງແລະການປ້ອງກັນໂລກເອດສ໌ເຂົ້າໃນບັນດາຂໍ້ຕົກລົງລະດັບຊາດ, ລະດັບຂະແໜງການ, ແລະລະດັບສະຖານທີ່ເຮັດວຽກ/ວິສາຫະກິດ.

ຄ. ***ການສຶກສາແລະການຝຶກອົບຮົມ.*** ຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າໂດຍການຂໍຄຳປຶກສານຳຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າ ຄວນລິເລີ່ມແລະສະໜັບສະໜູນບັນດາແຜນງານຕ່າງໆພາຍໃນສະຖານທີ່ເຮັດວຽກຂອງຕົນເພື່ອແຈ້ງຂໍ້ມູນຂ່າວສານ, ສຶກສາແລະຝຶກອົບຮົມຜູ້ອອກແຮງງານກ່ຽວກັບການປ້ອງກັນໂລກເອດສ໌, ການເບິ່ງ

ແຍງແລະການຊ່ວຍເຫຼືອ, ແລະນະໂຍບາຍວ່າດ້ວຍໂລກເອດສ໌ຂອງວິສາຫະກິດ, ໃນນັ້ນແມ່ນລວມເອົາທັງບັນດາມາດຕະການເພື່ອໃຊ້ຫຼຸດຜ່ອນການຈຳແນກຕໍ່ຜູ້ຕິດເຊື້ອ ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກໂລກເອດສ໌, ແລະ ປະເພດອຸດໜູນສະເພາະສຳລັບພະນັກງານຕະຫຼອດເຖິງສິດຕໍ່ການໄດ້ຮັບການຊ່ວຍເຫຼືອຕ່າງໆ.

ງ.***ຜົນກະທົບທາງເສດຖະກິດ.*** ຜູ້ໃຊ້ແຮງງານ, ຜູ້ອອກແຮງງານແລະອົງການຈັດຕັ້ງຂອງທັງສອງຝ່າຍ ຄວນເຮັດວຽກຮ່ວມກັນເພື່ອສ້າງຍຸດທະສາດທີ່ເໝາະສົມສຳລັບໃຊ້ເຂົ້າໃນການປະເມີນແລະຕອບໂຕ້ຕໍ່ຜູ້ກະທົບທາງເສດຖະກິດຈາກບັນຫາໂລກເອດສ໌ທີ່ມີຕໍ່ສະຖານທີ່ເຮັດວຽກແລະຂະແໜງການຂອງເຂົາເຈົ້າ.

ຈ. ***ນະໂຍບາຍດ້ານບຸກຄະລາກອນ.*** ຜູ້ໃຊ້ແຮງງານບໍ່ຄວນເຂົ້າຮ່ວມ ຫຼື ອະນຸມັດນະໂຍບາຍ ຫຼື ການປະຕິບັດດ້ານບຸກຄະລາກອນທີ່ຈຳແນກຜູ້ອອກແຮງງານທີ່ຕິດເຊື້ອ ຫຼື ໄດ້ຮັບຜົນກະທົບຈາກໂລກເອດສ໌. ເວົ້າສະເພາະແລ້ວ, ຜູ້ໃຊ້ແຮງງານ:

- ບໍ່ຄວນຈະກຳນົດເງື່ອນໄຂໃຫ້ມີການກວດຫາ ຫຼື ກວດເລືອດຫາເຊື້ອໂລກເອດສ໌ເວັ້ນເສຍແຕ່ກໍລະນີທີ່ໄດ້ລະບຸໄວ້ໃນຂໍ້ 8 ຂອງລະບຽບປະຕິບັດສະບັບນີ້;
- ຄວນຮັບປະກັນວ່າ: ວຽກທີ່ຈະເຮັດນັ້ນບໍ່ມີການຈຳແນກ ຫຼື ການສ້າງຄວາມອັບອາຍບົນພື້ນຖານສະຖານະຂອງການຕິດເຊື້ອໂລກເອດສ໌ຕົວຈິງ ຫຼື ສະຖານະທີ່ເຂົ້າໃຈວ່າຕິດເຊື້ອ;
- ຄວນຊຸກຍູ້ຜູ້ທີ່ຕິດເຊື້ອແລະຜູ້ທີ່ເຈັບປ່ວຍຈາກໂລກເອດສ໌ໃຫ້ເຮັດວຽກໄປເທົ່າທີ່ສຸຂະພາບຮ່າງກາຍຂອງເຂົາເຈົ້າເອື້ອອຳນວຍສຳລັບວຽກທີ່ເໝາະສົມ; ແລະ
- ຄວນກຳນົດວ່າ: ໃນກໍລະນີທີ່ຜູ້ອອກແຮງງານທີ່ມີອາການເຈັບປ່ວຍຈາກໂລກເອດສ໌ໜັກຈົນເຮັດໃຫ້ບໍ່ສາມາດສືບຕໍ່ເຮັດວຽກໄດ້ອີກຕໍ່ໄປ ແລະ ໃນກໍລະນີທີ່ການດັດປັບເງື່ອນໄຂການເຮັດວຽກທີ່ເປັນທາງເລືອກແບບຕ່າງໆເຊິ່ງລວມທັງການໃຫ້ລາປ່ວຍການທີ່ຫຼາຍຈົນເກີນໄປ, ອາດຈະຍຸຕິສາຍພົວພັນແຮງງານໂດຍອີງຕາມກົດໝາຍຫ້າມບໍ່ໃຫ້ມີການຈຳແນກແລະກົດໝາຍແຮງງານ, ພ້ອມທັງດຳເນີນການຕາມຂັ້ນຕອນປະຕິບັດທົ່ວໄປແລະໃຫ້ເງິນອຸດໜູນເຕັມຈຳນວນ.

ສ. ***ຂັ້ນຕ້ອງການຮ້ອງທຸກແລະການປະຕິບັດວິໄນ.*** ຜູ້ໃຊ້ແຮງງານຄວນມີຂັ້ນຕອນທີ່ຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າສາມາດນຳໃຊ້ເພື່ອຮ້ອງທຸກບັນຫາທີ່ກ່ຽວຂ້ອງກັບວຽກ. ບັນດາຂັ້ນຕອນເຫຼົ່ານັ້ນ ຄວນລະບຸປະເພດສະພາບເງື່ອນໄຂທີ່ສາມາດດຳເນີນການປະຕິບັດວິໄນຕໍ່ຜູ້ອອກແຮງງານທີ່ເຜີຍແຜ່ຂໍ້ມູນກ່ຽວກັບສະຖານະການຕິດເຊື້ອໂລກເອດສ໌ຕົວຈິງ ຫຼື ທີ່ເຂົ້າໃຈວ່າຕິດເຊື້ອ ຫຼື ຕໍ່ຜູ້ທີ່ລະເມີດນະໂຍບາຍວ່າດ້ວຍໂລກເອດສ໌ຂອງສະຖານທີ່ເຮັດວຽກ.

ຊ. ***ການຮັກສາຄວາມລັບ.*** ຂໍ້ມູນຂ່າວສານກ່ຽວກັບໂລກເອດສ໌ຂອງຜູ້ອອກແຮງງານ ຄວນຖືກຮັກສາໄວ້ເປັນຄວາມລັບຢ່າງເຄັ່ງຄັດແລະຄວນຮັກສາເອົາໄວ້ສະເພາະແຕ່ໃນແຟ້ມຂໍ້ມູນການແພດເທົ່ານັ້ນ ໂດຍການເຂົ້າເຖິງຂໍ້ມູນຂ່າວສານດັ່ງກ່າວຕ້ອງປະຕິບັດຕາມບົດສະເໜີແນະວ່າດ້ວຍອົງການບໍລິການສຸຂະພາບແຮງງານຂອງລັດ, ສະບັບປີ 1985 (ເລກທີ 171), ກົດໝາຍແລະແບບວິທີປະຕິບັດຂອງປະເທດ. ການເຂົ້າເຖິງຂໍ້ມູນຂ່າວສານໃນລັກສະນະດັ່ງກ່າວ ຄວນຖືກຈໍາກັດຢ່າງເຄັ່ງຄັດສະເພາະແຕ່ບຸກຄະລາກອນທາງການແພດ, ອະນຸຍາດໃຫ້ເປີດເຜີຍຂໍ້ມູນໃນລັກສະນະດັ່ງກ່າວນັ້ນໄດ້ກໍ່ຕໍ່ເມື່ອກົດໝາຍຮຽກຮ້ອງ ຫຼື ມີຄວາມຍິນຍອມຈາກບຸກຄົນກ່ຽວຂ້ອງ.

ຍ. ***ການຫຼຸດຜ່ອນແລະການຄຸ້ມຄອງຄວາມສ່ຽງ.*** ຜູ້ໃຊ້ແຮງງານ ຄວນຮັບປະກັນໃຫ້ມີແວດລ້ອມການເຮັດວຽກທີ່ປອດໄພແລະມີສຸຂະພາບ ເຊິ່ງລວມທັງການນໍາໃຊ້ມາດຕະການປ້ອງກັນທີ່ເປັນເອກະພາບ (Universal Precautions) ຕະຫຼອດເຖິງບັນດາມາດຕະການອື່ນໆເຊັ່ນ: ການສະໜອງແລະການບົວລະບັດຮັກສາອຸປະກອນປ້ອງກັນແລະເຄື່ອງປະຖົມພະຍາບານຂັ້ນຕົ້ນ. ເພື່ອສະໜັບສະໜູນການປ່ຽນແປງພຶດຕິກໍາຂອງບຸກຄົນ, ຜູ້ໃຊ້ແຮງງານ ຄວນສະໜອງບໍລິການຕ່າງໆຕາມຄວາມເໝາະຄວນເຊັ່ນ: ຖົງຢາງອະນາໄມທັງສໍາລັບແມ່ຍິງແລະຜູ້ຊາຍ, ບໍລິການໃຫ້ຄໍາປຶກສາ, ການເບິ່ງແຍງ, ການຊ່ວຍເຫຼືອ ຕະຫຼອດເຖິງບໍລິການສົ່ງຕໍ່. ໃນກໍລະນີຂະໜາດແລະມູນຄ່າສິ້ນເປືອງຂອງບໍລິການເຫຼົ່ານັ້ນຫາກເຮັດໃຫ້ເກີດຄວາມຫຍຸ້ງຍາກໃນການສະໜອງ, ຜູ້ໃຊ້ແຮງງານ ແລະ/ຫຼື ອົງການຈັດຕັ້ງຂອງເຂົາເຈົ້າ ຄວນສະແຫວງຫາຄວາມຊ່ວຍເຫຼືອຈາກລັດແລະສະຖາບັນອື່ນໆທີ່ກ່ຽວຂ້ອງ.

ດ. ***ສະຖານທີ່ເຮັດວຽກທີ່ຜູ້ອອກແຮງງານຕ້ອງຈັບບາຍເລືອດແລະທາດແຫຼວຈາກຮ່າງກາຍມະນຸດຢ່າງເປັນປົກກະຕິ.*** ໃນສະຖານທີ່ເຮັດວຽກດີດັ່ງກ່າວ, ຜູ້ໃຊ້ແຮງງານ ຈໍາເປັນຕ້ອງດໍາເນີນມາດຕະການເພີ່ມເຕີມເພື່ອໃຫ້ໝັ້ນໃຈວ່າຜູ້ອອກແຮງງານທຸກຄົນໃນສະຖານທີ່ເຮັດວຽກເຫຼົ່ານັ້ນໄດ້ຮັບການຝຶກອົບຮົມກ່ຽວກັບມາດຕະການປ້ອງກັນທີ່ເປັນເອກະພາບ (Universal Precautions) ເຊິ່ງຈະເຮັດໃຫ້ເຂົາເຈົ້າມີຄວາມຮູ້ກ່ຽວກັບຂັ້ນ ຕອນທີ່ເຂົາເຈົ້າຕ້ອງປະຕິບັດຕາມໃນກໍລະນີເກີດອຸປະຕິເຫດແຮງງານ, ແລະ ເພື່ອຮັບປະກັນວ່າ: ເວລາໃດກໍ່ມີການປະຕິບັດຕາມມາດຕະການປ້ອງທີ່ເປັນເອກະພາບ. ຄວນສະໜອງສິ່ງອໍານວຍຄວາມສະດວກຕ່າງໆໃຫ້ສາມາມາດນໍາໃຊ້ບັນດາມາດຕະການເຫຼົ່ານີ້ໄດ້.

ຕ. ***ການປັບປ່ຽນແບບສົມເຫດສົມຜົນ/ການເອື້ອອໍານວຍຕາມສົມຄວນ (ຫຼື reasonable accommodation).*** ຜູ້ໃຊ້ແຮງງານໂດຍການຂໍຄໍາປຶກສາກັບຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າ ຄວນດໍາເນີນມາດຕະການເພື່ອອໍານວຍຄວາມສະດວກໃຫ້ແກ່ການເຮັດວຽກຂອງຜູ້ອອກແຮງງານທີ່ເຈັບປ່ວຍຈາກໂລກເອດສ໌. ການອໍານວຍຄວາມສະດວກທີ່ກ່າວ

ເຖິງນີ້ ອາດຈະລວມເອົາການຈັດເວລາເຮັດວຽກໃຫ້ໃໝ່, ການຈັດຫາອຸປະກອນແບບສະເພາະໃຫ້, ເປີດໂອກາດໃຫ້ເຂົາເຈົ້າໄປພັກຜ່ອນໃນເວລາພັກ, ສາມາດຍຸດວຽກເພື່ອໄປພົບແພດໝໍ, ອະນຸຍາດການລາປ່ວຍການແບບຍືດຍຸ່ນ, ອະນຸຍາດໃຫ້ເຮັດວຽກແບບບໍ່ເຕັມໂມງ ແລະຈັດໃຫ້ມີການຮັບກັບມາເຮັດວຽກຄືນອີກໄດ້ອີກ.

ຖ. *ການໂຄສະນາສົ່ງເສີມ.* ດ້ວຍຈິດໃຈຂອງການເປັນພົນລະເມືອງທີ່ດີໃນສັງຄົມຂອງບໍລິສັດ, ຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນຊຸກຍູ້ຜູ້ໃຊ້ແຮງງານນຳກັນໃຫ້ປະກອບສ່ວນເຂົ້າໃນການປ້ອງກັນແລະການຄຸ້ມຄອງໂລກເອດສ໌ຢູ່ສະຖານທີ່ເຮັດວຽກເທົ່າທີ່ສາມາດເຮັດໄດ້, ພ້ອມທັງຊຸກຍູ້ລັດຖະບານໃຫ້ດຳເນີນທຸກມາດຕະການທີ່ຈຳເປັນເພື່ອຍຸຕິການແພ່ລະບາດຂອງໂລກເອດສ໌ ແລະ ບັນເທົາຜົນກະທົບຂອງພະຍາດຕິດແປດດັ່ງກ່າວ. ການຮ່ວມມືໃນແບບອື່ນໆ ກໍ່ອາດຈະຊ່ວຍສະໜັບສະໜູນຂະບວນການດັ່ງກ່າວນີ້ໄດ້ເຊັ່ນ: ການສ້າງຕັ້ງສະພາຮ່ວມມືທຸລະກິດ-ກຳມະບານວ່າດ້ວຍໂລກເອດສ໌.

ທ. *ການສະໜັບສະໜູນໃຫ້ມີບໍລິການໃຫ້ຄຳປຶກສາແລະການກວດເລືອດຫາເຊື້ອໂລກເອດສ໌ແບບສະມັກໃຈແລະເປັນຄວາມລັບ.* ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ບັນດາຜູ້ຕາງໜ້າເຂົາເຈົ້າ ຄວນສະໜັບສະໜູນໃຫ້ມີແລະຊຸກຍູ້ໃຫ້ຜູ້ອອກແຮງງານເຂົ້ານຳໃຊ້ບໍລິການໃຫ້ຄຳປຶກສາແລະກວດເລືອດຫາເຊື້ອໂລກເອດສ໌ ແບບສະມັກໃຈແລະເປັນຄວາມລັບເຊິ່ງດຳເນີນການໂດຍໜ່ວຍບໍລິການສາທາລະນະສຸກທີ່ມີຄຸນນະພາບ.

ນ. *ຜູ້ອອກແຮງງານໃນກິດຈະກຳນອກລະບົບ (ໃນຂະແໜງເສດຖະກິດນອກລະບົບ).* ຜູ້ໃຊ້ແຮງງານຂອງຜູ້ອອກແຮງງານໃນກິດຈະກຳນອກລະບົບ ຄວນສຶກສາແລະສ້າງແຜນງານປ້ອງກັນແລະເບິ່ງແຍງສຳລັບຜູ້ອອກແຮງງານເຫຼົ່ານັ້ນຕາມຄວາມເໝາະສົມ.

ບ. *ການຮ່ວມມືກັບສາກົນ.* ຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນປະກອບສ່ວນເຂົ້າໃນການຮ່ວມມືກັບສາກົນຕາມຄວາມເໝາະສົມເພື່ອຕ້ານໂລກເອດສ໌.

## 5.3 ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ

ກ. *ນະໂຍບາຍຂອງສະຖານທີ່ເຮັດວຽກ.* ຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າຄວນຂໍຄຳປຶກສາກັບຜູ້ໃຊ້ແຮງງານຂອງຕົນກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍທີ່ເໝາະສົມສຳລັບສະຖານທີ່ເຮັດວຽກຂອງເຂົາເຈົ້າ, ໂດຍເປັນນະໂຍບາຍທີ່ອອກແບບມາເພື່ອປ້ອງກັນການແພ່ລະບາດຂອງການຕິດເຊື້ອແລະປົກປ້ອງຜູ້ອອກແຮງງານໝົດທຸກຄົນຈາກການຖືກຈຳແນກທີ່ກ່ຽວຂ້ອງກັບໂລກເອດສ໌. ລາຍລະອຽດໃຫ້ອ່ານເບິ່ງໃນບັນຊີກວດສອບສຳລັບການສ້າງແລະການຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍໂລກເອດສ໌ຢູ່ສະຖານທີ່ເຮັດວຽກ (ເອກະສານຊ້ອນທ້າຍ III).

ຂ. ***ຂໍ້ຕົກລົງລະດັບຊາດ, ລະດັບຂະແໜງການ, ລະດັບສະຖານທີ່ເຮັດວຽກ/ວິສາຫະກິດ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນປະຕິບັດຕາມກົດໝາຍແລະແບບວິທີປະຕິບັດຂອງປະເທດໃນເວລາເຈລະຈາຂໍ້ກຳນົດແລະເງື່ອນໄຂຂອງການຈ້າງງານໃນດ້ານທີ່ກ່ຽວຂ້ອງກັບບັນຫາໂລກເອດສ໌, ພ້ອມນັ້ນຜູ້ອອກແຮງງານກໍ່ຄວນພະຍາຍາມສູ້ຊົນໃຫ້ມີການລວມເອົາບັນດາບົດບັນຍັດວ່າດ້ວຍການປົກປ້ອງແລະການປ້ອງກັນໂລກເອດສ໌ເຂົ້າໃນບັນດາຂໍ້ຕົກລົງລະດັບຊາດ, ລະດັບຂະແໜງການ, ແລະລະດັບສະຖານທີ່ເຮັດວຽກ/ວິສາຫະກິດ.

ຄ. ***ການໃຫ້ຂໍ້ມູນຂ່າວສານແລະການສຶກສາ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນນຳໃຊ້ໂຄງສ້າງທີ່ມີຢູ່ຂອງກຳມະບານແລະບັນດາໂຄງສ້າງອື່ນໆ ແລະ ອຳນວຍຄວາມສະດວກໃຫ້ແກ່ການສະໜອງຂໍ້ມູນຂ່າວສານກ່ຽວກັບໂລກເອດສ໌ຢູ່ສະຖານທີ່ເຮັດວຽກ, ແລະພັດທະນາສື່ແລະບັນດາກິດຈະກຳສຶກສາອົບຮົມທີ່ເໝາະສົມສຳລັບຜູ້ອອກແຮງງານແລະຄອບຄົວຂອງເຂົາເຈົ້າ ໃນນັ້ນແມ່ນລວມເອົາທັງປັບປຸງຂໍ້ມູນຂ່າວສານກ່ຽວກັບສິດທິແລະຜົນປະໂຫຍດຂອງຜູ້ອອກແຮງງານຢ່າງເປັນປະຈຳປົກກະຕິ.

ງ. ***ຜົນກະທົບທາງເສດຖະກິດ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າຄວນເຮັດວຽກຮ່ວມກັບຜູ້ໃຊ້ແຮງງານເພື່ອສ້າງຍຸດທະສາດທີ່ເໝາະສົມສຳລັບໃຊ້ເຂົ້າໃນການປະເມີນແລະຕອບໂຕ້ຕໍ່ຜົນກະທົບທາງເສດຖະກິດຈາກບັນຫາໂລກເອດສ໌ທີ່ມີຕໍ່ສະຖານທີ່ເຮັດວຽກແລະຂະແໜງການຂອງເຂົາເຈົ້າ.

ຈ. ***ການໂຄສະນາສົ່ງເສີມ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນເຮັດວຽກຮ່ວມກັບຜູ້ໃຊ້ແຮງງານ, ອົງການຈັດຕັ້ງຂອງເຂົາເຈົ້າແລະລັດຖະບານເພື່ອປູກຈິດສຳນຶກກ່ຽວກັບການປ້ອງກັນແລະການຄຸ້ມຄອງໂລກເອດສ໌.

ສ. ***ນະໂຍບາຍດ້ານບຸກຄະລາກອນ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າຄວນສະໜັບສະໜູນແລະຊຸກຍູ້ຜູ້ໃຊ້ແຮງງານໃຫ້ສ້າງແລະຈັດຕັ້ງປະຕິບັດນະໂຍບາຍແລະແບບວິທີປະຕິບັດດ້ານບຸກຄະລາກອນທີ່ບໍ່ຈຳແນກຜູ້ອອກແຮງງານຕິດເຊື້ອໂລກເອດສ໌ .

ຊ. ***ການຕິດຕາມກວດກາການປະຕິບັດຕາມ.*** ຜູ້ຕາງໜ້າຂອງຜູ້ອອກແຮງງານ ມີສິດນຳເອົາບັນຫາຕ່າງໆໃນສະຖານທີ່ເຮັດວຽກຂຶ້ນຜ່ານຂັ້ນຕອນຮ້ອງທຸກແລະປະຕິບັດວິໄນ ແລະ/ຫຼື ຄວນລາຍງານທຸກການຈຳແນກບົນພື້ນຖານການຕິດເຊື້ອໂລກເອດສ໌ຕໍ່ເຈົ້າໜ້າທີ່ທີ່ມີຄວາມຮັບຜິດຊອບຕາມກົດໝາຍ.

ຍ. ***ການຝຶກອົບຮົມ.*** ອົງການຈັດຕັ້ງຂອງຜູ້ອອກແຮງງານ ຄວນສ້າງແລະຈັດຫຼັກສູດຝຶກອົບຮົມແກ່ບັນດາຜູ້ຕາງໜ້າຂອງເຂົາເຈົ້າໃຫ້ຮູ້ກ່ຽວກັບບັນຫາຕ່າງໆຢູ່ສະຖານທີ່ເຮັດວຽກທີ່ເກີດຈາກພະຍາດຕິດແປດດັ່ງກ່າວ, ບັນດາການຕອບໂຕ້ທີ່ເໝາະສົມ ແລະ ຄວາມຕ້ອງ

ການທົ່ວໄປຂອງຜູ້ຕິດເຊື້ອໂລກເອດສ໌ ຕະຫຼອດເຖິງຄວາມຕ້ອງການທົ່ວໄປຂອງຜູ້ທີ່ເບິ່ງແຍງເຂົາເຈົ້າ.

ດ. ***ການຫຼຸດຜ່ອນແລະການຄຸ້ມຄອງຄວາມສ່ຽງ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນໂຄສະນາສົ່ງເສີມໃຫ້ແລະຮ່ວມມືກັບຜູ້ໃຊ້ແຮງງານບົວລະບັດຮັກສາແວດລ້ອມການເຮັດວຽກທີ່ປອດໄພແລະມີສຸຂະພາບ ເຊິ່ງລວມທັງການນໍາໃຊ້ແລະການບົວລະບັດຮັກສາອຸປະກອນປ້ອງກັນແລະເຄື່ອງປະຖົມພະຍາບານຂັ້ນຕົ້ນໃຫ້ຖືກຕ້ອງ. ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນປະເມີນຄວາມສ່ຽງຕໍ່ການຕິດເຊື້ອພາຍໃນແວດລ້ອມການເຮັດວຽກ ແລະ ສົ່ງເສີມແຜນງານຫຼຸດຜ່ອນຄວາມສ່ຽງທີ່ອອກແບບມາສະເພາະສໍາລັບຜູ້ອອກແຮງງານກຸ່ມສ່ຽງຕາມຄວາມເໝາະສົມ.

ສ. ***ການຮັກສາຄວາມລັບ.*** ຜູ້ອອກແຮງງານ ມີສິດເຂົ້າເຖິງປະຫວັດຂໍ້ມູນສ່ວນຕົວແລະຂໍ້ມູນທາງການແພດຂອງຕົນ. ແຕ່ອົງການຈັດຕັ້ງຂອງຜູ້ອອກແຮງງານ ບໍ່ຄວນມີສິດເຂົ້າເຖິງຂໍ້ມູນສ່ວນບຸກຄົນທີ່ກ່ຽວຂ້ອງກັບສະຖານະການຕິດເຊື້ອໂລກເອດສ໌ຂອງຜູ້ອອກແຮງງານ. ບໍ່ວ່າຈະເປັນກໍລະນີໃດກໍ່ຕາມ, ເມື່ອປະຕິບັດຄວາມຮັບຜິດຊອບແລະໜ້າທີ່ຕ່າງໆຂອງກໍາມະບານ, ຄວນນໍາໃຊ້ລະບຽບແຫ່ງການຮັກສາຄວາມລັບແລະເງື່ອນໄຂທີ່ຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ກ່ຽວຂ້ອງຕາມທີ່ໄດ້ກໍານົດໄວ້ໃນບົດສະເໜີແນະວ່າດ້ວຍອົງການບໍລິການສຸຂະພາບແຮງງານຂອງລັດ, ສະບັບປີ 1985 (ເລກທີ 171).

ຊ. ***ຜູ້ອອກແຮງງານໃນກິດຈະກໍານອກລະບົບ (ໃນຂະແໜງເສດຖະກິດນອກລະບົບ).*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນຂະຫຍາຍກິດຈະກໍາຂອງເຂົາເຈົ້າໃຫ້ກວມເອົາຜູ້ອອກແຮງງານໃນຂະແໜງເສດຖະກິດນອກລະບົບ ໂດຍຮ່ວມມືກັບທຸກພາກສ່ວນກ່ຽວຂ້ອງຕາມທີ່ເຫັນວ່າເໝາະສົມ, ຄວນສະໜັບສະໜູນບັນດາແຜນງານລິເລີ່ມໃໝ່ໆທີ່ຈະຊ່ວຍທັງປ້ອງກັນການແຜ່ລະບາດຂອງເຊື້ອໂລກເອດສ໌ ແລະ ບັນເທົາຜົນກະທົບຈາກໂລກເອດສ໌.

ຍ. ***ຄວາມສ່ຽງ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນຮັບປະກັນວ່າ: ມີການແກ້ໄຂບັນດາປັດໄຈທີ່ເພີ່ມຄວາມສ່ຽງຕໍ່ການຕິດເຊື້ອຂອງກຸ່ມຜູ້ອອກແຮງງານບາງກຸ່ມໂດຍມີການຂໍຄໍາປຶກສາກັບຜູ້ໃຊ້ແຮງງານ.

ດ. ***ການສະໜັບສະໜູນໃຫ້ມີບໍລິການໃຫ້ຄໍາປຶກສາແລະການກວດເລືອດຫາເຊື້ອໂລກເອດສ໌ແບບສະມັກໃຈແລະເປັນຄວາມລັບ.*** ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າ ຄວນເຮັດວຽກຮ່ວມກັບຜູ້ໃຊ້ແຮງງານເພື່ອຊຸກຍູ້ແລະສະໜັບສະໜູນໃຫ້ມີບໍລິການໃຫ້ຄໍາປຶກສາແລະກວດເລືອດຫາເຊື້ອໂລກເອດສ໌ແບບສະມັກໃຈແລະເປັນຄວາມລັບ.

໓. *ການຮ່ວມມືສາກົນ.* ອົງການຈັດຕັ້ງຂອງຜູ້ອອກແຮງງານ ຄວນສ້າງຄວາມສາມັກຄີຂ້າມແດນຜ່ານທາງກຸ່ມເຄືອຄ່າຍເຮັດວຽກໃນລະດັບຂະແໜງການ, ພາກພື້ນແລະສາກົນ ເພື່ອເນັ້ນໜັກໃຫ້ເຫັນຄວາມຮ້າຍແຮງຂອງບັນຫາໂລກເອດສ໌ ໃນໂລກແຫ່ງການເຮັດວຽກ ແລະ ລວມເອົາບັນຫາດັ່ງກ່າວເຂົ້າໃນການໂຄສະນາເຜີຍແຜ່ສິດທິຂອງຜູ້ອອກແຮງງານ.

## 6. ການປ້ອງກັນໂດຍການໃຫ້ຂໍ້ມູນຂ່າວສານແລະການສຶກສາ.

ແຜນງານໃຫ້ຂໍ້ມູນຂ່າວສານແລະການສຶກສາ ເປັນສິ່ງຈຳເປັນທີ່ສຸດໃນການຕ້ານການແຜ່ລະບາດຂອງໂລກເອດສ໌ແລະການເສີມສ້າງໃຫ້ມີການເປີດໃຈຍອມຮັບຜູ້ອອກແຮງງານທີ່ຕິດເຊື້ອ. ການສຶກສາອົບຮົມທີ່ມີປະສິດທິພາບ ສາມາດປະກອບສ່ວນສ້າງຄວາມສາມາດໃຫ້ແກ່ຜູ້ອອກແຮງງານເພື່ອປ້ອງກັນຕົນເອງຈາກການຕິດເຊື້ອໂລກເອດສ໌, ສາມາດຫຼຸດຜ່ອນຄວາມກັງວົນແລະການເຮັດໃຫ້ຮູ້ສຶກອັບອາຍອັນເນື່ອງມາຈາກການຕິດເຊື້ອໂລກເອດສ໌ລົງໄດ້ຢ່າງຫຼວງຫຼາຍ, ສາມາດເຮັດໃຫ້ບັນຫາລົບກວນພາຍໃນສະຖານທີ່ເຮັດວຽກຫຼຸດລົງ ຈົນເຖິງຂັ້ນນຳໄປສູ່ການປ່ຽນແປງທັດສະນະຄະຕິແລະພຶດຕິກຳ. ຄວນສ້າງແຜນງານໃນລັກສະນະດັ່ງກ່າວຂຶ້ນຜ່ານການຈັດໃຫ້ມີການຂໍຄຳປຶກສາລະຫວ່າງພາກລັດ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານແລະບັນດາອົງການຈັດຕັ້ງຂອງທັງສອງຝ່າຍ ທັງນີ້ທັງນັ້ນ ກໍ່ເພື່ອຮັບປະກັນໃຫ້ມີການສະໜັບສະໜູນໃນລະດັບສູງສຸດແລະການມີສ່ວນຮ່ວມຢ່າງເຕັມກຳລັງຈາກທຸກພາກສ່ວນກ່ຽວຂ້ອງ. ຄວນສະໜອງການໃຫ້ຂໍ້ມູນຂ່າວສານແລະການສຶກສາອົບຮົມດ້ວຍຫຼາກຫຼາຍຮູບການ ບໍ່ຄວນອາໄສສະເພາະແຕ່ຂໍ້ມູນຂ່າວສານທີ່ເປັນລາຍລັກອັກສອນແຕ່ພຽງຢ່າງດຽວແລະຄວນລວມເອົາການຮຽນທາງໄກເຂົ້ານຳຕາມທີ່ເຫັນວ່າຈຳເປັນ. ແຜນງານໃນລັກສະນະດັ່ງກ່າວ ຄວນມີເປົ້າໝາຍແລະຖືກອອກແບບໃຫ້ເໝາະສົມກັບອາຍຸ, ບົດບາດຍິງ-ຊາຍ, ວິຖີທາງເພດ, ຄຸນລັກສະນະສະເພາະຂອງຂະແໜງການ ແລະ ບັນດາປັດໄຈທີ່ເປັນພຶດຕິກຳສ່ຽງຂອງກຳລັງແຮງງານຕະຫຼອດເຖິງສະພາບເງື່ອນໄຂທາງວັດທະນາທຳຂອງເຂົາເຈົ້າ. ບຸກຄົນທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈແລະເປັນທີ່ເຄົາລົບ ຄວນເປັນຜູ້ສະໜອງແຜນງານໃຫ້ຂໍ້ມູນຂ່າວສານແລະການສຶກສາອົບຮົມດັ່ງກ່າວ. ໃນຂະນະດຽວກັນ, ການສຶກສາອົບຮົມແບບເພື່ອນສອນເພື່ອນເຫັນວ່າ: ມີປະສິດທິພາບເປັນພິເສດ ເນື່ອງຈາກໄດ້ລວມເອົາການມີສ່ວນຮ່ວມຂອງຜູ້ຕິດເຊື້ອໂລກເອດສ໌ເຂົ້າໃນການອອກແບບແລະການຈັດຕັ້ງປະຕິບັດແຜນງານດັ່ງກ່າວ.

### 6.1. ການໃຫ້ຂໍ້ມູນຂ່າວສານແລະການໂຄສະນາປູກຈິດສຳນຶກ

ກ. ພາຍໃນຊຸມຊົນທ້ອງຖິ່ນ, ຂະແໜງການ, ພາກ ຫຼື ປະເທດຕາມທີ່ເຫັນວ່າເໝາະສົມ, ຄວນເຊື່ອມໂຍງແຜນງານໃຫ້ຂໍ້ມູນຂ່າວສານເຂົ້າໃສ່ກັບແຜນງານໂຄສະນາເຜີຍແຜ່ເລື່ອງໂລກເອດສ໌ທີ່ດຳເນີນການໂຄສະນາໃນວົງກວ້າງ. ແຜນງານໃຫ້ຂໍ້ມູນຂ່າວສານ ຄວນຕັ້ງຢູ່ບົນພື້ນຖານຂໍ້ມູນຂ່າວສານທີ່ຖືກຕ້ອງແລະທັນກັບສະພາບການຕົວຈິງໂດຍເປັນຂໍ້ມູນກ່ຽວ

ກັບວິທີທີ່ເຊື້ອໂລກເອດສ໌ ສາມາດແພ່ເຊື້ອແລະບໍ່ສາມາດແພ່ເຊື້ອໄດ້, ກຳຈັດຄວາມຮູ້ທີ່ບໍ່ຖືກ ຕ້ອງກ່ຽວກັບໂລກເອດສ໌, ວິທີຮູ້ທີ່ສາມາດປ້ອງກັນເຊື້ອໂລກເອດສ໌, ລັກສະນະດ້ານການແພດຂອງພະຍາດດັ່ງກ່າວ, ຜົນກະທົບຂອງໂລກເອດສ໌ທີ່ມີຕໍ່ບຸກຄົນ, ແລະ ຄວາມເປັນໄປໄດ້ໃນດ້ານການເບິ່ງແຍງ, ການຊ່ວຍເຫຼືອ ແລະ ການປິ່ນປົວ.

ຂ. ໃນທາງປະຕິບັດ, ຄວນລວມເອົາແຜນງານ, ຫຼັກສູດແລະການໂຄສະນາໃຫ້ຂໍ້ມູນຂ່າວສານເຂົ້າໃນບັນດານະໂຍບາຍແລະແຜນງານດ້ານຊັບພະຍາກອນມະນຸດແລະດ້ານການສຶກສາທີ່ມີຢູ່ ກໍ່ຄື ບັນດາຍຸດທະສາດທີ່ຫ້າມບໍ່ໃຫ້ມີການຈຳແນກແລະຍຸດທະສາດດ້ານສຸຂະພາບແລະຄວາມປອດໄພແຮງງານ.

## 6.2 ແຜນງານໃຫ້ການສຶກສາອົບຮົມ

ກ. ຍຸດທະສາດດ້ານການສຶກສາອົບຮົມ ຄວນຕັ້ງຢູ່ບົນພື້ນຖານຂອງການຂໍຄຳປຶກສາລະຫວ່າງຜູ້ໃຊ້ແຮງງານແລະຜູ້ອອກແຮງງານແລະຜູ້ຕາງໜ້າຂອງທັງສອງຝ່າຍ (ຕາມທີ່ເຫັນວ່າເໝາະສົມ), ພາກລັດແລະພາກສ່ວນກ່ຽວຂ້ອງທີ່ມີຄວາມຊ່ຽວຊານດ້ານການສຶກສາ, ໃຫ້ຄຳປຶກສາແລະດ້ານການເບິ່ງແຍງທີ່ພົວພັນກັບໂລກເອດສ໌. ວິທີການໃນການໃຫ້ ການສຶກສາອົບຮົມນັ້ນ ຄວນມີລັກສະນະຂອງການປຶກສາແລກປ່ຽນແລະມີສ່ວນຮ່ວມໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້.

ຂ. ຄວນພິຈາລະນາຈັດແຜນງານໃຫ້ການສຶກສາອົບຮົມຂຶ້ນໃນໂມງເຮັດວຽກ ແລະ ສ້າງສື່ສຶກສາອົບຮົມເພື່ອໃຫ້ຜູ້ອອກແຮງງານເອົາໄປນຳໃຊ້ໂຄສະນາຢູ່ນອກສະຖານທີ່ເຮັດວຽກ. ຢູ່ບ່ອນທີ່ມີການຈັດຫຼັກສູດສຶກສາອົບຮົມໃຫ້ນັ້ນ, ຄວນຖືການເຂົ້າຮ່ວມເປັນສ່ວນໜຶ່ງຂອງພັນທະໃນການເຮັດວຽກ.

ຄ. ໃນກໍລະນີທີ່ສາມາດປະຕິບັດໄດ້ແລະເຫັນວ່າມີຄວາມເໝາະສົມ, ແຜນງານໃຫ້ການສຶກສາອົບຮົມ ຄວນຈະ:

- ລວມເອົາບັນດາກິດຈະກຳທີ່ຈະຊ່ວຍບຸກຄົນໃຫ້ສາມາດປະເມີນຄວາມສ່ຽງທີ່ເຂົາເຈົ້າຜະເຊີນຢູ່ (ທັງໃນລະດັບໂຕບຸກຄົນແລະໃນຖານະສະມະຊິກຂອງກຸ່ມ) ແລະ ທີ່ຈະຊ່ວຍຫຼຸດຜ່ອນຄວາມສ່ຽງເຫຼົ່ານັ້ນຜ່ານທາງທັກສະດ້ານການຕັດສິນບັນຫາ, ດ້ານການເຈລະຈາແລະດ້ານການສື່ສານ ກໍ່ຄື ບັນດາແຜນງານໃຫ້ການສຶກສາອົບຮົມ, ແຜນງານປ້ອງກັນແລະໃຫ້ຄຳປຶກສາ;
- ຄວນເນັ້ນໜັກເປັນພິເສດໃສ່ພຶດຕິກຳທີ່ມີຄວາມສ່ຽງສູງ ແລະ ບັນດາປັດໄຈສ່ຽງອື່ນໆເຊັ່ນ: ການເຄື່ອນທີ່ໄປມາເພື່ອຊອກຫາວຽກເຮັດງານທຳ ເຮັດໃຫ້ຜູ້ອອກແຮງງານບາງກຸ່ມມີໂອກາດສ່ຽງຕໍ່ການຕິດເຊື້ອໂລກເອດສ໌ເພີ່ມຂຶ້ນ;

- ສະໜອງຂໍ້ມູນຂ່າວສານກ່ຽວກັບຊ່ອງທາງການຕິດເຊື້ອໂລກເອດສ໌ທີ່ສາມາດຕິດກັນໄດ້ດ້ວຍການສັກຢາເສບຕິດຮ່ວມເຂັມ, ແລະ ຂໍ້ມູນຂ່າວສານກ່ຽວກັບວິທີຫຼຸດຜ່ອນຄວາມສ່ຽງຂອງການຕິດເຊື້ອໃນລັກສະນະດັ່ງກ່າວ;
- ປັບປຸງການປຶກສາຄົ້ນຄວ້າຮ່ວມກັບລັດຖະບານ, ອົງການຈັດຕັ້ງຂອງຜູ້ໃຊ້ແຮງງານ ແລະຂອງຜູ້ອອກແຮງງານຈາກບັນດາປະເທດບ້ານໃກ້ເຮືອນຄຽງ ແລະ ປັບປຸງການສາຄົ້ນຄວ້າໃນລະດັບພາກພື້ນ;
- ສົ່ງເສີມການປູກຈິດສຳນຶກກ່ຽວກັບໂລກເອດສ໌ ໃນແຜນງານຝຶກອົບຮົມວິຊາຊີບທີ່ຈັດໂດຍພາກລັດແລະວິສາຫະກິດພາຍໃຕ້ການຮ່ວມມືກັບອົງການຈັດຕັ້ງຂອງຜູ້ອອກແຮງງານ;
- ສົ່ງເສີມການໂຄສະນາເຜີຍແຜ່ທີ່ມີເປົ້າໝາຍແນໃສ່ຜູ້ອອກແຮງງານໄວໜຸ່ມ ແລະແມ່ຍິງ;
- ໃຫ້ການເນັ້ນໜັກເປັນພິເສດຕໍ່ຄວາມສ່ຽງໃນການຕິດເຊື້ອໂລກເອດສ໌ຂອງແມ່ຍິງ ແລະ ຍຸດທະສາດໃນການປ້ອງກັນທີ່ສາມາດຫຼຸດຜ່ອນຄວາມສ່ຽງດັ່ງກ່າວນີ້ລົງໄດ້ (ລາຍລະອຽດໃຫ້ເບິ່ງຂໍ້ 6.3);
- ເນັ້ນໜັກວ່າ: ເຊື້ອ HIV ຫຼື ເຊື້ອໂລກເອດສ໌ ບໍ່ສາມາດຕິດຕໍ່ກັນໄດ້ດ້ວຍການຈັບບາຍກັນແບບທົ່ວໄປໄດ້, ດັ່ງນັ້ນຈິ່ງບໍ່ຈຳເປັນຕ້ອງຫຼີກລ່ຽງ ຫຼື ບໍ່ຢາກຢູ່ໃກ້ຜູ້ທີ່ຕິດເຊື້ອໂລກເອດສ໌, ກົງກັນຂ້າມຄວນຈະຊ່ວຍເຫຼືອເຂົາເຈົ້າແລະປັບປ່ຽນສະຖານທີ່ເຮັດວຽກເພື່ອເຮັດແນວໃດໃຫ້ສາມາດຮອງຮັບເອົາເຂົາເຈົ້າເຮັດວຽກນຳໄດ້;
- ອະທິບາຍເຖິງຜົນກະທົບຂອງໄວຣັດສທີ່ເຮັດໃຫ້ຮ່າງກາຍອ່ອນແອ ແລະ ຄວາມຈຳເປັນທີ່ຢາກໃຫ້ມີຄວາມເຫັນອົກເຫັນໃຈຕໍ່ຜູ້ອອກແຮງງານໝົດທຸກຄົນ ແລະ ບໍ່ມີການຈຳແນກຕໍ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌;
- ເປີດໂອກາດໃຫ້ຜູ້ອອກແຮງງານສະແດງຄວາມຄິດເຫັນແລະປຶກສາຄົ້ນຄວ້າກ່ຽວກັບທ່າທີ່ຕອບໂຕ້ແລະອາລົມຂອງເຂົາເຈົ້າທີ່ມີຕໍ່ບັນຫາໂລກເອດສ໌;
- ແນະນຳຜູ້ອອກແຮງງານ (ໂດຍສະເພາະຜູ້ອອກແຮງງານໃນຂະແໜງປິ່ນປົວສຸຂະພາບ) ໃຫ້ຮູ້ກ່ຽວກັບການນຳໃຊ້ມາດຕະການປ້ອງກັນທີ່ເປັນເອກະພາບ (Universal Precautions) ແລະ ແຈ້ງຂັ້ນຕອນທີ່ເຂົາເຈົ້າຕ້ອງປະຕິບັດຕາມໃນກໍລະນີທີ່ຕ້ອງຈັບບາຍສິ່ງທີ່ອາດຈະນຳໄປສູ່ການຕິດເຊື້ອໂລກເອດສ໌.
- ສະໜອງການສຶກສາອົບຮົມກ່ຽວກັບການປ້ອງກັນ ແລະ ການຄຸ້ມຄອງການຕິດຕໍ່ທາງເພດສຳພັນ (STIs) ແລະ ພະຍາດວັນນະໂລກ ບໍ່ແມ່ນສະເພາະແຕ່ວ່າທັງສອງກໍລະນີມີສ່ວນພົວພັນກັບຄວາມສ່ຽງຕໍ່ການຕິດເຊື້ອໂລກເອດສ໌ເທົ່ານັ້ນແຕ່ຍັງ

ຍ້ອນເຫດຜົນທີ່ວ່າອາການປ່ວຍທັງສອງກໍລະນີນັ້ນສາມາດປິ່ນປົວໄດ້, ເຊິ່ງເປັນການ ເຮັດໃຫ້ສຸຂະພາບແລະພູມຄຸ້ມກັນໂດຍລວມຂອງຜູ້ອອກແຮງງານແຂງແຮງຂຶ້ນ;

- ສົ່ງເສີມການຮັກສາອະນາໄມ ແລະ ໂພສະນາການທີ່ຖືກຕ້ອງ;
- ສົ່ງເສີມວິທີຮ່ວມເພດແບບປອດໄພ ໃນນັ້ນລວມທັງການໃຫ້ຄຳແນະນຳກ່ຽວກັບວິທີການໃຊ້ຖົງຢາງອະນາໄມຂອງທັງຜູ້ຊາຍແລະແມ່ຍິງໃຫ້ຖືກຕ້ອງ;
- ຊຸກຍູ້ກິດຈະກຳເພື່ອນສອນເພື່ອນແລະການສຶກສານອກລະບົບ;
- ໄດ້ຮັບການຕິດຕາມກວດກາ, ປະເມີນຜົນ, ທົບທວນແລະດັດແກ້ຢ່າງເປັນປົກກະຕິຕາມຄວາມເໝາະສົມ.

## 6.3 ແຜນງານທີ່ມີລັກສະນະສະເພາະດ້ານບົດບາດຍິງ-ຊາຍ

ກ. ທຸກແຜນງານ ຄວນມີຄວາມລະອຽດອ່ອນເຂົ້າໃຈຕໍ່ບົດບາດຍິງ-ຊາຍ ກໍ່ຄື ເຊື້ອຊາດ ແລະວິຖີທາງເພດ, ໂດຍເປັນແຜນງານທີ່ມີການກຳນົດເປົ້າໝາຍແນໃສ່ທັງຜູ້ຊາຍແລະແມ່ຍິງເອົາໄວ້ຢ່າງຈະແຈ້ງ, ຫຼື ເປັນແຜນງານສຳລັບແມ່ຍິງຕ່າງຫາກ ແລະ ຜູ້ຊາຍຕ່າງຫາກ, ເປັນແຜນງານທີ່ຮັບຮູ້ບັນດາປະເພດແລະລະດັບຄວາມສ່ຽງທີ່ມີຕໍ່ຜູ້ອອກແຮງງານທັງຊາຍແລະຍິງ.

ຂ. ຂໍ້ມູນຂ່າວສານທີ່ຈະສະໜອງໃຫ້ແກ່ແມ່ຍິງນັ້ນ ຕ້ອງເຮັດໃຫ້ເຂົາເຈົ້າຕື່ນໂຕຕໍ່ ແລະ ຕ້ອງອະທິບາຍໃຫ້ເຂົາເຈົ້າຮູ້ກ່ຽວກັບຄວາມສ່ຽງໃນການຕິດເຊື້ອເຊິ່ງເຂົາເຈົ້າມີສູງກວ່າຜູ້ຊາຍ ໂດຍສະເພາະຄວາມສ່ຽງຕໍ່ການຕິດເຊື້ອຂອງແມ່ຍິງສາວ.

ຄ. ການສຶກສາອົບຮົມ ຄວນຊ່ວຍໃຫ້ທັງແມ່ຍິງແລະຜູ້ຊາຍເຂົ້າໃຈແລະແກ້ໄຂສາຍພົວພັນທາງອຳນາດທີ່ບໍ່ສະເໝີພາບລະຫວ່າງເຂົາເຈົ້າບໍ່ວ່າຈະເປັນໃນດ້ານສະພາບການຈ້າງງານ ແລະສະພາບສ່ວນຕົວ; ຄວນແກ້ໄຂບັນຫາການກຸກວນທາງເພດແລະຄວາມຮຸນແຮງສະເພາະຕ່າງຫາກ.

ງ. ແຜນງານສຶກສາອົບຮົມ ຄວນຊ່ວຍໃຫ້ແມ່ຍິງເຂົ້າໃຈເຖິງສິດທິຕ່າງໆຂອງຕົນເອງທັງພາຍໃນແລະພາຍນອກສະຖານທີ່ເຮັດວຽກ, ແລະ ຄວນໃຫ້ອຳນາດແກ່ແມ່ຍິງເພື່ອໃຫ້ເຂົາເຈົ້າສາມາດປົກປ້ອງຕົນເອງໄດ້.

ຈ. ການສຶກສາອົບຮົມຜູ້ຊາຍ ຄວນລວມເອົາການປູກຈິດສຳນຶກ, ການປະເມີນຄວາມສ່ຽງ ແລະຍຸດທະສາດໃນການສົ່ງເສີມຄວາມຮັບຜິດຊອບຂອງຜູ້ຊາຍໃນດ້ານທີ່ພົວພັນກັບການປ້ອງກັນໂລກເອດສ໌.

ສ. ຄວນສ້າງແຜນງານປ້ອງກັນທີ່ມີການກຳນົດເປົ້າໝາຍຢ່າງເໝາະສົມໃຫ້ແກ່ຜູ້ຊາຍຮັກຮ່ວມເພດ ພາຍໃຕ້ການຂໍຄຳປຶກສາກັບຜູ້ອອກແຮງງານທີ່ເປັນຜູ້ຊາຍຮັກຮ່ວມເພດຕະຫຼອດເຖິງຜູ້ຕາງໜ້າຂອງເຂົາເຈົ້າ.

## 6.4 ການເຊື່ອມສານກັບແຜນງານສົ່ງເສີມສຸຂະພາບ

ຕາມທີ່ສາມາດປະຕິບັດໄດ້, ຄວນເຊື່ອມສານແຜນງານດ້ານການສຶກສາອົບຮົມເຂົ້າກັບບັນດາແຜນງານສົ່ງເສີມສຸຂະພາບທີ່ພະຍາຍາມແກ້ໄຂບັນຫາຕ່າງໆພາຍໃນສະຖານທີ່ເຮັດວຽກເຊັ່ນ: ການເສບຫາດເສບຕິດ, ຄວາມເຄັ່ງຄຽດແລະບັນຫາສຸຂະພາບຈະເລີນພັນ. ສະພາແຮງງານ ຫຼື ຄະນະກຳມະການດ້ານສຸຂະພາບແລະຄວາມປອດໄພແຮງງານທີ່ມີຢູ່ ໜ້າຈະເປັນຜູ້ສະໜອງຈຸດເລີ່ມຕົ້ນໃຫ້ແກ່ການໂຄສະນາປູກຈິດສຳນຶກແລະແຜນງານສຶກສາອົບຮົມກ່ຽວກັບໂລກເອດສ໌. ການເຊື່ອມສານດັ່ງກ່າວ ຄວນເນັ້ນໃຫ້ເຫັນວ່າ: ຄວາມສ່ຽງຕໍ່ການຕິດເຊື້ອຈະມີເພີ່ມຂຶ້ນຖ້າໃຊ້ເຂັມທີ່ເປິເປື້ອນ ສັກຢາເສບຕິດເຂົ້າເສັ້ນເລືອດ. ພ້ອມນັ້ນ, ການເຊື່ອມສານດັ່ງກ່າວ ຍັງຄວນເນັ້ນໃຫ້ເຫັນວ່າ: ການມຶນເມົາອັນເນື່ອງມາຈາກເຫຼົ້າ ຫຼື ຢາເສບຕິດ ອາດຈະນຳໄປສູ່ພຶດຕິກຳທີ່ເພີ່ມຄວາມສ່ຽງຕໍ່ການຕິດເຊື້ອໂລກເອດສ໌.

## 6.5 ມາດຕະການໃນພາກປະຕິບັດເພື່ອສະໜັບສະໜູນໃຫ້ມີການປ່ຽນແປງພຶດຕິກຳ

ກ. ຜູ້ອອກແຮງງານ ຄວນໄດ້ຮັບການສຶກສາອົບຮົມທີ່ມີລັກສະນະລະອຽດອ່ອນ, ຖືກຕ້ອງແລະທັນກັບສະພາບການຕົວຈິງກ່ຽວກັບຍຸດທະສາດຫຼຸດຜ່ອນຄວາມສ່ຽງ; ແລະ ສະຖານທີ່ໃດທີ່ເຫັນວ່າເໝາະສົມກໍ່ຄວນສະໜອງຖົງຢາງອະນາໄມຂອງທັງຜູ້ຊາຍແລະແມ່ຍິງໃຫ້ແກ່ຜູ້ອອກແຮງງານ.

ຂ. ຕາມບ່ອນທີ່ເຫັນວ່າເໝາະສົມ, ຄວນສະໜອງການກວດວິເຄາະ, ການປິ່ນປົວ ແລະການຄຸ້ມຄອງ STI ແລະ ພະຍາດວັນນະໂລກ ກໍ່ຄື ແຜນງານສົ່ງເສີມການໃຊ້ເຂັມແລະສະແລັງຂ້າເຊື້ອ ໃນລັກສະນະທີ່ມີປະສິດທິພາບຂຶ້ນໄວ້ຕັ້ງແຕ່ຕົ້ນ ຫຼື ຄວນສະໜອງຂໍ້ມູນຂ່າວສານແຫຼ່ງທີ່ສາມາດໄປຮັບບໍລິການເຫຼົ່ານັ້ນ.

ຄ. ສຳລັບຜູ້ອອກແຮງງານເພດຍິງທີ່ມີຄວາມຕ້ອງການດ້ານການເງິນ, ການສຶກສາອົບຮົມເຂົາເຈົ້ານັ້ນ ຄວນລວມເອົາຍຸດທະສາດທີ່ຈະຊ່ວຍສ້າງລາຍໄດ້ເພີ່ມໃຫ້ແກ່ລາຍໄດ້ທີ່ຕ່ຳຂອງເຂົາເຈົ້າ ຕົວຢ່າງ: ດ້ວຍການສະໜອງຂໍ້ມູນຂ່າວສານກ່ຽວກັບກິດຈະກຳສ້າງລາຍໄດ້, ການຍົກເວັ້ນພາສີ ແລະ ການຊ່ວຍເຫຼືອດ້ານຄ່າແຮງງານ.

### 6.6 ແຜນງານເຂົ້າເຖິງຊຸມຊົນ

ຜູ້ໃຊ້ແຮງງານ, ຜູ້ອອກແຮງງານແລະຜູ້ຕາງໜ້າຂອງທັງສອງຝ່າຍ ຄວນຊຸກຍູ້ແລະສົ່ງເສີມແຜນງານໃຫ້ຂໍ້ມູນຂ່າວສານແລະການສຶກສາອົບຮົມກ່ຽວກັບການປ້ອງການແລະການຄຸ້ມຄອງບັນຫາໂລກເອດສ໌ຂຶ້ນພາຍໃນຊຸມຊົນທ້ອງຖິ່ນໂດຍສະເພາະໂຮງຮຽນ. ຄວນຊຸກຍູ້ການມີສ່ວນຮ່ວມໃນແຜນງານເຂົ້າເຖິງຊຸມຊົນເພື່ອເປີດໂອກາດໃຫ້ປະຊາຊົນສະແດງທັດສະນະຄວາມຄິດເຫັນຂອງເຂົາເຈົ້າແລະເພື່ອປັບປຸງສະຫວັດດີການຂອງຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ດ້ວຍການຫຼຸດຜ່ອນບັນຫາທີ່ເຂົາເຈົ້າຖືກໂດດດ່ຽວ ຫຼື ຕັດແຍກຈາກສັງຄົມ. ຄວນຈັດຕັ້ງປະຕິບັດແຜນງານດັ່ງກ່າວ ໂດຍຮ່ວມມືກັບບັນດາອົງການທີ່ເໝາະສົມໃນລະດັບຊາດ ຫຼື ໃນລະດັບທ້ອງຖິ່ນ.

## 7. ການຝຶກອົບຮົມ

ຄວນມີການກຳນົດເປົ້າໝາຍແລະດັດປັບການຝຶກອົບຮົມໃຫ້ເໝາະສົມກັບກຸ່ມຕ່າງໆທີ່ຈະເຂົ້າຮັບການຝຶກອົບຮົມເຊັ່ນ: ຜູ້ຈັດການ, ຜູ້ຊີ້ນຳວຽກແລະພະນັກງານຝ່າຍບຸກຄະລາກອນ; ຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າ; ຄູຝຶກຂອງຄູຝຶກ (ທັງຊາຍແລະຍິງ); ອາສາສະມັກເພື່ອນສອນເພື່ອນ; ພະນັກງານຝ່າຍສຸຂະພາບແລະຄວາມປອດໄພແຮງງານ; ແລະ ພະນັກງານກວດກາແຮງງານ/ໂຮງງານ. ຄວນຊອກຫາວິທີການຝຶກອົບຮົມແບບໃໝ່ເພື່ອຖົມຊຸມມູນຄ່າສິ້ນເປືອງໃນການຈັດຝຶກອົບຮົມ. ຕົວຢ່າງ: ວິສາຫະກິດ ອາດຈະຊອກຫາການຊ່ວຍເຫຼືອຈາກພາຍນອກນຳແຜນງານເອດສ໌ແຫ່ງຊາດ ຫຼື ບັນດາພາກສ່ວນກ່ຽວຂ້ອງ ດ້ວຍການຂໍຢືມໂຕຄູຝຶກ ຫຼື ເອົາຄົນພາຍໃນຂອງຕົນໄປຝຶກເປັນຄູຝຶກ. ສື່ການຝຶກອົບຮົມຄວນ ອາດຈະມີຄວາມຫຼາກຫຼາຍທັງນີ້ທັງນັ້ນແມ່ນຂຶ້ນກັບຊັບພະຍາກອນທີ່ມີ. ສາມາດດັດປັບສື່ເຫຼົ່ານັ້ນໃຫ້ເໝາະສົມກັບປະເພນີທ້ອງຖິ່ນແລະສະພາບເງື່ອນໄຂທີ່ແຕກຕ່າງກັນລະຫວ່າງແມ່ຍິງກັບຜູ້ຊາຍ. ນອກຈາກນັ້ນ, ກໍ່ຄວນຝຶກຄູຝຶກໃຫ້ຮູ້ວິທີຮັບມືກັບແນວຄວາມຄິດຈຳແນກຕໍ່ກຸ່ມຄົນທີ່ມີສ່ຽງສ່ວນນ້ອຍໂດຍສະເພາະແນວຄວາມຄິດຈຳແນກກ່ຽວກັບແຫຼ່ງທີ່ມາຂອງຊົນຊາດ-ຊົນເຜົ່າ ຫຼື ວິຖີທາງເພດ. ຄູຝຶກ ຄວນອີງໃສ່ສື່ທີ່ມີກ່ຽວກັບບັນດາກໍລະນີສຶກສາແລະແບບວິທີປະຕິບັດທີ່ດີ. ພົບຢູ່ເປັນປະຈຳວ່າ: ຄູຝຶກທີ່ດີເລີດນັ້ນແມ່ນໂຕພະນັກງານເອງ, ດ້ວຍເຫດນັ້ນໃນການຝຶກອົບຮົມທຸກລະດັບຈິ່ງແນະນຳໃຫ້ໃຊ້ການສຶກສາອົບຮົມແບບເພື່ອນສອນເພື່ອນ. ການສຶກສາແບບເພື່ອນສອນເພື່ອນ ຄວນເປັນສ່ວນໜຶ່ງຂອງແຜນຝຶກອົບຮົມປະຈຳປີທີ່ຄວນຈະຖືກສ້າງຂຶ້ນຜ່ານທາງການຂໍຄຳປຶກສາກັບຜູ້ຕາງໜ້າຂອງຜູ້ອອກແຮງງານ.

### 7.1. ການຝຶກອົບຮົມໃຫ້ແກ່ຜູ້ຈັດການ, ຜູ້ຊີ້ນຳວຽກແລະພະນັກງານຝ່າຍບຸກຄະລາກອນ

ນອກຈາກເຂົ້າມີສ່ວນຮ່ວມໃນແຜນງານໃຫ້ຂໍ້ມູນຂ່າວສານແລະການສຶກສາເອົາຮົມທີ່ມີເປົ້າໝາຍແນໃສ່ຜູ້ອອກແຮງງານໝົດທຸກຄົນແລ້ວ, ບຸກຄະລາກອນຂັ້ນຊີ້ນຳວຽກແລະຂັ້ນບໍລິຫານເອງກໍ່ຄວນໄດ້ຮັບການຝຶກອົບຮົມເພື່ອ:

- ເຮັດໃຫ້ເຂົາເຈົ້າສາມາດອະທິບາຍແລະຕອບຄໍາຖາມກ່ຽວກັບນະໂຍບາຍວ່າດ້ວຍໂລກເອດສ໌ໃນສະຖານທີ່ເຮັດວຽກໄດ້;
- ໃຫ້ມີຂໍ້ມູນຂ່າວສານທີ່ຖືກຕ້ອງກ່ຽວກັບໂລກເອດສ໌ເພື່ອຈະຊ່ວຍແກ້ຄວາມເຂົ້າໃຈຜິດຂອງຜູ້ອອກແຮງງານທີ່ມີກ່ຽວກັບການແຜ່ລະບາດຂອງໂລກເອດສ໌ຢູ່ສະຖານທີ່ເຮັດວຽກ;
- ເຂົ້າໃຈແລະຫາທາງເລືອກທີ່ເໝາະສົມແກ່ຜູ້ອອກແຮງງານທີ່ຕິດເຊື້ອເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ເຮັດວຽກຕໍ່ໄປເທົ່າທີ່ເຂົາເຈົ້າສາມາດເຮັດໄດ້;
- ໃຫ້ສາມາດຄຸ້ມຄອງບໍ່ໃຫ້ມີການຈໍາແນກ ຫຼື ໂດດດ່ຽວຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌;
- ເຮັດໃຫ້ເຂົາເຈົ້າສາມາດສະໜອງຄໍາແນະນໍາກ່ຽວກັບບໍລິການສຸຂະພາບ ແລະ ສິດທິປະໂຫຍດທາງສັງຄົມທີ່ມີສະໜອງໃຫ້ແກ່ຜູ້ອອກແຮງງານທີ່ຕິດເຊື້ອ.

## 7.2. ການຝຶກອົບຮົມໃຫ້ແກ່ອາສາສະມັກເພື່ອນສອນເພື່ອນ

ອາສາສະມັກເພື່ອນສອນເພື່ອນ ຄວນໄດ້ຮັບການຝຶກອົບຮົມສະເພາະເພື່ອ:

- ໃຫ້ມີຄວາມຮູ້ພຽງພໍກ່ຽວກັບເນື້ອໃນແລະວິທີການປ້ອງກັນໂລກເອດສ໌ ເພື່ອເຂົາເຈົ້າຈະສາມາດຖ່າຍທອດຄວາມຮູ້ທັງໝົດຫຼືສ່ວນໃດສ່ວນໜຶ່ງໃຫ້ແກ່ກໍາລັງແຮງງານຜ່ານທາງແຜນງານສະໜອງຂໍ້ມູນຂ່າວສານແລະການສຶກສາອົບຮົມ;
- ໃຫ້ມີຄວາມລະອຽດອ່ອນເຂົ້າໃຈຕໍ່ເຊື້ອຊາດ, ວິຖີທາງເພດ, ບົດບາດຍິງ-ຊາຍ ແລະ ວັດທະນະທໍາໃນເວລາສ້າງແລະສະໜອງການຝຶກອົບຮົມຂອງເຂົາເຈົ້າ;
- ສາມາດເຊື່ອມໂຍງ ແລະ ຖອດຖອນບົດຮຽນຈາກບັນດານະໂຍບາຍທີ່ມີຢູ່ໃນສະຖານທີ່ເຮັດວຽກແລ້ວເຊັ່ນ: ນະໂຍບາຍວ່າດ້ວຍການກຸກວນທາງເພດ ຫຼື ນະໂຍບາຍສໍາລັບຜູ້ທີ່ມີຄວາມພິການໃນສະຖານທີ່ເຮັດວຽກ;
- ເຮັດໃຫ້ເພື່ອນຮ່ວມງານຂອງເຂົາເຈົ້າສາມາດລະບຸບັນດາປັດໄຈຕ່າງໆໃນຊີວິດຂອງເຂົາເຈົ້າທີ່ນໍາໄປສການເພີ່ມຄວາມສ່ຽງຕໍ່ການຕິດເຊື້ອໂລກເອດສ໌;
- ສາມາດໃຫ້ຄໍາປຶກສາແກ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ກ່ຽວກັບວິທີຈັດການກັບອາການປ່ວຍແລະຜົນກະທົບຈາກໂລກເອດສ໌.

## 7.3 ການຝຶກອົບຮົມໃຫ້ແກ່ຜູ້ຕາງໜ້າຂອງຜູ້ອອກແຮງງານ

ຜູ້ຕາງໜ້າຂອງຜູ້ອອກແຮງງານ ຄວນໄດ້ຮັບການຝຶກອົບຮົມໃນໂມງເຮັດວຽກເພື່ອ:

- ເຮັດໃຫ້ເຂົາເຈົ້າສາມາດອະທິບາຍແລະຕອບຄໍາຖາມກ່ຽວກັບນະໂຍບາຍວ່າດ້ວຍໂລກເອດສ໌ໃນສະຖານທີ່ເຮັດວຽກໄດ້;

- ເຮັດໃຫ້ເຂົາເຈົ້າສາມາດຝຶກອົບຮົມຜູ້ອອກແຮງງານຄົນອື່ນຜ່ານທາງແຜນງານຝຶກອົບຮົມຄູຝຶກ;
- ໃຫ້ສາມາດລະບຸພຶດຕິກຳ, ການກະທຳ ຫຼື ແບບວິທີປະຕິບັດພາຍໃນສະຖານທີ່ເຮັດວຽກທີ່ຈຳແນກ ຫຼື ໂດດດ່ຽວຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌, ທັງນີ້ທັງນັ້ນກໍ່ເພື່ອຕ້ານການກະທຳໃນລັກສະນະດັ່ງກ່າວໃຫ້ໄດ້ຢ່າງມີປະສິດທິພາບ;
- ຊ່ວຍເຫຼືອ ແລະ ຕາງໜ້າໃຫ້ແກ່ຜູ້ອອກແຮງງານທີ່ເຈັບປ່ວຍຈາກໂລກເອດສ໌ໃຫ້ສາມາດເຂົ້າເຖິງການປັບປ່ຽນແບບສົມເຫດສົມຜົນ/ການເອື້ອອຳນວຍຕາມສົມຄວນ (reasonable accommodation) ໃນເວລາທີ່ເຂົາເຈົ້າຮ້ອງຂໍ;
- ສາມາດໃຫ້ຄຳປຶກສາແກ່ຜູ້ອອກແຮງງານໃນດ້ານການລະບຸແລະຫຼຸດຜ່ອນບັນດາປັດໄຈສ່ຽງຕ່າງໆໃນຊີວິດສ່ວນໂຕຂອງເຂົາເຈົ້າ;
- ໃຫ້ໄດ້ຮັບຄຳແນະນຳເປັນຢ່າງດີກ່ຽວກັບບັນຫາໂລກເອດສ໌ ເພື່ອຈະແຈ້ງຜູ້ອອກແຮງງານໃຫ້ຮູ້ກ່ຽວກັບການແຜ່ລະບາດຂອງໂລກເອດສ໌;
- ຮັບປະກັນວ່າ: ທຸກຂໍ້ມູນຂ່າວສານທີ່ເຂົາເຈົ້າຮູ້ກ່ຽວກັບຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ໃນໄລຍະການດຳເນີນໜ້າທີ່ເປັນຜູ້ຕາງໜ້າໃຫ້ແກ່ຜູ້ອອກແຮງງານນັ້ນຈະຖືກຮັກສາເປັນຄວາມຄວາມລັບ.

## 7.4 ການຝຶກອົບຮົມໃຫ້ແກ່ພະນັກງານຝ່າຍສຸຂະພາບແລະຄວາມປອດໄພແຮງງານ

ນອກຈາກການສ້າງຄວາມຄຸ້ນເຄີຍກັບແຜນງານໃຫ້ຂໍ້ມູນຂ່າວສານແລະການສຶກສາອົບຮົມທີ່ມີເປົ້າໝາຍແນໃສ່ຜູ້ອອກແຮງງານໝົດທຸກຄົນແລ້ວ, ພະນັກງານຝ່າຍສຸຂະພາບແລະຄວາມປອດໄພແຮງງານ ຄວນໄດ້ຮັບການຝຶກອົບຮົມສະເພາະເພື່ອ:

- ໃຫ້ມີຄວາມຮູ້ພຽງພໍກ່ຽວກັບເນື້ອໃນແລະວິທີການປ້ອງກັນໂລກເອດສ໌ ເພື່ອເຂົາເຈົ້າຈະສາມາດຖ່າຍທອດຄວາມຮູ້ໃຫ້ແກ່ຜູ້ອອກແຮງງານຜ່ານທາງແຜນງານສະໜອງຂໍ້ມູນຂ່າວສານແລະການສຶກສາອົບຮົມ;
- ໃຫ້ສາມາດປະເມີນແວດລ້ອມການເຮັດວຽກ ແລະ ລະບຸວິທີການເຮັດວຽກ ຫຼື ເງື່ອນໄຂການເຮັດວຽກທີ່ສາມາດປ່ຽນແປງ ຫຼື ປັບປຸງ ເພື່ອຫຼຸດຜ່ອນຄວາມສ່ຽງຂອງຜູ້ອອກແຮງງານຕໍ່ການຕິດເຊື້ອໂລກເອດສ໌;
- ໃຫ້ສາມາດຢັ້ງຢືນໄດ້ວ່າຜູ້ໃຊ້ແຮງງານສະໜອງ ຫຼື ບໍລະບັດຮັກສາແວດລ້ອມ ຫຼື ຂະບວນການເຮັດວຽກທີ່ປອດໄພແລະມີສຸຂະພາບສຳລັບຜູ້ອອກແຮງງານຫຼືບໍ່ ເຊິ່ງເອົາລວມທັງຂັ້ນຕອນການປະຖົມພະຍາບານຂັ້ນຕົ້ນທີ່ປອດໄພ;
- ຮັບປະກັນວ່າຂໍ້ມູນຂ່າວສານກ່ຽວກັບໂລກເອດສ໌ (ຖ້າມີ) ຈະໄດ້ຮັບການຮັກສາເປັນຄວາມລັບຢ່າງເຄັ່ງຄັດຄືກັນກັບຂໍ້ມູນທາງການແພດອື່ນໆທີ່ກ່ຽວຂ້ອງກັບຜູ້ອອກແຮງ

ງານ ແລະ ຈະໄດ້ຮັບການເປີດເຜີຍເວັ້ນເສຍແຕ່ໃນກໍລະນີທີ່ສອດຄ່ອງກັບລະບຽບປະຕິບັດຂອງອົງການແຮງງານສາກົນວ່າດ້ວຍການປົກປ້ອງຂໍ້ມູນສ່ວນໂຕຂອງຜູ້ອອກແຮງງານເທົ່ານັ້ນ;

- ສາມາດໃຫ້ຄໍາປຶກສາແກ່ຜູ້ອອກແຮງງານໃນດ້ານການລະບຸແລະຫຼຸດຜ່ອນບັນດາປັດໄຈສ່ຽງຕ່າງໆໃນຊີວິດສ່ວນໂຕຂອງເຂົາເຈົ້າ;
- ສາມາດສົ່ງຕໍ່ຜູ້ອອກແຮງງານໄປຮັບບໍລິການທາງການແພດທັງພາຍໃນແລະພາຍນອກສະຖານທີ່ເຮັດວຽກທີ່ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງເຂົາເຈົ້າໄດ້ຢ່າງມີປະສິດທິພາບ.

## 7.5 ການຝຶກອົບຮົມໃຫ້ແກ່ພະນັກງານກວດກາແຮງງານ/ໂຮງງານ

ອົງການທີ່ຮັບຜິດຊອບຄວນຮັບປະກັນວ່າ: ພະນັກງານກວດກາແຮງງານແລະໂຮງງານມີມາດຕະການພຽງພໍໃນການປະຕິບັດຕາມໜ້າທີ່ໃຫ້ການຊີ້ນໍາ, ບັງຄັບປະຕິບັດລະບຽບກົດໝາຍແລະໃຫ້ຄໍາປຶກສາໂດຍສະເພາະໃນດ້ານທີ່ພົວພັນກັບການປ້ອງກັນໂລກເອດສ໌ພາຍໃນວິສາຫະກິດ. ເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວ, ເຂົາເຈົ້າ ຄວນໄດ້ຮັບການຝຶກອົບຮົມສະເພາະໃນດ້ານຍຸດທະສາດວ່າດ້ວຍການປົກປ້ອງແລະປ້ອງກັນໂລກເອດສ໌ຢູ່ສະຖານທີ່ເຮັດວຽກ. ການຝຶກອົບຮົມດັ່ງກ່າວ ຄວນຈະລວມເອົາ:

- ການໃຫ້ຂໍ້ມູນຂ່າວສານກ່ຽວກັບບັນດາມາດຕະຖານແຮງງານສາກົນທີ່ກ່ຽວຂ້ອງໂດຍສະເພາະສົນທິສັນຍາວ່າດ້ວຍການຈໍາແນກ (ການຈ້າງງານແລະອາຊີບ), ສະບັບປີ 1958 (ເລກທີ 111) ຕະຫຼອດເຖິງບັນດາກົດໝາຍແລະລະບຽບການຕ່າງໆຂອງປະເທດ;
- ວິທີການປູກຈິດສໍານຶກເລື່ອງໂລກເອດສ໌ໃຫ້ແກ່ພາກສ່ວນຜູ້ອອກແຮງງານແລະພາກສ່ວນຄຸ້ມຄອງແຮງງານ;
- ວິທີການລວມເອົາຫົວຂໍ້ໂລກເອດສ໌ເຂົ້າໃນການສະຫຼຸບວຽກງານສຸຂະພາບແລະຄວາມປອດໄພແຮງງານຂອງເຂົາເຈົ້າ ແລະ ເຂົ້າໃນການຝຶກອົບຮົມຢູ່ສະຖານທີ່ເຮັດວຽກຢ່າງເປັນປົກກະຕິ;
- ວິທີການຊ່ວຍເຫຼືອຜູ້ອອກແຮງງານໃຫ້ສາມາດເຂົ້າເຖິງປະເພດອຸດໜູນປະກັນສັງຄົມທີ່ມີສະໜອງໃຫ້ (ເຊັ່ນ: ວິທີຕື່ມລາຍລະອຽດໃສ່ແບບຟອມຂໍອຸດໜູນປະກັນສັງຄົມ) ແລະ ເຂົ້າເຖິງການນໍາໃຊ້ບັນດາສິດທິທາງກົດໝາຍຂອງເຂົາເຈົ້າ;
- ວິທີການລະບຸການລະເມີດ ຫຼື ການຂາດການຈັດຕັ້ງປະຕິບັດສິດທິຂອງຜູ້ອອກແຮງງານໃນດ້ານທີ່ພົວພັນກັບສະຖານະຂອງການຕິດເຊື້ອໂລກເອດສ໌;

- ທັກສະໃນການເກັບກຳແລະວິເຄາະຂໍ້ມູນກ່ຽວກັບໂລກເອດສ໌ຢູ່ສະຖານທີ່ເຮັດວຽກ ໃນເວລາທີ່ມີການເກັບກຳຂໍ້ມູນສຳລັບການສຶກສາລະບາດວິທະຍາ ຫຼື ການສຶກສາຜົນກະທົບທາງສັງຄົມໂດຍປະຕິບັດໃຫ້ສອດຄ່ອງກັບລະບຽບປະຕິບັດສະບັບນີ້.

### 7.6 ການຝຶກອົບຮົມໃຫ້ແກ່ຜູ້ອອກແຮງງານທີ່ເຂົ້າໃກ້ເລືອດ ຫຼື ທາດແຫຼວຈາກຮ່າງກາຍມະນຸດ

ຜູ້ອອກແຮງງານທຸກຄົນ ຄວນໄດ້ຮັບການຝຶກອົບຮົມກ່ຽວກັບຂັ້ນຕອນຄວບຄຸມການຕິດເຊື້ອພາຍໃຕ້ສະພາບຂອງອຸປະຕິເຫດແລະການປະຖົມພະຍາບານຂັ້ນຕອນຢູ່ສະຖານທີ່ເຮັດວຽກ. ແຜນງານດັ່ງກ່າວນີ້ ຄວນລວມເອົາການຝຶກອົບຮົມກ່ຽວກັບ:

- ການໃຫ້ການປະຖົມພະຍາບານຂັ້ນຕົ້ນ;
- ມາດຕະການປ້ອງກັນທີ່ເປັນເອກະພາບ (Universal Precautions) ເພື່ອຫຼຸດຜ່ອນຄວາມສ່ຽງໃນການຈັບບາຍກັບເລືອດແລະທາດແຫຼວຈາກຮ່າງກາຍມະນຸດ (ລາຍລະອຽດ, ໃຫ້ເບິ່ງເອກະສານຊ້ອນທ້າຍ II);
- ການນຳໃຊ້ອຸປະກອນປ້ອງກັນ;
- ຂັ້ນຕອນທີ່ຖືກຕ້ອງທີ່ຈະຕ້ອງປະຕິບັດຕາມໃນກໍລະນີຕ້ອງຈັບບາຍເລືອດ ຫຼື ທາດແຫຼວຈາກຮ່າງກາຍມະນຸດ;
- ສິດທິຕໍ່ການໄດ້ຮັບຄ່າຊົດເຊີຍໃນກໍລະນີເກີດອຸປະຕິເຫດແຮງງານ,

ແລະໃຫ້ເນັ້ນໜັກວ່າ: ການດຳເນີນມາດຕະການປ້ອງກັນນັ້ນບໍ່ຈຳເປັນຕ້ອງກ່ຽວຂ້ອງກັບສະຖານະການຕິດເຊື້ອໂລກເອດສ໌ຕົວຈິງຂອງບຸກຄົນໃດໜຶ່ງ ຫຼື ສະຖານະທີ່ເຂົາເຈົ້າວ່າຜູ້ກ່ຽວຕິດເຊື້ອ.

## 8. ການກວດ

ບໍ່ຄວນດຳເນີນການກວດເລືອດຫາເຊື້ອໂລກເອດສ໌ຢູ່ສະຖານທີ່ເຮັດວຽກເວັ້ນເສຍແຕ່ກໍລະນີທີ່ມີການລະບຸເອົາໄວ້ໃນລະບຽບປະຕິບັດສະບັບນີ້. ການເຮັດແນວນັ້ນ ຖືເປັນເລື່ອງບໍ່ຈຳເປັນແລະຖືເປັນການສ່ຽງຕໍ່ການລະເມີດສິດທິມະນຸດແລະກຽດສັກສີຂອງຜູ້ອອກແຮງງານຄື: ຜົນຈາກການກວດອາດຈະຖືກເປີດເຜີຍ ຫຼື ຖືກນຳໃຊ້ໄປໃນທາງທີ່ຜິດ ແລະ ການທີ່ຜູ້ອອກແຮງງານຍິນຍອມໃຫ້ມີການກວດນັ້ນ ອາດຈະບໍ່ໄດ້ເປັນການຕັດສິນໃຈຢ່າງອິດສະຫຼະ ຫຼື ຕັ້ງຢູ່ບົນພື້ນຖານຄວາມເຂົ້າໃຈຕໍ່ທຸກຄວາມເປັນຈິງແລະຜົນກະທົບຈາກການກວດດັ່ງກ່າວສະເໜີໄປ. ແມ້ນແຕ່ການກວດຫາເຊື້ອໂລກເອດສ໌ທີ່ຈັດຂຶ້ນຢູ່ນອກສະຖານທີ່ເຮັດວຽກ ກໍ່ຍັງຄວນເປັນໄປຕາມຄວາມຍິນຍອມສະມັກໃຈຂອງຜູ້ຮັບການກວດໂດຍທີ່ຜູ້ກ່ຽວຕ້ອງໄດ້ຮັບແຈ້ງຂໍ້ມູນທຸກຢ່າງເປັນຢ່າງດີ ແລະ ການກວດຄວນປະຕິບັດໂດຍບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດເໝາະສົມເທົ່ານັ້ນພາຍໃຕ້ເງື່ອນໄຂແຫ່ງການຮັກສາເປັນຄວາມລັບຢ່າງເຄັ່ງຄັດ.

## 8.1 ຂໍ້ຫ້າມກ່ຽວກັບການບັນຈຸພະນັກງານແລະການຈ້າງງານ

ບໍ່ຄວນກຳນົດການກວດເລືອດຫາເຊື້ອໂລກເອດສ໌ເປັນເງື່ອນໄຂບັງຄັບໃນເວລາທີ່ມີການບັນຈຸພະນັກງານ ຫຼື ເປັນເງື່ອນໄຂຂອງການຕໍ່ການຈ້າງງານ. ການກວດສຸຂະພາບແບບປົກກະຕິທົ່ວໄປເຊັ່ນ: ການກວດຄວາມສົມບູນຂອງຮ່າງກາຍກ່ອນເລີ່ມວຽກ ຫຼື ການກວດສຸຂະພາບຂອງຜູ້ອອກແຮງງານທີ່ເຮັດເປັນປະຈຳປົກກະຕິ ບໍ່ຄວນຖືກລວມເຂົ້າໃນການກວດຫາເຊື້ອໂລກເອດສ໌ພາກບັງຄັບ.

## 8.2 ຂໍ້ຫ້າມກ່ຽວກັບການເຮັດປະກັນ

ກ. ບໍ່ຄວນກຳນົດການກວດຫາເຊື້ອໂລກເອດສ໌ເປັນເງື່ອນໄຂຂອງການມີສິດປະກັນຕົນພາຍໃຕ້ລະບົບປະກັນສັງຄົມ, ນະໂຍບາຍປະກັນທົ່ວໄປ, ລະບົບປະກັນໃນສາຍອາຊີບແລະການປະກັນສຸຂະພາບ.

ຂ. ບໍລິສັດປະກັນ ບໍ່ຄວນຮຽກຮ້ອງໃຫ້ມີການກວດຫາເຊື້ອໂລກເອດສ໌ກ່ອນທີ່ຈະຕົກລົງສະໜອງການປົກຄຸມໃຫ້ແກ່ສະຖານທີ່ເຮັດວຽກໃດໜຶ່ງ. ເຂົາເຈົ້າ ອາດຈະໄລ່ເບິ່ງຕົ້ນທຶນ, ຄາດຄະເນລາຍຮັບແລະການຄິດໄລ່ຄະນິດສາດປະກັນໄພຂອງເຂົາເຈົ້າໄດ້ຈາກຂໍ້ມູນດ້ານລະບາດວິທະຍາທີ່ມີຕໍ່ປະຊາກອນທົ່ວໄປ.

ຄ. ຜູ້ໃຊ້ແຮງງານ ບໍ່ຄວນອຳນວຍຄວາມສະດວກໃຫ້ແກ່ການກວດໃດໆກໍ່ຕາມທີ່ມີຈຸດປະສົງຮັບໃຊ້ວຽກການເຮັດປະກັນ ແລະ ຂໍ້ມູນຂ່າວສານທຸກຢ່າງທີ່ຜູ້ໃຊ້ແຮງງານມີຢູ່ແລ້ວ ກໍ່ຄວນຮັກສາເປັນຄວາມລັບ.

## 8.3 ການເຝົ້າລະວັງທາງລະບາດວິທະຍາ

ອາດດຳເນີນການຕິດຕາມເຝົ້າລະວັງການແຜ່ລະບາດຂອງເຊື້ອໂລກເອດສ໌ ເພື່ອໃຫ້ຂໍ້ມູນທາງລະບາດວິທະຍາແບບປິດລັບຂຶ້ນພາຍໃນສະຖານທີ່ເຮັດວຽກໄດ້ຖ້າເປັນການປະຕິບັດຕາມຫຼັກການແຫ່ງຈັນຍາບັນໃນການ ຄົ້ນຄວ້າ-ວິໄຈທາງວິທະຍາສາດ, ຈັນຍາບັນອາຊີບ, ການປົກປ້ອງສິດທິຂອງສ່ວນບຸກຄົນແລະຫຼັກການແຫ່ງການຮັກສາຄວາມລັບ. ໃນກໍລະນີທີ່ມີການຄົ້ນຄວ້າໃນລັກສະນະນີ້, ຜູ້ອອກແຮງງານແລະຜູ້ໃຊ້ແຮງງານ ຄວນໄດ້ຮັບການຂໍຄຳປຶກສາ ແລະ ໄດ້ຮັບແຈ້ງການວ່າ: ຈະມີການຄົ້ນຄວ້າໃນລັກສະນະດັ່ງກ່າວເກີດຂຶ້ນ. ຂໍ້ມູນຂ່າວສານທີ່ໄດ້ຮັບ ບໍ່ຄວນຖືກນຳໃຊ້ເພື່ອຈຳແນກບຸກຄົນ ຫຼື ກຸ່ມຄົນ. ການກວດຫາເຊື້ອໂລກເອດສ໌ ຈະບໍ່ຖືວ່າເປັນການກວດແບບປິດລັບຖ້າມີເຫດຜົນທີ່ເຊື່ອໄດ້ວ່າ: ຜົນຈາກການກວດ ຈະເຮັດໃຫ້ຜູ້ຕິດເຊື້ອໂລກເອດສ໌ມີສະຖານະພາບຕ່ຳລົງ.

## 8.4. ການກວດແບບສະມັກໃຈ

ອາດຈະມີບາງສະພາບທີ່ຜູ້ອອກແຮງງານຕ້ອງການຢາກກວດຫາການຕິດເຊື້ອໂລກເອດສ໌ ທີ່ເປັນພາກສ່ວນໜຶ່ງແຜນງານກວດແບບສະມັກໃຈ. ຕາມປົກກະຕິແລ້ວ, ການກວດແບບສະມັກໃຈນີ້ ຈະຖືກຈັດຂຶ້ນທີ່ຫ້ອງການບໍລິການສາທາລະນະສຸກຊຸມຊົນ ບໍ່ແມ່ນຢູ່ສະຖານທີ່ເຮັດວຽກ. ບ່ອນໃດທີ່ມີເງື່ອນໄຂສະດວກດ້ານບໍລິການທາງການແພດພຽງພໍ, ກໍ່ອາດຈະຈັດໃຫ້ມີການກວດໃນລັກສະນະນີ້ ໄດ້ຕາມການຮ້ອງຂໍ ຫຼື ເອກະສານແຈ້ງຄວາມຍິນຍອມຂອງຜູ້ອອກແຮງງານ ພ້ອມກັບມີເອກະສານທີ່ເປັນຄຳແນະນຳຈາກຜູ້ຕາງໜ້າຂອງຜູ້ອອກແຮງງານຖ້າມີການຂໍໃຫ້ປະກອບເພີ່ມໃສ່. ການກວດແບບສະມັກໃຈນີ້ ຄວນເຮັດໂດຍບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດເໝາະສົມເທົ່ານັ້ນແລະຕ້ອງປະຕິບັດຢ່າງເຄັ່ງຄັດຕາມເງື່ອນໄຂແຫ່ງການຮັກສາຄວາມລັບແລະເງື່ອນໄຂການເປີດເຜີຍຜົນການກວດ. ການໃຫ້ຄຳປຶກສາທີ່ມີຄວາມລະອຽດອ່ອນດ້ານບົດບາດຍິງ-ຊາຍກ່ອນແລະຫຼັງກວດ ຄວນປະກອບເປັນພາກສ່ວນຈຳເປັນທີ່ຂາດບໍ່ໄດ້ໃນຂັ້ນຕອນການດຳເນີນການກວດແຕ່ລະຄັ້ງ ເຊິ່ງການໃຫ້ຄຳປຶກສາໃນລັກສະນະດັ່ງກ່າວ ຈະອຳນວຍຄວາມສະດວກໃຫ້ແກ່ການເຂົ້າໃຈລັກສະນະແລະຈຸດປະສົງຂອງການກວດຫາເຊື້ອໂລກເອດສ໌, ຈຸດດີແລະຈຸດອ່ອນຂອງການກວດ, ແລະ ຜົນກະທົບຂອງຜົນກວດທີ່ມີຕໍ່ຜູ້ອອກແຮງງານ.

## 8.5. ການກວດແລະການປິ່ນປົວຫຼັງມີການຈັບບາຍເຊື້ອເນື່ອງຈາກການເຮັດວຽກ

ກ. ໃນກໍລະນີມີຄວາມສ່ຽງຕໍ່ການຈັບບາຍເລືອດ, ທາດແຫຼວ ຫຼື ເນື້ອເຍື່ອຈາກຮ່າງກາຍມະນຸດ, ສະຖານທີ່ເຮັດວຽກ ຄວນມີຂັ້ນຕອນເອົາໄວ້ໃນລະບົບເພື່ອຄຸ້ມຄອງຄວາມສ່ຽງຕໍ່ການຕິດເຊື້ອໃນລັກສະນະດັ່ງກ່າວ ຕະຫຼອດເຖິງອຸປະຕິເຫດແຮງງານແບບອື່ນໆ.

ຂ. ພາຍຫຼັງທີ່ຜູ້ອອກແຮງງານໄດ້ຈັບບາຍສິ່ງທີ່ຕິດເຊື້ອ (ບໍ່ວ່າຈະເປັນເລືອດ, ທາດແຫຼວ ແລະເນື້ອເຍື່ອຈາກຮ່າງກາຍມະນຸດ) ຢູ່ສະຖານທີ່ເຮັດເຊິ່ງເຮັດໃຫ້ມີຄວາມສ່ຽງຕໍ່ການຕິດເຊື້ອ, ຜູ້ກ່ຽວ ຄວນໄດ້ຮັບການໃຫ້ຄຳປຶກສາທັນທີເພື່ອຮັບມືກັບເຫດການທີ່ເກີດຂຶ້ນ, ເພື່ອໃຫ້ຮູ້ກ່ຽວກັບຜົນຕາມມາທາງການແພດ, ຄວາມຕ້ອງການຢາກກວດຫາການຕິດເຊື້ອໂລກເອດສ໌ ແລະ ກ່ຽວກັບການສະໜອງການປິ່ນປົວເພື່ອປ້ອງກັນການຕິດເຊື້ອຫຼັງການຈັບບາຍ, ແລະ ຄວນຖືກສົ່ງຕໍ່ໄປຍັງສະຖານທີ່ບໍລິການປິ່ນປົວທາງການແພດ ຫຼື ໂຮງໝໍທີ່ເໝາະສົມ. ພາຍຫຼັງດຳເນີນການປະເມີນຄວາມສ່ຽງສຳເລັດແລ້ວ, ຄວນສະໜອງທິດນຳເພີ່ມເຕີມໃຫ້ແກ່ຜູ້ອອກແຮງງານໃນດ້ານທີ່ກ່ຽວຂ້ອງກັບສິດທິທາງກົດໝາຍຂອງເຂົາເຈົ້າເຊິ່ງລວມເອົາທັງສິດຕໍ່ການໄດ້ຮັບຄ່າຊົດເຊີຍ ຫຼື ຂັ້ນຕອນທີ່ຕ້ອງໄປຜ່ານເພື່ອຂໍການຊົດເຊີຍ.

## 9. ການເບິ່ງແຍງແລະການຊ່ວຍເຫຼືອ

ຄວາມສາມັກຄີ, ການເບິ່ງແຍງແລະການຊ່ວຍເຫຼືອ ຖືເປັນອົງປະກອບສຳຄັນຍິ່ງທີ່ຄວນໃຊ້ເປັນທິດຊີ້ນຳການແກ້ໄຂບັນຫາໂລກເອດສ໌ຢູ່ສະຖານທີ່ເຮັດວຽກ. ຄວນສ້າງບັນດາກົນໄກຕ່າງໆຂຶ້ນເພື່ອຊຸກຍູ້ໃຫ້ມີການເປີດໃຈໃຫ້ກວ້າງ, ຍອມຮັບ ແລະ ຊ່ວຍເຫຼືອຜູ້ອອກແຮງງານທີ່ເປີດເຜີຍສະຖານະການຕິດເຊື້ອໂລກເອດສ໌ຂອງເຂົາເຈົ້າ, ແລະຮັບປະກັນວ່າ: ຜູ້ອອກແຮງງານທີ່ຕິດເຊື້ອ ຈະບໍ່ຖືກຈຳແນກ ຫຼື ເຮັດໃຫ້ຮູ້ສຶກອັບອາຍ. ເພື່ອບັນເທົາຜົນກະທົບຈາກການແຜ່ລະບາດຂອງໂລກເອດສ໌ຢູ່ສະຖານທີ່ເຮັດວຽກ, ສະຖານທີ່ເຮັດວຽກ ຄວນພະຍາຍາມສູ້ຊົນສະໜອງການໃຫ້ຄຳປຶກສາແລະການຊ່ວຍເຫຼືອທາງສັງຄົມໃນຮູບແບບຕ່າງໆແກ່ຜູ້ອອກແຮງງານທີ່ຕິດເຊື້ອແລະໄດ້ຮັບຜົນກະທົບຈາກໂລກເອດສ໌. ສະຖານທີ່ເຮັດວຽກທີ່ມີເງື່ອນໄຂສະດວກດ້ານບໍລິການປິ່ນປົວສຸຂະພາບ ກໍ່ຄວນສະໜອງການປິ່ນປົວທີ່ເໝາະສົມໃຫ້ແກ່ຜູ້ຕິດເຊື້ອ. ໃນກໍລະນີບໍ່ມີບໍລິການປິ່ນປົວສຸຂະພາບພາຍໃນສະຖານທີ່ເຮັດວຽກ ກໍ່ຄວນແຈ້ງໃຫ້ຜູ້ອອກແຮງງານຮູ້ກ່ຽວກັບສະຖານທີ່ຮັບບໍລິການປິ່ນປົວທີ່ມີຢູ່ພາຍນອກ. ການເຊື່ອມສານລະຫວ່າງພາຍໃນແລະພາຍນອກສະຖານທີ່ເຮັດວຽກຄືໃນລັກສະດັ່ງກ່າວນີ້ ມີຈຸດດີໃນການເຂົ້າເຖິງໄປໄກກວ່າໂຕຜູ້ອອກແຮງງານຈົນເຖິງຂັ້ນກວມເອົາຄອບຄົວຂອງເຂົາເຈົ້າໂດຍສະເພາະເດັກນ້ອຍ. ການຮ່ວມມືກັບລັດຖະບານ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ, ອົງການຈັດຕັ້ງຂອງທັງສອງຝ່າຍແລະບັນດາພາກສ່ວນກ່ຽວຂ້ອງ ຍັງຈະຮັບປະກັນໃຫ້ໄດ້ການສະໜອງບໍລິການທີ່ມີປະສິດທິພາບແລະປະຫຍັດຕົ້ນທຶນ.

### 9.1. ຄວາມເທົ່າທຽມກັບການເຈັບປ່ວຍຂັ້ນຮ້າຍແຮງຈາກພະຍາດອື່ນໆ

ກ. ການຕິດເຊື້ອໂລກເອດສ໌ ແລະ ການເປັນໂລກເອດສ໌ຂັ້ນໜັກ ຄວນໄດ້ຮັບການຄຸ້ມຄອງຢູ່ໃນສະຖານທີ່ເຮັດວຽກບໍ່ຕ່າງຫຍັງຈາກການເຈັບເປັນ ຫຼື ອາການເຈັບປ່ວຍຂັ້ນຮ້າຍແຮງຈາກພະຍາດອື່ນໆ.

ຂ. ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ຄວນໄດ້ຮັບການປະຕິບັດຕໍ່ບໍ່ຕ່າງຫຍັງຈາກຜູ້ອອກແຮງງານທີ່ເຈັບເປັນຂັ້ນຮ້າຍແຮງຈາກພະຍາດອື່ນໆທັງໃນດ້ານປະເພດອຸດໜູນ, ການໃຫ້ຄ່າຊົດເຊີຍແຮງງານ ແລະ ດ້ານການປັບປຸງແບບສົມເຫດສົມຜົນ/ການເອື້ອອຳນວຍຕາມຄວາມເໝາະສົມ (reasonable accomodation).

ຄ. ຕະຫຼອດໄລຍະທີ່ຜູ້ອອກແຮງງານຍັງມີສຸຂະພາບແຂງແຮງໂດຍສາມາດເຮັດວຽກທີ່ເໝາະສົມໄດ້, ເຂົາເຈົ້າ ຄວນໄດ້ຮັບສິດຕໍ່ຄວາມໝັ້ນຄົງຂອງວຽກຕາມປົກກະຕິ ແລະ ສິດຕໍ່ໂອກາດໂອນຍ້າຍແລະຄວາມກ້າວໜ້າໃນການເຮັດວຽກ.

## 9.2. ການໃຫ້ຄຳປຶກສາ

ກ. ຜູ້ໃຊ້ແຮງງານ ຄວນຊຸກຍູ້ໃຫ້ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ໄປຮັບບໍລິຫານໃຫ້ຄຳປຶກສາທີ່ເປັນການຊ່ວຍເຫຼືອຢູ່ພາຍນອກວິສາຫະກິດ; ໃນກໍລະນີວິສາຫະກິດມີເງື່ອນໄຂສະໜອງການໃຫ້ຄຳປຶກສາແບບສະເພາະແລະມີການຮັກສາເປັນຄວາມລັບ, ຜູ້ອອກແຮງງານທີ່ຕິດເຊື້ອກໍ່ອາດຈະນຳໃຊ້ບໍລິການໃຫ້ປຶກສາຈາກໜ່ວຍງານສຸຂະພາບແລະຄວາມປອດໄພແຮງງານ ຫຼື ແຜນງານຊ່ວຍເຫຼືອອື່ນໆທີ່ມີໃນສະຖານທີ່ເຮັດວຽກ.

ຂ. ເພື່ອໃຫ້ເກີດຜົນສັກສິດຕໍ່ບໍລິການໃຫ້ຄຳປຶກສາ, ຜູ້ໃຊ້ແຮງງານ ຄວນພິຈາລະນາດຳເນີນບັນດາມາດຕະການດັ່ງຕໍ່ໄປນີ້:

- ລະບຸມືອາຊີບ, ກຸ່ມຊ່ວຍເຫຼືອຕົນເອງແລະບັນດາອົງການໃຫ້ບໍລິການພາຍໃນຊຸມຊົນ ຫຼື ທ້ອງຖິ່ນ ໂດຍເປັນພາກສ່ວນທີ່ມີຄວາມຊ່ຽວຊານດ້ານການໃຫ້ຄຳປຶກສາກ່ຽວກັບໂລກເອດສ໌ ແລະ ການປິ່ນປົວໂລກເອດສ໌ .
- ລະບຸອົງການຈັດຕັ້ງລະດັບຊຸມຊົນ (ທັງທີ່ມີຄຸນລັກສະນະດ້ານການແພດແລະດ້ານອື່ນທີ່ບໍ່ແມ່ນການແພດ) ເຊິ່ງອາດຈະເປັນປະໂຫຍດໃຫ້ແກ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌.
- ແນະນຳຜູ້ອອກແຮງງານໃຫ້ຕິດຕໍ່ກັບໝໍ ຫຼື ຜູ້ສະໜອງບໍລິການປິ່ນປົວສຸຂະພາບທີ່ມີຄວາມຮູ້ຄວາມສາມາດຂອງຜູ້ກ່ຽວເພື່ອໄປຮັບການປະເມີນສຸຂະພາບເບື້ອງຕົ້ນ ຫຼື ໄປຮັບການປິ່ນປົວຫາກໄດ້ດຳເນີນການປິ່ນປົວໄປແດ່ແລ້ວ ຫຼື ຊ່ວຍຜູ້ອອກແຮງງານລະບຸຜູ້ສະໜອງບໍລິການປິ່ນປົວສຸຂະພາບທີ່ມີຄວາມຮູ້ຄວາມສາມາດ ຖ້າຜູ້ກ່ຽວຍັງບໍ່ທັນມີເທື່ອ.

ຄ. ຜູ້ໃຊ້ແຮງງານ ຄວນໃຫ້ເວລາຢ່າງພຽງພໍແກ່ຜູ້ອອກແຮງງານເພື່ອໄປຮັບບໍລິການໃຫ້ຄຳປຶກສາແລະການປິ່ນປົວໂລກເອດສ໌ຕາມເງື່ອນໄຂຂັ້ນຕ່ຳຂອງປະເທດ.

ງ. ຜູ້ອອກແຮງງານ ຄວນໄດ້ຮັບບໍລິການໃຫ້ຄຳປຶກສາໂດຍບໍ່ໃຫ້ເສຍຄ່າໃຊ້ຈ່າຍແລະມີດັດປັບໃຫ້ເໝາະສົມກັບຄວາມຕ້ອງການແລະສະພາບເງື່ອນໄຂທີ່ແຕກຕ່າງກັນລະຫວ່າງແມ່ຍິງກັບຜູ້ຊາຍ. ອາດຈະເປັນເລື່ອງທີ່ເໝາະສົມຖ້າມີການປະສານງານກັບກັບພາກລັດ, ຜູ້ອອກແຮງງານແລະອົງການຈັດຕັ້ງຂອງເຂົາເຈົ້າຕະຫຼອດເຖິງບັນດາພາກສ່ວນກ່ຽວຂ້ອງຕ່າງໆເພື່ອຮ່ວມກັນລະບຸແລະສະໜອງການຊ່ວຍເຫຼືອໃນລັກສະນະດັ່ງກ່າວ.

ຈ. ຖ້າໄດ້ຮັບການຮ້ອງຂໍ, ຜູ້ຕາງໜ້າຂອງຜູ້ອອກແຮງງານ ຄວນໃຫ້ການຊ່ວຍເຫຼືອແກ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ເພື່ອຂໍຮັບບໍລິການໃຫ້ຄຳປຶກສາຈາກມືອາຊີບ.

ສ. ບໍລິການໃຫ້ຄຳປຶກສາ ຄວນແຈ້ງໃຫ້ຜູ້ອອກແຮງງານທຸກຄົນຮູ້ກ່ຽວກັບສິດທິແລະປະເພດອຸດໜູນຕ່າງໆທີ່ເຂົາເຈົ້າຈະໄດ້ຮັບຈາກລະບົບປະກັນສັງຄົມພາກບັງຄັບແລະລະບົບ

ປະກັນຕົນຕາມສາຍອາຊີບແລະບັນດາແຜນງານສົ່ງເສີມທັກສະຊີວິດອື່ນໆທີ່ອາດຈະຊ່ວຍຜູ້ອອກແຮງງານໃນການຈັດການກັບບັນຫາໂລກເອດສ໌.

ຂ. ໃນກໍລະນີມີຜູ້ອອກແຮງງານໄປຈັບບາຍສິ່ງນຳເຊື້ອໂລກເອດສ໌ ເນື່ອງຈາກການເຮັດວຽກ, ຜູ້ໃຊ້ແຮງງານ ຄວນໃຫ້ຜູ້ອອກແຮງງານໄດ້ລາພັກເພື່ອໄປຮັບບໍລິການໃຫ້ຄຳປຶກສາ.

## 9.3. ບໍລິການສຸຂະພາບແຮງງານແລະບໍລິການສຸຂະພາບດ້ານອື່ນໆ

ກ. ຜູ້ໃຊ້ແຮງງານຈຳນວນໜຶ່ງ ອາດຈະຢູ່ໃນຖານະທີ່ສາມາດຊ່ວຍເຫຼືອຜູ້ອອກແຮງງານໃຫ້ສາມາດເຂົ້າເຖິງຢາຕ້ານໄວຣັດສ໌ໄດ້. ໃນກໍລະນີທີ່ມີບໍລິການດ້ານສຸຂະພາບຢູ່ສະຖານທີ່ເຮັດວຽກ, ພາຍໃຕ້ການຮ່ວມມືກັບພາກລັດແລະທຸກພາກສ່ວນກ່ຽວຂ້ອງ, ບໍລິການເຫຼົ່ານັ້ນຄວນສະໜອງບໍລິການດ້ານສຸຂະພາບໃນຂອບເຂດທີ່ກວ້າງເທົ່າທີ່ສາມາດເຮັດໄດ້ເພື່ອປ້ອງກັນແລະຄຸ້ມຄອງບັນຫາໂລກເອດສ໌ ແລະ ໃຫ້ການຊ່ວຍເຫຼືອແກ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌.

ຂ. ບໍລິການເຫຼົ່ານີ້ ຄວນລວມເອົາການສະໜອງຢາຕ້ານໄວຣັດສ໌, ການປິ່ນປົວເພື່ອບັນເທົາອາການເຈັບປ່ວຍຈາກການຕິດເຊື້ອໂລກເອດສ໌, ການໃຫ້ຄຳປຶກສາດ້ານໂພສະນາການແລະອາຫານເສີມ, ການຫຼຸດຜ່ອນຄວາມເຄັ່ງຄຽດແລະການປິ່ນປົວໂລກແຊກຊ້ອນທີ່ພົບເຫັນທົ່ວໄປເຊິ່ງໃນນັ້ນລວມທັງ STIs ແລະ ວັນນະໂລກ.

## 9.4 ການເຊື່ອມສານກັບກຸ່ມກຸ່ມຊ່ວຍເຫຼືອຕົນເອງແລະກຸ່ມຕ່າງໆໃນລະດັບຊຸມຊົນ

ຕາມທີ່ເຫັນວ່າເໝາະສົມ, ຜູ້ໃຊ້ແຮງງານ, ອົງການຈັດຕັ້ງຂອງຜູ້ອອກແຮງງານແລະບຸກຄະລາກອນດ້ານສຸຂະພາບແຮງງານ ຄວນອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງກຸ່ມຊ່ວຍເຫຼືອຕົນເອງຂຶ້ນພາຍໃນວິສາຫະກິດ ຫຼື ການສົ່ງຕໍ່ຜູ້ອອກແຮງງານທີ່ໄດ້ຮັບຜົນກະທົບຈາກໂລກເອດສ໌ ໄປຍັງກຸ່ມຊ່ວຍເຫຼືອຕົນເອງແລະອົງການຈັດຕັ້ງພາຍໃນຊຸມຊົນທ້ອງຖິ່ນທີ່ໃຫ້ການຊ່ວຍເຫຼືອແກ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌.

## 9.5 ອຸດໜູນປະເພດຕ່າງໆ

ກ. ລັດຖະບານໂດຍການຂໍຄຳປຶກສາກັບບັນດາຄູ່ຮ່ວມງານທາງສັງຄົມ ຄວນຮັບປະກັນວ່າ: ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ຈະໄດ້ຮັບປະເພດອຸດໜູນຕ່າງໆທີ່ກຳນົດໄວ້ພາຍໃຕ້ກົດໝາຍແລະລະບຽບການແຫ່ງຊາດໃນລັກສະນະທີ່ບໍ່ຕ່າງຫຍັງຈາກຜູ້ອອກແຮງງານທີ່ເຈັບປ່ວຍຂັ້ນຮ້າຍແຮງເນື່ອງຈາກພະຍາດອື່ນໆ. ເຂົາເຈົ້າ ຍັງຄວນສຶກສາຄົ້ນຄວ້າຫາອຸດໜູນປະເພດໃໝ່ທີ່ມີລັກສະນະຍືນຍົງເວົ້າສະເພາະຄືປະເພດອຸດໜູນທີ່ແກ້ໄຂລັກສະນະການທຳລາຍໄປໜ້າແລະທຳມະຊາດບໍ່ແນ່ນອນຂອງໂລກໂລກເອດສ໌.

ຂ. ຜູ້ໃຊ້ແຮງງານພ້ອມດ້ວຍອົງການຈັດຕັ້ງຂອງເຂົາເຈົ້າແລະຂອງຜູ້ອອກແຮງງານ ຄວນພະຍາຍາມສະເໜີໃຫ້ລັດຖະບານດັດປັບບັນດາກົນໄກສະໜອງປະເພດອຸດໜູນທີ່ມີຢູ່ໃຫ້ເໝາະສົມກັບຄວາມຕ້ອງການຂອງຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ເຊິ່ງໃນນັ້ນລວມທັງລະບົບໃຫ້ເງິນຊ່ວຍໜູນຄ່າແຮງງານແກ່ຜູ້ອອກແຮງງານເຫຼົ່ານັ້ນ.

## 9.6 ການປົກຄຸມຂອງການປະກັນສັງຄົມ

ກ. ລັດຖະບານ, ຜູ້ໃຊ້ແຮງງານແລະອົງການຈັດຕັ້ງຂອງຜູ້ອອກແຮງງານ ຄວນດຳເນີນບັນດາບາດກ້າວຕ່າງໆທີ່ຈຳເປັນເພື່ອຮັບປະກັນວ່າ: ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ແລະຄອບຄົວຂອງເຂົາເຈົ້າ ຈະບໍ່ຖືກຕັດຂາດຈາກການປົກປ້ອງແບບເຕັມສ່ວນແລະປະເພດອຸດໜູນຕ່າງໆທີ່ມີສະໜອງໃຫ້ພາຍໃຕ້ລະບົບປະກັນສັງຄົມແລະລະບົບປະກັນຕົນຕາມສາຍອາຊີບ. ຫຼັກການນີ້ ຍັງຄວນນຳໃຊ້ກັບຜູ້ອອກແຮງງານພ້ອມດ້ວຍຄອບຄົວເຊິ່ງມາຈາກກຸ່ມອາຊີບ ຫຼື ກຸ່ມສັງຄົມທີ່ເຫັນວ່າມີຄວາມສ່ຽງຕໍ່ການຕິດເຊື້ອໂລກເອດສ໌.

ຂ. ບັນດາແຜນງານແລະລະບົບປະກັນສັງຄົມເຫຼົ່ານີ້ ຄວນສະໜອງປະເພດອຸດໜູນໃຫ້ແກ່ຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ ທີ່ບໍ່ຕ່າງຫຍັງກັບປະເພດອຸດໜູນທີ່ມີສະໜອງໃຫ້ແກ່ຜູ້ອອກແຮງງານເຈັບປ່ວຍຂັ້ນຮ້າຍແຮງຈາກພະຍາດອື່ນໆ.

## 9.7 ຄວາມເປັນສ່ວນຕົວແລະການຮັກສາຄວາມລັບ

ກ. ລັດຖະບານ, ບໍລິສັດປະກັນແລະຜູ້ໃຊ້ແຮງງານ ຄວນສ້າງຮັບປະກັນວ່າ: ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບບໍລິການໃຫ້ຄຳປຶກສາ, ການເບິ່ງແຍງ, ການປິ່ນປົວແລະການຮັບອຸດໜູນປະເພດຕ່າງໆຂອງຜູ້ອອກແຮງງານ ແມ່ນຖືກຮັກສາເປັນຄວາມລັບຄືກັນກັບປະຫວັດຂໍ້ມູນທາງການແພດຂອງເຂົາເຈົ້າ ໂດຍອະນຸຍາດໃຫ້ມີການເຂົ້າເຖິງໄດ້ສະເພາະແຕ່ກໍລະນີທີ່ປະຕິບັດຕາມບົດສະເໜີແນະວ່າດ້ວຍອົງການບໍລິການສຸຂະພາບແຮງງານຂອງລັດ, ສະບັບປີ 1985 (ເລກທີ 171) ເທົ່ານັ້ນ.

ຂ. ບຸກຄົນທີສາມເຊັ່ນ: ຜູ້ຈັດການກອງທຶນແລະຜູ້ບໍລິຫານລະບົບປະກັນສັງຄົມແລະລະບົບປະກັນຕົນຕາມສາຍອາຊີບ ຄວນຮັກສາຂໍ້ມູນຂ່າວສານທຸກຢ່າງກ່ຽວກັບການຕິດເຊື້ອໂລກເອດສ໌ຂອງຜູ້ອອກແຮງງານໄວ້ເປັນຄວາມລັບ ຄືກັນກັບຂໍ້ມູນທາງການແພດຂອງເຂົາເຈົ້າ ໂດຍປະຕິບັດຕາມລະບຽບປະຕິບັດຂອງອົງການແຮງງານສາກົນວ່າດ້ວຍການຄຸ້ມຄອງຂໍ້ມູນສ່ວນຕົວຂອງຜູ້ອອກແຮງງານ.

## 9.8 ແຜນງານຊ່ວຍເຫຼືອຜູ້ອອກແຮງງານແລະຄອບຄົວ

ກ. ເມື່ອພິຈາລະນາເບິ່ງຈາກລັກສະນະຂອງພະຍາດຕິດແປດດັ່ງກ່າວນີ້ແລ້ວ, ອາດຈະຈຳເປັນຕ້ອງສ້າງ ຫຼື ຂະຫຍາຍແຜນງານຊ່ວຍເຫຼືອຜູ້ອອກແຮງງານຕາມຄວາມຄວາມເໝາະສົມເພື່ອລວມເອົາຂອບເຂດບໍລິການຕ່າງໆສຳລັບຜູ້ອອກແຮງງານ ກໍ່ຄື ສຳລັບສາມະຊິກພາຍໃນຄອບຄົວເຂົາເຈົ້າ ແລະ ເພື່ອຊ່ວຍເຫຼືອສາມະຊິກຄອບຄົວຂອງເຂົາເຈົ້າ. ການດຳເນີນງານເລື່ອງນີ້ ຄວນຂໍຄຳປຶກສາກັບຜູ້ອອກແຮງງານແລະຜູ້ຕາງໜ້າຂອງເຂົາເຈົ້າ, ແລະຄວນຈັດຕັ້ງປະຕິບັດໂດຍການປະສານສົມທົບກັບລັດຖະບານແລະພາກສ່ວນກ່ຽວຂ້ອງອື່ນໆອີງຕາມຊັບພະຍາກອນແລະຄວາມຕ້ອງການຕົວຈິງ.

ຂ. ແຜນງານຊ່ວຍເຫຼືອໃນລັກສະນະດັ່ງກ່າວ ຄວນຮັບຮູ້ວ່າ: ໂດຍທົ່ວໄປແລ້ວແມ່ຍິງ ເປັນຜູ້ທີ່ມີບົດບາດສຳຄັນໃນການເບິ່ງແຍງຜູ້ທີ່ເຈັບປ່ວຍຍ້ອນໂລກເອດສ໌. ແຜນງານເຫຼົ່ານັ້ນ ຍັງຄວນຮັບຮູ້ຄວາມຕ້ອງການສະເພາະຂອງແມ່ມານ. ນອກຈາກນີ້, ແຜນງານຊ່ວຍເຫຼືອໃນລັກສະນະດັ່ງກ່າວ ຍັງຄວນຕອບສະໜອງຄວາມຕ້ອງການຂອງເດັກນ້ອຍຜູ້ທີ່ເສຍພໍ່ແມ່ໃຫ້ກັບໂລກເອດສ໌, ຫຼັງຈາກນັ້ນເຂົາເຈົ້າອາດຈະປະລະການຮຽນ, ຖືກສະພາບບັງຄັບໃຫ້ຕ້ອງເຮັດວຽກ, ແລະຍິ່ງມີຄວາມສ່ຽງຕໍ່ການຖືກກົດຂີ່ຂູດຮີດທາງເພດ. ແຜນງານຊ່ວຍເຫຼືອເຫຼົ່ານີ້ອາດຈະເປັນແຜນງານທີ່ສະໜອງໃຫ້ພາຍໃນສະຖານທີ່ເຮັດວຽກ, ຫຼື ບັນດາວິສາຫະກິດອາດຈະລວມໂຕກັນສະໜັບສະໜູນແຜນງານຊ່ວຍເຫຼືອໃນລັກສະນະດັ່ງກ່າວ ຫຼື ອາດມອບເໝົາໃຫ້ວິສາຫະກິດເອກະລາດມາເປັນຜູ້ສະໜອງແຜນງານຊ່ວຍເຫຼືອໃນລັກສະນະດັ່ງກ່າວໃຫ້ແກ່ຜູ້ອອກແຮງງານພາຍໃນວິສາຫະກິດຂອງພວກຕົນກໍ່ໄດ້.

ຄ. ແຜນງານຊ່ວຍເຫຼືອຄອບຄົວ ອາດຈະລວມເອົາ:

- ການອະນຸຍາດໃຫ້ລາພັກດ້ວຍຄວາມເຫັນອົກເຫັນໃຈ.
- ການເຊີນເຂົາເຈົ້າໃຫ້ເຂົ້າມີສ່ວນຮ່ວມໃນບັນດາແຜນງານສະໜອງຂໍ້ມູນຂ່າວສານແລະການສຶກສາອົບຮົມ.
- ບໍລິການສົ່ງຕໍ່ໃຫ້ກຸ່ມຊ່ວຍເຫຼືອຜູ້ຕິດເຊື້ອ ເຊິ່ງລວມທັງກຸ່ມຊ່ວຍເຫຼືອຕົນເອງ;
- ການຊ່ວຍເຫຼືອຜູ້ອອກແຮງງານ ຫຼື ສາມະຊິກຄອບຄົວຂອງເຂົາເຈົ້າໃຫ້ມີວຽກອື່ນເຮັດພາຍໃຕ້ເງື່ອນໄຂທີ່ວ່າວຽກດັ່ງກ່າວຕ້ອງບໍ່ແຊກແຊງກັບການຮຽນ;
- ມາດຕະການສະເພາະເຊັ່ນ: ການສະໜັບສະໜັບສະໜູນການສຶກສາໃນລະບົບ, ການຝຶກອົບຮົມວິຊາຊີບແລະການຝຶກງານເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງເດັກແລະໄວໜຸ່ມທີ່ພໍ່ແມ່ເສຍຊີວິດຈາກໂລກເອດສ໌;
- ຈັດໃຫ້ມີການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງທັງໝົດກັບບັນດາອົງການຈັດຕັ້ງລະດັບຊຸມຊົນຕະຫຼອດເຖິງໂຮງຮຽນທີ່ລູກຂອງຜູ້ອອກແຮງງານຮຽນຢູ່;

- ຊ່ວຍເຫຼືອດ້ານການເງິນທັງທາງກົງ ຫຼື ທາງອ້ອມ;
- ຄຸ້ມຄອງບັນຫາດ້ານການເງິນທີ່ກ່ຽວຂ້ອງກັບການເຈັບເປັນແລະຄວາມຕ້ອງການຂອງຜູ້ທີ່ເພິ່ງພາອາໄສຜູ້ອອກແຮງງານທີ່ຕິດເຊື້ອ;
- ສະໜອງຂໍ້ມູນຂ່າວສານ, ຄຳແນະນຳແລະການຊ່ວຍເຫຼືອດ້ານກົດໝາຍ;
- ຊ່ວຍສ້າງຄວາມເຂົ້າໃຈກ່ຽວກັບຂະບວນການທາງກົດໝາຍທີ່ກ່ຽວຂ້ອງກັບການເຈັບເປັນແລະການເສຍຊີວິດເຊັ່ນ: ການຄຸ້ມຄອງບັນຫາດ້ານການເງິນທີ່ກ່ຽວກັບການເຈັບເປັນ, ການກະກຽມພິໄນກຳແລະແຜນສືບມູນ;
- ຊ່ວຍເຫຼືອຄອບຄົວໃນດ້ານການພົວພັນກັບບັນດາລະບົບປະກັນສັງຄົມແລະລະບົບປະກັນຕົນຕາມສາຍອາຊີບຕ່າງໆ;
- ການຈ່າຍຄ່າຈ້າງລ່ວງໜ້າທີ່ຍັງຄ້າງຊຳລະໃຫ້ແກ່ຜູ້ອອກແຮງງານ;
- ຊີ້ນຳໃຫ້ຄອບຄົວເຂົາເຈົ້າໄປຫາອົງການກົດໝາຍແລະອົງການບໍລິການສຸຂະພາບທີ່ກ່ຽວຂ້ອງ ຫຼື ສະໜອງລາຍຊື່ຂອງບັນດາອົງການຕ່າງໆທີ່ຕ້ອງການແນະນຳໃຫ້ເຂົາເຈົ້າໄປຫາ;

ຕາມປົກກະຕິແລ້ວ, ການຄຸ້ມຄອງທາງສັງຄົມ, ກົດໝາຍແຮງງານ ແລະ ມາດຕະການຄຸ້ມຄອງໃນສະຖານທີ່ເຮັດວຽກ ບໍ່ໄດ້ກວມເອົາຜູ້ຜະລິດແລະຜູ້ອອກແຮງງານໃນຂະແໜງເສດຖະກິດນອກລະບົບຍ້ອນເຂົາເຈົ້າບໍ່ມີການຈັດຕັ້ງເປັນອົງການ (ເຖິງແມ້ນວ່າເຂົາເຈົ້າອາດຈະລວມກັນເປັນສະມາຄົມທ້ອງຖິ່ນພາຍໃຕ້ຈຸດປະສົງແນ່ນອນໃດໜຶ່ງກໍ່ຕາມ ແຕ່ສ່ວນຫຼາຍແລ້ວກໍ່ບໍ່ໄດ້ນອນຢູ່ໃນຂອບເຂດການດຳເນີນງານຂອງອົງການຈັດຕັ້ງກຳມະບານ ຫຼື ອົງການຈັດຕັ້ງຂອງຜູ້ໃຊ້ແຮງງານ).

## ເອກະສານຊ້ອນທ້າຍ I

## I. ຄວາມເປັນຈິງພື້ນຖານກ່ຽວກັບພະຍາດລະບາດດັ່ງກ່າວແລະຜົນກະທົບທີ່ກ່ຽວຂ້ອງ

ຄວາມເປັນຈິງກ່ຽວກັບໂລກເອດສ໌

ໂລກເອດສ໌ ເກີດຈາກການຕິດເຊື້ອເອດສ໌ ຫຼື ໄວຣັດສ໌ພູມຄຸ້ມກັນຮ່າງກາຍມະນຸດບົກພ່ອງ (Human Immunodeficiency Virus - HIV) ຜ່ານທາງທາດແຫຼວຈາກຮ່າງກາຍ ໂດຍສະເພາະເລືອດ, ອະສຸຈິ, ນ້ຳຈາກຊ່ອງຄອດ ແລະ ນ້ຳນົມແມ່. ໄດ້ມີການລະບຸວ່າ: ໂລກນີ້ສາມາດຕິດຕໍ່ໄດ້ 4 ທາງຄື : (1) ການມີເພດສຳພັນກັບຜູ້ຕິດເຊື້ອໂດຍບໍ່ໄດ້ປ້ອງກັນ (ເປັນວິທີການຕິດເຊື້ອທີ່ພົບເຫັນທົ່ວໄປຫຼາຍທີ່ສຸດ); (2) ຕິດຈາກເລືອດແລະຜະລິດຕະພັນເລືອດ, ຕົວຢ່າງ: ຜ່ານທາງການຖ່າຍເລືອດທີ່ຕິດເຊື້ອ ຫຼື ການຜ່າຕັດປ່ຽນອະໄວຍະວະແລະເນື້ອເຍື່ອ, ການໃຊ້ເຂັມສັກຢາ ຫຼື ອຸປະກອນບ່ອງ-ເຈາະໜັງທີ່ປົນເປື້ອນເຊື້ອ; (3) ການຕິດເຊື້ອຈາກແມ່ສູ່ເດັກໃນທ້ອງ ຫຼື ໃນໄລຍະການເກີດ; ແລະ (4) ການລ້ຽງລູກດ້ວຍນົມແມ່. ເຊື້ອໂລກເອດສ໌ ບໍ່ສາມາດຕິດຕໍ່ໄດ້ດ້ວຍການຈັບບາຍທາງຮ່າງກາຍແບບທຳມະດາ, ການໄອ, ການຈາມ ຫຼື ການຈູບ, ການໃຊ້ໂຖສ້ວມແລະຫ້ອງນ້ຳຮ່ວມກັນ, ການໃຊ້ອຸປະກອນຮັບໃຊ້ໃນການກິນ (ຖ້ວຍ, ບ່ວງ, ຈານ, ຊາມ ແລະ ອື່ນໆ) ຫຼື ດ້ວຍການບໍລິໂພກອາຫານແລະເຄື່ອງດື່ມທີ່ຈັບໂດຍຜູ້ທີ່ຕິດເຊື້ອແລ້ວ; ເຊື້ອດັ່ງກ່າວ ຍັງບໍ່ແພ່ລະບາດດ້ວຍການຖືກຍຸງແລະແມງໄມ້ອື່ນໆກັດ.

ເຊື້ອໂລກເອດສ໌ ເຮັດໃຫ້ລະບົບພູມຄຸ້ມກັນຂອງມະນຸດອ່ອນແອລົງ ສິ່ງຜົນໃຫ້ບໍ່ຮ່າງກາຍບໍ່ສາມາດຕໍ່ສູ້ກັບການຕິດເຊື້ອພະຍາດຕ່າງໆໄດ້. ຜູ້ທີ່ຕິດເຊື້ອ ອາດຈະມີຊີວິດຢູ່ໄດ້ເຖິງ 10 ປີ ຫຼື

ຫຼາຍກວ່ານັ້ນພາຍຫຼັງການຕິດເຊື້ອ, ໃນໄລຍະນີ້ເກືອບຢາກວ່າບໍ່ມີອາການ ຫຼື ການເຈັບເປັນເຖິງແມ້ນວ່າເຂົາເຈົ້າສາມາດສົ່ງເຊື້ອໃຫ້ຜູ້ອື່ນໄດ້ກໍ່ຕາມ. ອາການເລີ່ມຕົ້ນຂອງໂລກເອດສ໌ ລວມມີ: ການອິດເມື່ອຍແບບຊໍ້າເຮື້ອ, ຖອກທ້ອງ, ເປັນໄຂ້, ມີການປ່ຽນແປງທາງດ້ານຄວາມສາມາດຂອງມັນສະໝອງເຊັ່ນ: ຄວາມຈຳເຊື່ອມ, ນໍ້າໜັກຫຼຸດ, ໄອຢູ່ບໍ່ເຊົາ, ເປັນຜື່ນແດງຕາມຜິວໜັງຂັ້ນຮ້າຍແຮງທີ່ບໍ່ເຊົາຈັກເທື່ອ, ກາລະໂລກແລະການຕິດເຊື້ອຕາມປາກ ຫຼື ຕ່ອມນໍ້າເຫຼືອງໄຄ່. ພ້ອມນັ້ນ, ໃນໄລຍະທີ່ລະບົບພູມຄຸ້ມກັນກຳລັງອ່ອນແອຍັງອາດຈະເຈັບປ່ວຍດ້ວຍພະຍາດແຊກຊ້ອນຕ່າງໆເຊັ່ນ: ມະເລັງ, ເຍື່ອຫຸ້ມສະໝອງອັກເສບ, ປອດບວມ, ແລະ ວັນນະໂລກ. ເຖິງແມ້ນວ່າ: ໄລຍະຂອງການເຈັບເປັນອາດຈະບາສະຫຼັບໄປກັບໄລຍະການຜ່ອນໂຕລົງຂອງພະຍາດຕ່າງໆ ແຕ່ໂລກເອດສ໌ກໍ່ສາມາດທີ່ຈະເອົາຊີວິດຂອງຜູ້ເປັນໂລກນີ້ໄດ້ທຸກເມື່ອ. ປະຈຸບັນນີ້ກຳລັງມີການຄົ້ນຄວ້າຫາວັກແຊ໋ງ ແຕ່ກໍ່ຍັງບໍ່ທັນມີວັກແຊ໋ງໃດປິ່ນປົວໂລກນີ້ໄດ້ເທື່ອ. ການໃຊ້ຢາຕ້ານໄວຣັດສ໌ ຈະຊ່ວຍຫຼຸດຜ່ອນການທຳລາຍຮ່າງກາຍຈາກໂລກເອດສ໌ຊ້າລົງແລະຊ່ວຍໃຫ້ມີຊີວິດຍາວຂຶ້ນ ແຕ່ປະຈຸບັນຢາດັ່ງກ່າວກໍ່ຍັງຄົງມີລາຄາແພງ ເຮັດໃຫ້ຜູ້ທຸກທໍລະມານຈາກໂລກເອດສ໌ສ່ວນຫຼາຍບໍ່ສາມາດຊື້ໄດ້; ຢ່າງໃດກໍ່ຕາມ, ສະພາບັນຫາຢາແພງກຳລັງມີການປ່ຽນແປງຢ່າງໄວວາ. HIV ເປັນເຊື້ອໄວຣັດສ໌ທີ່ອ່ອນແອ ແລະສາມາດລອດຢູ່ໄດ້ພາຍໃນຂອບເຂດສະພາບເງື່ອນໄຂທີ່ຈຳກັດ ເຊັ່ນ: ສາມາດເຂົ້າຮ່າງກາຍໄດ້ຕາມບໍລິເວນທີ່ປຽກຊຸ່ມແລະບໍ່ສາມາດຜ່ານຜິວໜັງໃນສະພາບປົກກະຕິທີ່ບໍ່ມີຮອຍບາດໄດ້. ດ້ວຍເຫດນັ້ນ, ໃນການປ້ອງກັນຈິ່ງລວມເອົາການຮັບປະກັນວ່າ: ຕ້ອງໃຫ້ມີອຸປະສັກກີດຂວາງໄວຣັດສ໌ດັ່ງກ່າວຕົວຢ່າງ: ການໃຊ້ຖົງຢາງອະນາໄມ ຫຼື ອຸປະກອນປ້ອງກັນຕ່າງໆເຊັ່ນ: ຖົງມືແລະຜ້າປິດປາກ (ຕາມຄວາມເໝາະສົມ), ອຸປະກອນບ່ອງ-ເຈາະໜັງບໍ່ມີເຊື້ອພະຍາດປົ້ນເປື້ອນ, ເຊື້ອເອດສ໌ ສາມາດຖືກທຳລາຍໄດ້ດ້ວຍການຂ້າເຊື້ອ, ສະບູຝຸ່ນຊະນິດເຂັ້ມຂຸ້ນແລະນໍ້າຮ້ອນ (ໃຫ້ເບິ່ງເອກະສານຊ້ອນທ້າຍ II).

## ຜົນກະທົບດ້ານພູມສາດປະຊາກອນແລະກຳລັງແຮງງານ

ໃນທ້າຍປີ 2000, ມີຫຼາຍກວ່າ 36 ລ້ານຄົນທີ່ຕິດເຊື້ອໂລກເອດສ໌, ສອງສ່ວນສາມຂອງຈຳນວນດັ່ງ ກ່າວດຳລົງຊີວິດຢູ່ເຂດທະເລຊາຍຊາຮາຣາຕອນລຸ່ມຂອງອາຟຣິກາ. ເກືອບ 22 ລ້ານຄົນເສຍຊີວິດຍ້ອນໂລກເອດສ໌; ພາຍໃນໄລຍະ 12 ເດືອນຂອງປີ 2000, ມີຄົນເສຍຊີວິດຍ້ອນໂລກດັ່ງກ່າວ 3 ລ້ານຄົນທົ່ວໂລກ.

ທຸກພາກພື້ນໃນໂລກດ້ວຍແຕ່ໄດ້ຮັບຜົນກະທົບ:  ຜູ້ໃຫຍ່ແລະເດັກນ້ອຍທີ່ຕິດເຊື້ອໂລກເອດສ໌ ມີຈຳນວນຫຼາຍກວ່າ 2,5 ລ້ານຄົນຢູ່ເຂດທະເລຊາຍຊາຮາຣາຕອນລຸ່ມຂອງອາຟຣິກາ, ຫຼາຍກວ່າ 6 ລ້ານຄົນໃນອາຊີ, ເກືອບ 2 ລ້ານຄົນໃນອາເມລິກາລາຕິນແລະຄາເລບຽນ; ຫຼຸດ 1 ລ້ານຄົນໜ້ອຍໜຶ່ງໃນອາເມລິກາເໜືອ; ເຄິ່ງລ້ານຄົນໃນເອີຣົບຕາເວັນຕົກ, ເກືອບສາມສ່ວນສີ່ລ້ານໃນເອີຣົບ

ຕາເວັນອອກແລະອາຊີກາງ, ເກືອບເຄິ່ງລ້ານໃນອາຟຣິກາເໜືອແລະຕາເວັນອອກກາງ. ເຖິງແມ້ນວ່າຮູບແບບການແພ່ລະບາດຂອງເຊື້ອ ອາດຈະແຕກຕ່າງກັນອອກໄປ ແຕ່ບັນດາພາກພື້ນຕ່າງໆໃນໂລກກຳລັງຜະເຊີນກັບອັດຕາການຕິດເຊື້ອທີ່ເພີ່ມຂຶ້ນ.

ຜົນກະທົບຕາມມາຈາກການຕາຍຍ້ອນໂລກເອດສ໌ຕໍ່ປະຊາກອນທັງໝົດຂອງບັນດາປະເທດປະເທດຕ່າງໆໃນອາຟຣິກາ ສາມາດເຫັນໄດ້ຢ່າງຈະແຈ້ງຄື: ພາຍໃນປີ 2010, ສຳລັບ 29 ປະເທດທີ່ມີອັດຕາການແພ່ລະບາດຫຼາຍກວ່າ 2% ຈະມີປະຊາກອນທັງໝົດຫຼຸດລົງ 50 ລ້ານຄົນເມື່ອສົມທຽບໃສ່ປະເທດທີ່ບໍ່ມີໂລກເອດສ໌. ຍັງມີຜົນກະທົບທາງດ້ານເພດແລະອາຍຸນຳອີກດ້ວຍ, ຄືດັ່ງທີ່ຮູ້ກັນ: ໃນຫຼາຍປະເທດພົບວ່າແມ່ຍິງມັກຈະຕິດເຊື້ອແຕ່ອາຍຸຍັງນ້ອຍເມື່ອທຽບໃສ່ຜູ້ຊາຍ; ຢູ່ອາຟຣິກາ ຫຼາຍກວ່າເຄິ່ງໜຶ່ງໃນຈຳນວນຜູ້ຕິດເຊື້ອໃໝ່ແມ່ນແມ່ຍິງ. ກຸ່ມອາຍຸທີ່ໄດ້ຮັບຜົນກະທົບຮ້າຍແຮງທີ່ສຸດທົ່ວທຸກແຫ່ງໃນໂລກແມ່ນກຸ່ມອາຍຸລະຫວ່າງ 15-49 ປີ ເຊິ່ງເປັນກຸ່ມປະຊາກອນໄວແຂງແຮງ, ດ້ວຍເຫດນັ້ນ, ການປະກອບສ່ວນຂອງເຂົາເຈົ້າໃຫ້ແກ່ຄອບຄົວ, ສັງຄົມແລະເສດຖະກິດ ກໍ່ຈະສູນເສຍໄປນຳ. ອົງການແຮງງານສາກົນ ຄາດຄະເນເອົາໄວ້ວ່າ: ມີຜູ້ອອກແຮງງານຫຼາຍກວ່າ 20 ລ້ານຄົນທົ່ວໂລກຕິດເຊື້ອໂລກເອດສ໌. ຂະໜາດຂອງກຳລັງແຮງງານໃນບັນດາປະເທດທີ່ມີການແພ່ລະບາດຂອງສູງ ຈະຫຼຸດລົງລະຫວ່າງ 10 ຫາ 30 ເປີເຊັນພາຍໃນປີ 2020 ເຊິ່ງເປັນລະດັບທີ່ສູງກວ່າການຫຼຸດລົງໃນກໍລະນີທີ່ບໍ່ມີໂລກເອດສ໌; ເດັກນ້ອຍ 14 ລ້ານຄົນ ຈະສູນເສຍພໍ່/ແມ່ ຫຼື ທັງພໍ່ແລະແມ່ຍ້ອນການຕາຍຈາກໂລກເອດສ໌, ແລະ ເດັກນ້ອຍຈຳນວນຫຼາຍ ຈະຖືກບັງຄັບໃຫ້ຕ້ອງປະລະການຮຽນເພື່ອເຂົ້າສູ່ຕະຫຼາດແຮງງານ ເຊິ່ງຈະເປັນການເຮັດໃຫ້ບັນຫາການໃຊ້ແຮງງານເດັກເຮັ່ງຮ້າຍຂຶ້ນໄປຕື່ມອີກ.

ໂລກເອດສ໌ ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ຜູ້ທີ່ຕິດເຊື້ອແລະຄອບຄົວຂອງເຂົາເຈົ້າ ກໍ່ຄື ຕໍ່ຊຸມຊົນໂດຍລວມ. ຜົນກະທົບ ຍິ່ງມີຄວາມຮ້າຍແຮງຕໍ່ຜູ້ເຖົ້າແລະເດັກນ້ອຍທີ່ເປັນຜູ້ອາໄສສາມະຊິກຄອບຄົວທີ່ຕິດເຊື້ອ. ຜົນກະທົບໃນລະດັບບຸກຄົນແລະຄົວເຮືອ ຍັງສະທ້ອນໄປສູ່ລະດັບວິສາຫະກິດ ແລະ ຍິ່ງນັບມື້ນັບເຫັນວ່າສົ່ງຜົນກະທົບຕໍ່ເສດຖະກິດຂອງປະເທດຊາດນຳອີກ. ການແພ່ລະບາດຂອງໂລກດັ່ງກ່າວ ປະກົດຕົວໃຫ້ເຫັນໃນໂລກແຫ່ງການເຮັດວຽກດ້ວຍຫຼາຍທາງເຊັ່ນ: ກະທົບຕໍ່ການຜະລິດ, ການຈຳແນກພາຍໃນການຈ້າງງານ, ຄວາມບໍ່ສະເໝີພາບດ້ານບົດບາດຍິງ-ຊາຍທີ່ເຮັ່ງຮ້າຍຂຶ້ນຕື່ມ, ມີປະກົດການໃຊ້ແຮງງານເດັກເພີ່ມຂຶ້ນ ແລະ ປະກົດການອື່ນໆທີ່ທຳລາຍຊັບພະຍາກອນມະນຸດ, ສ້າງຄວາມກົດດັນຕໍ່ລະບົບປະກັນສຸຂະພາບແລະລະບົບປະກັນສັງຄົມ, ແລະ ເປັນໄພຂົ່ມຂູ່ຕໍ່ສຸຂະພາບແລະຄວາມປອດໄພແຮງງານ.

## ເງື່ອນໄຂທີ່ປະກອບໃສ່ຄວາມສ່ຽງຕໍ່ການຕິດເຊື້ອ

### ປັດໄຈລວມ

ໂລກເອດສ໌ ແຜ່ລະບາດຫຼາຍຂຶ້ນພາຍໃຕ້ສະພາບທີ່ມີການລະເມີດສິດທິດ້ານເສດຖະກິດ, ສັງຄົມແລະວັດທະນະທຳແລະສະພາບທີ່ບໍ່ໃຫ້ຄວາມເອົາໃຈໃສ່ຕໍ່ມາດຖານທີ່ດີທາງການເມືອງແລະການເປັນພົນລະເມືອງ. ໃນດ້ານຂອງເສດຖະກິດ, ຄວາມທຸກຍາກ ຖືເປັນປັດໄຈຫຼັກ: ຄວາມກີກໜັງສື ແລະ ການຂາດໂອກາດຂອງຄົນທຸກເຮັດໃຫ້ເຂົາເຈົ້າຍິ່ງສ່ຽງຕໍ່ການຕິດເຊື້ອ, ແລະ ຄວາມທຸກຍາກຍັງສິ່ງຄວາມກົດດັນຕໍ່ແມ່ຍິງໃຫ້ເອົາຊີວິດລອດດ້ວຍແລະຊ່ວຍເຫຼືອຄອບຄົວດ້ວຍການເຂົ້າໄປສູ່ການມີເພດສຳພັນແບບບໍ່ປອດໄພ. ສະພາບຂາດເຂີນອາຫານ, ທີ່ຢູ່ອາໄສບໍ່ພຽງພໍ ແລະ ການຂາດອະນາໄມ ເຮັດໃຫ້ຜູ້ທີ່ຕິດເຊື້ອໂລກເອດສ໌ ຍິ່ງສ່ຽງຫຼາຍຂຶ້ນຕໍ່ການຕິດພະຍາດຕ່າງໆທີ່ກ່ຽວຂ້ອງກັບໂລກເອດສ໌. ໃນດ້ານຂອງສັງຄົມແລະວັດທະນະທຳ, ຄວາມບໍ່ສະເໝີພາບດ້ານສາຍພົວພັນສ່ວນໂຕແລະສາຍພົວພັນດ້ານການເຮັດວຽກ ອາດຈະນຳໄປສູ່ການຍອມຮ່ວມເພດໃນລັກສະນະທີ່ບໍ່ຕ້ອງການພາຍໃຕ້ສະພາບເງື່ອນໄຂທີ່ສ່ຽງຕໍ່ການຕິດເຊື້ອ. ທັດສະນະຄະຕິແລະພຶດຕິກຳ ກໍ່ຄວນຖືກຮັບຮູ້ວ່າເປັນປັດໄຈຢ່າງໜຶ່ງທີ່ອາດຈະເພີ່ມຄວາມສ່ຽງໃນການຕິດເຊື້ອ. ເຊື້ອໂລກເອດສ໌ ອາດຈະຕິດກັນໄດ້ດ້ວຍການໃຊ້ອຸປະກອນສັກຢາເສບຕິດທີ່ປົນເປື້ອນ. ຍັງມີຫຼັກຖານຊີ້ໃຫ້ເຫັນອີກວ່າ : ການເສບຢາແລະເຫຼົ້າ ສາມາດເຮັດໃຫ້ຄວາມສາມາດໃນການຄວບຄຸມຕົນເອງຂອງຄົນເຮົາຫຼຸດລົງເປັນຜົນສ່ຽງຕໍ່ການມີເພດສຳພັນແລະມີພຶດຕິກຳໃຊ້ຢາເສບຕິດປະເພດສັກໃນລັກສະນະທີ່ບໍ່ປອດໄພ. ຄວາມອັບອາຍຂອງຜູ້ທີ່ຕິດເຊື້ອໂລກເອດສ໌ ຍິ່ງເປັນເຊື້ອໄຟທີ່ດີໃຫ້ແກ່ຄວາມປາຖະໜາທາງທຳມະຊາດທີ່ຕ້ອງການຮັກສາຄວາມລັບກ່ຽວກັບການຕິດເຊື້ອ ເຊິ່ງເປັນການຊ່ວຍໃຫ້ມີການແຜ່ລະບາດຫຼາຍຂຶ້ນ. ຄວາມກົດດັນທາງດ້ານວັດທະນະທຳແລະການປະຕິເສດເລື່ອງການຕິດເຊື້ອ ປິດບັງຂອບເຂດການແຜ່ຂະຫຍາຍຂອງການຕິດເຊື້ອຕົວຈິງໃນລະດັບທ້ອງຖິ່ນແລະລະດັບຊາດ, ດັ່ງນັ້ນຈິ່ງຍິ່ງເປັນເລື່ອງຍາກຂຶ້ນກວ່າເດີມໃນການທີ່ຈະວາງແຜນຕອບໂຕ້ຢ່າງມີປະສິດທິພາບທັງໃນລະດັບຊຸມຊົນ ກໍ່ຄື ລະດັບສ່ວນບຸກຄົນ.

ໃນດ້ານຂອງພົນລະເມືອງແລະການເມືອງເຊັ່ນ : ສະພາບຄວາມຂັດແຍ່ງ, ຄວາມຫຼົ້ມເຫຼວຂອງກົດໝາຍແລະຄວາມເປັນລະບຽບຮຽບຮ້ອຍ, ຂອບກົດໝາຍແລະກົນໄກການບັງຄັບປະຕິບັດທີ່ບໍ່ເຂັ້ມແຂງ ຕະຫຼອດເຖິງການປະຕິເສດສິດທິຕ່າງໆແລະສິດດ້ານການຕໍ່ລອງເປັນໝູ່ຄະນະຂອງບັນດາອົງການຈັດຕັ້ງຕ່າງໆ ເວົ້າລວມໄດ້ກາຍເປັນອຸປະສັກກີດຂວາງການພັດທະນາແລະເວົ້າສະເພາະສິ່ງເຫຼົ່ານີ້ໄດ້ສ້າງຄວາມເສຍຫາຍໃຫ້ແກ່ບັນດາມາດຕະຖານສົ່ງເສີມສຸຂະພາບຂັ້ນຈຳເປັນພື້ນຖານ. ໃນຫຼາຍປະເທດ, ລະບົບສາທາທີ່ມີການສະໜອງຊັບພະຍາກອນໃຫ້ບໍ່ພຽງພໍ (ໂດຍເປັນລະບົບທີ່ອ່ອນແອຢູ່ແລ້ວຈາກບັນຫາເລື່ອງໜີ້ແລະການດັດປັບໂຄງສ້າງ) ບໍ່ສາມາດສະໜອງການເບິ່ງແຍງ ຫຼື ການປ້ອງກັນທີ່ຕ້ອງການໄດ້.

ສະຫຼຸບແລ້ວ, ບັນຍາກາດຂອງການຈຳແນກ ແລະ ການຂາດຄວາມເຄົາລົບຕໍ່ສິດທິມະນຸດເຮັດໃຫ້ຜູ້ອອກແຮງງານຍິ່ງສ່ຽງຕໍ່ການຕິດເຊື້ອ ແລະ ມີຄວາມສາມາດໜ້ອຍລົງໃນການຈັດການກັບ

ໂລກເອດສ໌ ຍ້ອນເປັນເລື່ອງຍາກສຳລັບເຂົາເຈົ້າທີ່ຈະຊອກຫາບ່ອນກວດເລືອດແບບສະມັກໃຈ, ບ່ອນໃຫ້ຄຳປຶກສາ, ການປິ່ນປົວ ຫຼື ການຊ່ວຍເຫຼືອ ເຊິ່ງເຮັດໃຫ້ເຂົາເຈົ້າຈະບໍ່ສາມາດເຂົ້າຮ່ວມໃນການເຜີຍແຜ່ໂຄສະນາປ້ອງກັນໂລກເອດສ໌.

## ປັດໄຈທີ່ເພີ່ມຄວາມສ່ຽງຕໍ່ການຕິດເຊື້ອສຳລັບກຸ່ມຜູ້ອອກແຮງງານບາງກຸ່ມ

ຖຶງແມ້ນວ່າບັນຫາຫຼັກຂອງການຕິດເຊື້ອແມ່ນເປັນຍ້ອນພຶດຕິກຳ ບໍ່ແມ່ນຍ້ອນອາຊີບກໍ່ຕາມ, ແຕ່ສະພາບການເຮັດວຽກບາງປະເພດ ກໍ່ເຮັດໃຫ້ມີໂອກາດສ່ຽງສູງຕໍ່ການຕິດເຊື້ອຫຼາຍກວ່າວຽກປະເພດອື່ນ. ລາຍການວຽກດັ່ງລຸ່ມນີ້ເປັນໂຕຊີ້ໃຫ້ເຫັນ:

- ການເຮັດວຽກທີ່ຕ້ອງມີການເຄື່ອນຍ້າຍແຮງງານ ໂດຍສະເພາະຢ່າງຍິ່ງການເຮັດວຽກທີ່ຕ້ອງເດີນທາງເປັນປະຈຳ ທີ່ເຮັດໃຫ້ຕ້ອງຫ່າງຈາກຄູ່ສົມຣົດ ຫຼື ຄູ່ຮັກ ;
- ການເຮັດວຽກໃນສະພາບແວດລ້ອມທີ່ໂດດດ່ຽວ ມີຂໍ້ຈຳກັດດ້ານການພົວພັນທາງສັງຄົມ ແລະຂໍ້ຈຳກັດດ້ານສິ່ງອຳນວຍຄວາມສະດວກທາງສາທາລະນະສຸກ ;
- ສະພາບການເຮັດວຽກການເຮັດວຽກທີ່ມີເພດດຽວແລະສະພາບການດຳລົງຊີວິດໃນໝູ່ຜູ້ຊາຍ ;
- ສະພາບການທີ່ຜູ້ອອກແຮງງານບໍ່ສາມາດຄວບຄຸມການປົກປ້ອງຕົນເອງຈາກການຕິດເຊື້ອ ;
- ເຮັດວຽກໃນສະພາບທີ່ຜູ້ຊາຍມີບົດບາດສູງ ໃນຂະນະທີ່ແມ່ຍິງເປັນພຽງສຽງສ່ວນນ້ອຍ ;
- ເຮັດວຽກທີ່ກ່ຽວຂ້ອງກັບຄວາມສ່ຽງຈາກການອອກແຮງງານເຊັ່ນ: ວຽກທີ່ມີການຈັບບາຍເລືອດຄົນ, ຜະລິດຕະພັນຈາກເລືອດແລະທາດແຫຼວຈາກຮ່າງກາຍຂອງຄົນ, ວຽກທີ່ສ່ຽງຕໍ່ອຸປະຕິເຫດຈາກການຖືກເຂັມປັກ ແລະ ມີການຈັບບາຍເລືອດທີ່ຕິດເຊື້ອ ໂດຍເປັນສະພາບການເຮັດວຽກທີ່ມີການນຳເອົາມາດຕະການປ້ອງກັນທີ່ເປັນເອກະພາບເຂົ້າມານຳໃຊ້ ແລະ/ຫຼື ເປັນສະພາບການເຮັດວຽກທີ່ບໍ່ມີອຸປະກອນຮັບໃຊ້ພຽງພໍ.

ນອກຈາກບາງປະເພດວຽກຂ້າງເທິງແລ້ວ, ອາດຈະຕື່ມ 'ການບໍ່ມີວຽກເຮັດ' ເຂົ້າໄປນຳເພື່ອໃຫ້ກວມເອົາສະພາບທີ່ຜູ້ອອກແຮງງານຫວ່າງງານແລະອັ່ງອໍກັນຢູ່ໃນສູນກາງເມືອງໃຫຍ່ດ້ວຍຄວາມຫວັງທີ່ຈະໄດ້ເຮັດວຽກໃດກໍ່ໄດ້ທີ່ໃຫ້ລາຍໄດ້ພຽງເລັກນ້ອຍແຕ່ຕ້ອງສ່ຽງຕໍ່ການຕິດເຊື້ອໄດ້ງ່າຍຂຶ້ນ, ນອກນັ້ນຍັງລວມເອົາຜູ້ທີ່ຖືກຈັດສັນທີ່ຢູ່ຄືນໃໝ່ແລະຜູ້ທີ່ຢູ່ຄ້າຍຜູ້ລີ້ໄພ ເຊິ່ງເປັນຜູ້ທີ່ບໍ່ມີຫຍັງເຮັດຫຼາຍແລະຮູ້ສຶກຖືກປະຖິ້ມ ອາດຈະຫັນໄປເພິ່ງການຮ່ວມເພດ ຫຼື ຖືກບັງຄັບໃຫ້ຕ້ອງຮ່ວມເພດ ໂດຍສະເພາະແມ່ທີ່ຕ້ອງເບິ່ງແຍງລູກດ້ວຍບໍ່ມີຜົວຢູ່ຄຽງຂ້າງ.

## ຄວາມຕ້ອງການສະເພາະຂອງແຮງງານໃນຂະແໜງເສດຖະກິດນອກລະບົບ[1]

ມີຄວາມເປັນໄປໄດ້ສູງຫຼາຍທີ່ແຮງງານນອກລະບົບຈະຕ້ອງທົນທຸກກັບຜົນກະທົບຈາກໂລກເອດສ໌ຫຼາຍກວ່າແຮງງານໃນຂະແໜງເສດຖະກິດໃນລະບົບຍ້ອນວ່າ: ເຫດຜົນທີໜຶ່ງ, ຕາມປົກກະຕິແລ້ວເຂົາເຈົ້າບໍ່ສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກທາງສາທາແລະອຸດໜູນປະເພດຕ່າງໆຈາກການປົກປ້ອງສັງຄົມທີ່ມີສະໜອງໃຫ້ແກ່ຜູ້ອອກແຮງງານທີ່ໄດ້ຮັບການຈ້າງງານໃນລະບົບ; ເຫດຜົນທີສອງ, ຍ້ອນວ່າກິດຈະກຳຂອງເຂົາເຈົ້າ ບໍ່ໄດ້ຕັ້ງຢູ່ບົນພື້ນຖານ ຫຼື ຈະນຳໄປສູ່ຄວາມໝັ້ນຄົງທາງການເງິນ ; ເຫດຜົນທີສາມ, ລັກສະນະຊົ່ວຄາວແລະສ່ຽງພາຍໃນວຽກຂອງເຂົາເຈົ້າ ໝາຍຄວາມວ່າການຂາດວຽກອາດຈະເປັນຜົນນຳໄປສູ່ການສູນເສຍຊ່ອງທາງດ້ານການຄ້າ ຫຼື ການຜະລິດ. ສຳລັບທຸລະກິດນອກລະບົບ, ການສູນເສຍຜູ້ອອກແຮງງານໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ ອາດຈະສ້າງຜົນຕາມມາອັນໃຫຍ່ຫຼວງເຖິງຂັ້ນນຳໄປສູ່ການລົ້ມສະຫຼາຍຂອງວິສາຫະກິດເຊັ່ນ: ຖ້າເຈົ້າຂອງວິສາຫະກິດ ຫາກຕິດເຊື້ອໂລກເອດສ໌, ເຈັບປ່ວຍແລ້ວຕາຍ, ທຶນຂອງວິສາຫະກິດທີ່ຖືກເອົາໄປໃຊ້ປິ່ນປົວ, ເບິ່ງແຍງແລະປົງສົບຂອງຜູ້ກ່ຽວນັ້ນ ອາດຈະສ້າງຄວາມເສຍຫາຍຕໍ່ການລົງທຶນໃໝ່ໃນອະນາຄົດ, ເປັນສາເຫດຂອງການຫຼົ້ມລະລາຍ, ແລະ ຖິ້ມໃຫ້ຜູ້ອອກແຮງງານແລະຄອບຄົວຂອງເຂົາເຈົ້າຕົກຢູ່ສະພາບບໍ່ເຫຼືອຫຍັງ. ໃນຂະແໜງເສດຖະກິດນອກລະບົບຢູ່ເຂດຊົນນະບົດ, ພົບຢູ່ເປັນປະ

---

[1] ອີງຕາມບົດລາຍງານຂອງຜູ້ອຳນວຍການໃຫຍ່ອົງການແຮງງານສາກົນຕໍ່ກອງປະຊຸມໃຫຍ່ອົງການແຮງງານສາກົນໃນປີ 1991, ຄຳສັບທີ່ວ່າ 'ຂະແໜງເສດຖະກິດນອກລະບົບ' [ແມ່ນ]ເຂົ້າໃຈວ່າໝາຍເຖິງບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍທີ່ຜະລິດແລະແຈກຢາຍສິນຄ້າແລະບໍລິການ, ແລະ ສ່ວນຫຼາຍແລ້ວປະກອບດ້ວຍຜູ້ຜະລິດເອກະລາດ ຫຼື ເປັນຜູ້ປະກອບອາຊີບດ້ວຍຕົນເອງທີ່ຢູ່ຕາມບັນດາເມືອງໃຫຍ່ຂອງປະເທດກຳລັງພັດທະນາ, ຈຳນວນໜຶ່ງມີການຈ້າງແຮງງານຄອບຄົວ ແລະ/ ຫຼື ຈ້າງຜູ້ອອກແຮງງານຈຳນວນໜຶ່ງ ຫຼື ຄົນຝຶກງານ, ເປັນຫົວໜ່ວຍທຸລະກິດທີ່ໃຊ້ທຶນນ້ອຍ ຫຼື ບໍ່ມີທຶນເລີຍ, ມີລະດັບເຕັກໂນໂລຊີແລະທັກສະຕ່ຳ, ດ້ວຍເຫດນັ້ນຈິ່ງມີສະມັດຕະພາບການຜະລິດຕ່ຳ ເຊິ່ງໂດຍລວມແລ້ວສະໜອງລາຍໄດ້ທີ່ຕ່ຳຫຼາຍແລະບໍ່ເປັນປົກກະຕິລວມທັງການຈ້າງງານທີ່ຂາດສະເຖຍລະພາບສູງໃຫ້ແກ່ຜູ້ທີ່ເຮັດວຽກໃນຫົວໜ່ວຍທຸລະກິດເຫຼົ່ານັ້ນ.ຫົວໜ່ວຍທຸລະກິດເຫຼົ່ານີ້ ຈັດເປັນຂະແໜງເສດຖະກິດນອກລະບົບຍ້ອນເຫດຜົນທີ່ວ່າ: ສ່ວນຫຼາຍແລ້ວເຂົາເຈົ້າບໍ່ມີການລົງທະບຽນແລະບໍ່ມີການບັນທຶກເຂົ້າໃນສະຖິຕິທາງການ; ເຂົາເຈົ້າ ມີທ່າອ່ຽງໃນການເຂົ້າເຖິງຕະຫຼາດ, ສະຖາບັນສິນເຊື່ອ, ສະຖາບັນຝຶກອົບຮົມແລະການສຶກສາໃນລະບົບ ຫຼື ບໍລິການແລະສິ່ງອຳນວຍຄວາມສະດວກສາທາລະນະຕ່າງໆໄດ້ໜ້ອຍ ຫຼື ບໍ່ມີການເຂົ້າເຖິງເລີຍ; ເຂົາເຈົ້າບໍ່ຖືກຮັບຮູ້, ບໍ່ໄດ້ຮັບການສະໜັບສະໜູນ ຫຼື ວາງລະບຽບການຈາກລັດ; ພົບຢູ່ເປັນປະຈຳວ່າ: ເຂົາເຈົ້າຖືກສະພາບບັບໃຫ້ຕ້ອງດຳເນີນທຸລະກິດຢູ່ນອກຂອບກົດໝາຍແລະແມ້ນແຕ່ໃນກໍລະນີທີ່ເຂົາເຈົ້າໄດ້ລົງທະບຽນແລະເຄົາລົບບາງດ້ານຂອງກົດໝາຍແຕ່ສ່ວນຫຼາຍແລ້ວເປັນເລື່ອງທີ່ຫຼີກລ່ຽງບໍ່ໄດ້ທີ່ເຂົາເຈົ້າຈະບໍ່ຢູ່ໃນຂອບການປົກປ້ອງສັງຄົມ, ກົດໝາຍແຮງງານແລະບັນດາມາດຕະການປົກປ້ອງຕ່າງໆທີ່ກຳນົດໄວ້ສຳລັບສະຖານທີ່ເຮັດວຽກ. ໂດຍທົ່ວໄປແລ້ວ, ຜູ້ຜະລິດແລະຜູ້ອອກແຮງງານໃນຂະແໜງເສດຖະກິດນອກລະບົບ ມັກຈະບໍ່ມີການຈັດຕັ້ງ (ເຖິງແມ້ນວ່າອາດຈະມີສະມາຄົມທ້ອງຖິ່ນຂອງຜູ້ທີ່ດຳເນີນກິດຈະກຳສະເພາະໃດໜຶ່ງກໍ່ຕາມ) ແລະ ໃນຫຼາຍກໍລະນີເຂົາເຈົ້າຢູ່ນອກຂອບເຂດການເຄື່ອນໄຫວຂອງກຳມະບານແລະອົງການຈັດຕັ້ງຜູ້ໃຊ້ແຮງງານ (ໃຫ້ເບິ່ງ ILC: *The dilemma of the informal sector,* 78th session (1991), Report I(1), p. 4 (English text)).

ຈຳວ່າ: ພາລະແບກຫາບດ້ານການເບິ່ງແຍງ ມັກຈະນຳໄປສູ່ການຫັນແຮງງານໜີຈາກການຜະລິດກະສິກຳ ໃນຂະນະທີ່ການສູນເສຍແຮງງານອັນເນື່ອງມາຈາກໂລກເອດສ໌ ກໍ່ນຳໄປສູ່ການຜະລິດເຂົ້າໄດ້ໜ້ອຍລົງແລະເຮັດໃຫ້ຄວາມໝັ້ນຄົງທາງດ້ານສະບຽງອາຫານໃນໄລຍະຍາວຕ້ອງຫຼຸດລົງ. ໂດຍລວມແລ້ວ, ບັນດາທຸລະກິດນອກລະບົບ ຈະໄດ້ຮັບຜົນກະທົບໜັກຈາກສະພາບເສດຖະກິດຕົກຕ່ຳໃນເວລາທີ່ຮູບແບບຕໍ່ໄປນີ້ປະກົດຕົວຂຶ້ນ: ຕະຫຼາດຫົດໂຕລົງເມື່ອຜູ້ຊົມໃຊ້ຕາຍ ຫຼື ມີລາຍໄດ້ເພື່ອການໃຊ້ຈ່າຍໜ້ອຍຍ້ອນຜົນຈາກມູນຄ່າສິ້ນເປືອງໃນການປິ່ນປົວແລະເບິ່ງແຍງທາງການແພດ.

## ມິຕິດ້ານບົດບາດຍິງ-ຊາຍ

ໂລກເອດສ໌ ສົ່ງຜົນກະທົບຕໍ່ແມ່ຍິງແລະຜູ້ຊາຍໃນລັກສະນະຕ່າງກັນໃນດ້ານຄວາມສ່ຽງແລະຜົນກະທົບ. ມີປັດໄຈທາງຊີວະທີ່ເຮັດໃຫ້ແມ່ຍິງສ່ຽງຕໍ່ການຕິດເຊື້ອໄດ້ຫຼາຍກວ່າຜູ້ຊາຍ, ພ້ອມນັ້ນຄວາມບໍ່ສະເໝີພາບທາງດ້ານໂຄງສ້າງກ່ຽວກັບສະຖານະຂອງແມ່ຍິງໃນສັງຄົມ ກໍ່ເຮັດໃຫ້ເປັນເລື່ອງຍາກຂຶ້ນ ຕື່ມສຳລັບເຂົາເຈົ້າທີ່ຈະດຳເນີນມາດຕະການປ້ອງກັນການຕິດເຊື້ອ, ແລະ ຄວາມບໍ່ສະເໝີພາບດັ່ງ ກ່າວ ຍັງເຮັດໃຫ້ຜົນກະທົບຈາກໂລກເອດສ໌ທີ່ມີຕໍ່ເຂົາເຈົ້າທະວີຄວາມຮ້າຍແຮງຂຶ້ນ.

- ແມ່ຍິງເປັນຈຳນວນຫຼາຍ ຕ້ອງປະສົບກັບສະພາບການເປັນຮອງທັງດ້ານເລື່ອງເພດແລະເສດຖະກິດໃນຊີວິດການແຕ່ງງານ ຫຼື ໃນຊີວິດຄູ່ຮັກຂອງເຂົາເຈົ້າ, ດ້ວຍເຫດນັ້ນເຂົາເຈົ້າ ຈຶ່ງບໍ່ສາມາດເຈລະຈາໃຫ້ມີການຮ່ວມເພດແບບປອດໄພ ຫຼື ປະຕິເສດທີ່ຈະຮ່ວມເພດແບບບໍ່ປອດໄພໄດ້.
- ຄວາມບໍ່ສົມດຸນທາງອຳນາດໃນສະຖານທີ່ເຮັດວຽກ ເຮັດໃຫ້ແມ່ຍິງສ່ຽງຕໍ່ໄພຂົ່ມຂູ່ຂອງການຖືກກຸກວນທາງເພດ.
- ຄວາມທຸກຍາກ ກໍ່ຖືກຖືວ່າເປັນປັດໄຈສົມທົບອີກຢ່າງຕໍ່ຄວາມສ່ຽງໃນການຕິດເຊື້ອໂລກເອດສ໌ ເຊິ່ງແມ່ຍິງເປັນປະຊາກອນສ່ວນໃຫຍ່ທີ່ທຸກຍາກຂອງໂລກ ; ພາຍໃຕ້ວິກິດຄວາມທຸກຍາກ, ມີຄວາມເປັນໄປໄດ້ສູງທີ່ເດັກນ້ອຍແມ່ຍິງຈະຖືກໃຫ້ອອກໂຮງຮຽນ ຫຼື ຖືກຂາຍເຂົ້າສູ່ການບັງຄັບໃຫ້ອອກແຮງງານ ຫຼື ວຽກໃຫ້ບໍລິການທາງເພດ.
- ການເຂົ້າເຖິງຂໍ້ຄວາມຕ້ານການຕິດເຊື້ອຂອງແມ່ຍິງ ພັດຖືກກີດຂວາງຈາກຄວາມກົກໜັງສືເຊິ່ງເປັນສະພາບທີ່ສົ່ງຜົນກະທົບຕໍ່ແມ່ຍິງເປັນຈຳນວນຫຼາຍໃນທົ່ວໂລກເມື່ອທຽບໃສ່ຈຳນວນຜູ້ຊາຍທີ່ໄດ້ຮັບຜົນກະທົບ - ໃນບາງປະເທດລື່ນກັນເຖິງສອງທົບ.
- ແມ່ຍິງມີຈຳນວນຫຼາຍສົມຄວນໃນສັດສ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານພາຍໃນປະເທດຕ່າງໆ ເຊິ່ງເມື່ອລວມໃສ່ກັບເດັກນ້ອຍແລ້ວເຂົາເຈົ້າມີຈຳນວນຫຼາຍກວ່າສາມສ່ວນສີ່ຂອງຈຳນວນຜູ້ລີ້ໄພທັງໝົດ; ສະພາບທັງສອງນີ້ກ່ຽວຂ້ອງກັບຄວາມສ່ຽງຂອງການຕິດເຊື້ອທີ່ສູງ

ກວ່າຄວາມສ່ຽງສະເລ່ຍຫຼາຍ. ພາຍໃຕ້ສະພາບທີ່ມີຄວາມຂັດແຍ່ງ, ຍິ່ງພົບວ່າມີອັດຕາການຂົ່ມຂືນແມ່ຍິງແບບເປັນລະບົບໂດຍກຸ່ມຮ່ວມສົງຄາມເພີ່ມສູງຂຶ້ນ.

- ພົບຢູ່ເປັນປະຈຳວ່າ: ພາລະແບບທາບໃນການເບິ່ງແຍງສາມະຊິກຄອບຄົວຫຼືສາມະຊິກຊຸມຊົນທີ່ຕິດເຊື້ອໂລກເອດສ໌ ມັກຈະຕົກເປັນໜ້າທີ່ຂອງແມ່ຍິງແລະເດັກນ້ອຍແມ່ຍິງ ເຊິ່ງເປັນການເພີ່ມຈຳນວນວຽກ ແລະ ຫຼຸດໂອກາດໃນການສ້າງລາຍໄດ້ແລະໂອກາດໃນການເຂົ້າຮຽນຂອງເຂົາເຈົ້າ.
- ກົດໝາຍວ່າດ້ວຍຊັບສິນ, ການສືບມູນ, ສິດໃນການໄດ້ລູກໄວ້ພາຍໃຕ້ການປົກຄອງ ແລະ ກົດໝາຍສະໜັບສະໜູນຕ່າງໆທີ່ມີລັກສະນະຈຳແນກເພດ ໝາຍຄວາມວ່າ : ແມ່ຍິງຕິດເຊື້ອໂລກເອດສ໌ ທີ່ໄດ້ສູນເສຍຄູ່ຄອງ ຫຼື ຖືກປະຖິ້ມຍ້ອນເຂົາເຈົ້າຕິດເຊື້ອ ຈະຖືກຕັດສິດດ້ານຄວາມໝັ້ນຄົງທາງການເງິນແລະໂອກາດທາງເສດຖະກິດ; ນີ້ອາດຈະບັງຄັບໃຫ້ເຂົາເຈົ້າຕ້ອງ ‘ຂາຍບໍລິການທາງເພດເພື່ອເອົາຊີວິດລອດ’ ໂດຍສະເພາະເດັກນ້ອຍແມ່ຍິງຍິ່ງສ່ຽງເປັນພິເສດຕໍ່ການຕ້ອງຂາຍບໍລິການທາງເພດແລະການຖືກກົດຂີ່ຂູດຮີດທາງເພດ.
- ມີຫຼາຍການສຶກສາສະແດງໃຫ້ເຫັນວ່າ : ແມ່ຍິງທີ່ຕິດເຊື້ອໂລກເອດສ໌ ມີຄວາມສ່ຽງສູງຕໍ່ການຖືກສັງຄົມລັງກຽດແລະແບ່ງແຍກເມື່ອທຽບໃສ່ຜູ້ຊາຍທີ່ຕິດເຊື້ອຄືກັນ ໂດຍສະເພາະໃນແວດລ້ອມສັງຄົມຊົນນະບົດ ເຊິ່ງເປັນຜົນໃຫ້ເຂົາເຈົ້າຖືກສັງຄົມປິດປະຕູໃສ່ແລະກາຍເປັນສ່ວນເສດເຫຼືອໃນສັງຄົມ ອີກເທື່ອໜຶ່ງນີ້ຖືເປັນການເພີ່ມຄວາມກົດດັນບັງຄັບໃຫ້ເຂົາເຈົ້າຕ້ອງເອົາຊີວິດລອດດ້ວຍການຂາຍບໍລິການທາງເພດ.
- ວຽກທີ່ແມ່ຍິງເຮັດ (ທັງທີ່ໄດ້ຄ່າແຮງງານ ຫຼື ບໍ່ຖືກຮັບຮູ້) ລ້ວນແຕ່ສາມາດຖືກລົບກວນຈາກໂລກເອດສ໌ໄດ້ຢ່າງງ່າຍດາຍຕົວຢ່າງ: ແມ່ຍິງເປັນແຮງງານສຳຄັນໃນຂະແໜງເສດຖະກິດນອກລະບົບເຊິ່ງເປັນຂະແໜງທີ່ວຽກບໍ່ໄດ້ຮັບການປົກຄຸມຈາກການປະກັນສັງຄົມ ຫຼື ອຸດໜູນສຸຂະພາບແຮງງານໃດໆ.
- ມີແມ່ຍິງຈຳນວນໜ້ອຍກວ່າຜູ້ຊາຍທີ່ຖືກປົກຄຸມຈາກການປະກັນສັງຄົມ ຫຼື ອຸດໜູນສຸຂະພາບແຮງງານ.
- ພົບຢູ່ເປັນປະຈຳວ່າ : ຜູ້ຊາຍ ມັກຈະເປັນຜູ້ຖືກເຄາະຮ້າຍຂອງການຈັດປະເພດຄົນແລະມາດຖານຂອງສັງຄົມໃນດ້ານພຶດຕິກຳຄວາມເປັນຜູ້ຊາຍ ເຊິ່ງອາດຈະນຳໄປສູ່ການຮ່ວມເພດແບບບໍ່ປອດໄພ ແລະ/ຫຼື ການຮ່ວມເພດແບບບໍ່ຍິນຍອມ.
- ໃນບາງປະເພດຂອງກຸ່ມຜູ້ອອກແຮງງານທີ່ມີຄວາມສ່ຽງພົບວ່າມີຜູ້ຊາຍຕາງໜ້າຢູ່ໃນກຸ່ມຫຼາຍຈົນເກີນໄປ ແລະ ພາຍໃຕ້ສະພາບການເຮັດວຽກອາດຈະເຮັດໃຫ້ເຂົາເຈົ້າສ່ຽງຕໍ່ການຮ່ວມເພດແບບບໍ່ປອດໄພລະຫວ່າງຜູ້ຊາຍນຳກັນ.

- ເມື່ອພິຈາລະນາຈາກສາຍພົວພັນທາງອຳນາດໃນສັງຄົມລະຫວ່າງຜູ້ຊາຍກັບແມ່ຍິງທີ່ອຽງໄປທາງຜູ້ຊາຍຫຼາຍກວ່າ, ຜູ້ຊາຍຈຶ່ງມີບົດບາດສຳຄັນໃນການຮັບຮອງແລະຊຸກຍູ້ທັດສະນະຄະຕິທີ່ຮັບຜິດຊອບຕໍ່ບັນດາກົນໄກຕ້ານແລະຈັດການກັບໂລກເອດສ໌.

**ເອກະສານຊ້ອນທ້າຍ II**

## II. ການຄວບຄຸມການຕິດເຊື້ອຢູ່ສະຖານທີ່ເຮັດວຽກ

### ກ. ມາດຕະການປ້ອງກັນການຕິດເຊື້ອຈາກເລືອດແລະທາດແຫຼວຈາກຮ່າງກາຍທີ່ເປັນເອກະພາບ

ມາດຕະການປ້ອງກັນການຕິດເຊື້ອຈາກເລືອດແລະທາດແຫຼວຈາກຮ່າງກາຍທີ່ເປັນເອກະພາບ (ຮູ້ກັນໃນນາມ "ມາດຕະການປ້ອງກັນທີ່ເປັນເອກະພາບ" ຫຼື "ມາດຕະການປ້ອງກັນທີ່ເປັນມາດຕະຖານ" ມີທີ່ມາຈາກການກຳນົດຂຶ້ນໂດຍສູນຄວບຄຸມແລະປ້ອງກັນພະຍາດຂອງປະເທດສະຫະລັດອາເມລິກາ (CDC) ໃນປີ 1985, ເຊິ່ງເຫດຜົນຫຼັກນັ້ນແມ່ນຍ້ອນບັນຫາການແພ່ລະບາດຂອງໂລກເອດສ໌ແລະຄວາມຕ້ອງການອັນຮີບດ່ວນທີ່ຢາກໄດ້ບັນດາຍຸດທະສາດໃໝ່ໆເພື່ອປົກປ້ອງບຸກຄະລາກອນຂອງໂຮງໝໍຈາກການຕິດເຊື້ອຈາກເລືອດ. ນີ້ຖືເປັນຄັ້ງທຳອິດທີ່ວິທີການໃໝ່ໄດ້ໃຫ້ຄວາມສຳຄັນຕໍ່ການນຳໃຊ້ມາດຕະການປ້ອງກັນການຕິດເຊື້ອຈາກເລືອດແລະທາດແຫຼວຈາກຮ່າງກາຍຢ່າງເປັນເປັນເອກະພາບທົ່ວກັນຕໍ່ທຸກຄົນໂດຍບໍ່ສົນໃຈວ່າຢູ່ໃນສະຖານະພາບຕິດເຊື້ອຫຼືບໍ່ຕິດເຊື້ອ.

ມາດຕະການປ້ອງກັນທີ່ເປັນເອກະພາບນີ້ ເປັນວິທີການຄວບຄຸມການຕິດເຊື້ອທີ່ເປັນມາດຕະຖານງ່າຍດາຍເພື່ອໃຫ້ນຳໃຊ້ເຂົ້າໃນການເບິ່ງແຍງຄົນເຈັບທຸກຄົນໃນທຸກຄັ້ງເພື່ອຫຼຸດຜ່ອນຄວາມສ່ຽງການຕິດເຊື້ອພະຍາດທີ່ເກີດຈາກເລືອດ. ມາດຕະການປ້ອງກັນທີ່ເປັນເອກະພາບນີ້ ປະກອບດ້ວຍ:

- ຈັດການແລະຖິ້ມວັດຖຸມີຄົມຕ່າງໆ (ເຂັມ ຫຼື ວັດຖຸມີຄົມອື່ນໆ) ດ້ວຍຄວາມລະມັດລະວັງ;
- ລ້າງມືກ່ອນແລະຫຼັງຂັ້ນຕອນໃຫ້ບໍລິການທາງການແພດ;
- ໃຊ້ວັດຖຸປົກປ້ອງເຊັ່ນ: ຖົງມື, ເສື້ອຄຸມແພດ, ຜ້າປິດປາກ ຖ້າຕ້ອງຈັບບາຍເລືອດ ຫຼື ທາດແຫຼວຈາກຮ່າງກາຍໂດຍກົງ;
- ຖິ້ມສິ່ງເສດເຫຼືອທີ່ປົນເປື້ອນທາດແຫຼວຈາກຮ່າງກາຍແລະເລືອດຢ່າງປອດໄພ;
- ຂ້າເຊື້ອອຸປະກອນຕ່າງໆຕະຫຼອດເຖິງອຸປະກອນທີ່ປົນເປື້ອນອື່ນໆຢ່າງຖືກວິທີ; ແລະ
- ຈັດການກັບຜ້າທີ່ເປື້ອນໃຫ້ຖືກວິທີ.

## ຂ. ປື້ມຄູ່ມືແນະນໍາແນວທາງແລະມາດຕະການປ້ອງກັນທີ່ເປັນເອກະພາບກ່ຽວກັບການຄວບຄຸມການຕິດເຊື້ອ


1. Bednarsh, H.S.; Eklund, K.J.: “Infection Control: Universal Precautions reconsidered”, in *American Dental Hygienists’ Association: Access* (Chicago, 1995) Vol. 11, No.1.
2. Centers for Disease Control and Prevention (CDC)/National Center for HIV, STD and TB Prevention/Division of HIV/AIDS Prevention: *Preventing Occupational HIV transmission to health care workers* (updated, June, 1999).
3. South African Law Commission: *Aspects of the law relating to AIDS* (Project No. 85): Universal workplace infection control measures (Universal Precautions) (1997).
4. WHO: *WHO guidelines on AIDS and first aid in the workplace,* WHO AIDS series 7 (Geneva, 1990).
5. WHO/UNAIDS/ICN (International Council of Nurses): *HIV and the workplace and the Universal Precautions,* Fact sheets on HIV/AIDS for nurses and midwives (Geneva, 2000).

**ເອກະສານຊ້ອນທ້າຍ III**

## III. ບັນຊີກວດສອບສໍາລັບການສ້າງແລະການຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍໂລກເອດສ໌ຢູ່ສະຖານທີ່ເຮັດວຽກ

ຜູ້ໃຊ້ແຮງງານ, ຜູ້ອອກແຮງງານພ້ອມດ້ວຍບັນດາອົງການຈັດຕັ້ງຂອງເຂົາເຈົ້າ ຄວນຮ່ວມມືກັນໃນທາງບວກແລະໃນລັກສະນະທີ່ໃສ່ໃຈຕໍ່ການສ້າງນະໂຍບາຍວ່າດ້ວຍໂລກເອດສ໌ ທີ່ຕອບສະໜອງແລະສ້າງຄວາມສົມດຸນຕໍ່ຄວາມຕ້ອງການຂອງທັງຜູ້ໃຊ້ແຮງງານແລະຜູ້ອອກແຮງງານ. ພາຍໃຕ້ການສະໜັບສະໜູນຈາກການໃຫ້ຄໍາໝັ້ນສັນຍາໃນລະດັບສູງສຸດ, ນະໂຍບາຍດັ່ງກ່າວ ຄວນສະໜອງຕົວຢ່າງໃຫ້ແກ່ຊຸມຊົນກ່ຽວກັບວິທີລວມໃນການຄຸ້ມຄອງບັນຫາໂລກເອດສ໌. ບັນດາອົງປະກອບໃຈກາງຂອງນະໂຍບາຍດັ່ງກ່າວນີ້ (ທີ່ຖືກສ້າງຂຶ້ນໃນຂໍ້ 6-9 ຂອງແນວທາງປະຕິບັດສະບັບນີ້ ໄດ້ລວມເອົາຂໍ້ມູນຂ່າວສານກ່ຽວກັບໂລກເອດສ໌ ແລະ ວິທີການຕິດຕໍ່ຂອງພະຍາດດັ່ງກ່າວ; ບັນດາມາດຕະການດ້ານການສຶກສາເພື່ອເສີມຂະຫຍາຍຄວາມເຂົ້າໃຈກ່ຽວກັບຄວາມສ່ຽງຂອງບຸກຄົນ ແລະເພື່ອສົ່ງເສີມບັນດາຍຸດທະສາດທີ່ເອື້ອອໍານວຍ; ບັນດາມາດຕະການປ້ອງກັນທີ່ສາມາດປະຕິບັດໄດ້ຈິງເຊິ່ງຈະຊຸກຍູ້ແລະສະໜັບສະໜູນການປ່ຽນແປງພຶດຕິກໍາ; ບັນດາມາດຕະການເບິ່ງແຍງ ແລະຊ່ວຍເຫຼືອຜູ້ອອກແຮງງານທີ່ໄດ້ຮັບຜົນກະທົບຈາກກໍລະນີທີ່ເຂົາເຈົ້າເອງ ຫຼື ສາມະຊິກຄອບຄົວຂອງເຂົາເຈົ້າຕິດເຊື້ອໂລກເອດສ໌; ແລະຍັງລວມເອົາຫຼັກການແຫ່ງການບໍ່ອົດທົນຕໍ່ທຸກຮູບແບບຂອງການສ້າງຄວາມອັບອາຍ ຫຼື ການຈໍາແນກຢູ່ສະຖານທີ່ເຮັດວຽກ.

ອາດຈະນຳໃຊ້ບັນດາບາດກ້າວດັ່ງຕໍ່ໄປນີ້ເປັນບັນຊີກວດສອບໃນເວລາສ້າງນະໂຍບາຍ ຫຼື ແຜນງານກ່ຽວກັບໂລກເອດສ໌:

- ສ້າງຕັ້ງຄະນະກຳມະການໂລກເອດສ໌ ໂດຍປະກອບດ້ວຍຜູ້ຕາງໜ້າຈາກຝ່າຍບໍລິຫານຂັ້ນສູງ, ຜູ້ຊີ້ນຳວຽກງານ, ຜູ້ອອກແຮງງານ, ກຳມະການ, ພະແນກຄຸ້ມຄອງຊັບພະຍາກອນມະນຸດ, ພະແນກຝຶກອົບຮົມ, ໜ່ວຍງານສາຍພົວພັນແຮງງານ, ໜ່ວຍງານສຸຂະພາບແຮງງານ, ຄະນະກຳມະການສຸຂະພາບແລະຄວາມປອດໄພແຮງງານ, ແລະ ຜູ້ທີ່ຕິດເຊື້ອໂລກເອດສ໌ຖ້າເຂົາເຈົ້າຕົກລົງເຂົ້າຮ່ວມນຳ;
- ຄະນະກຳມະການ ຕົກລົງກັນກ່ຽວກັບສິດແລະຂອບເຂດການເຄື່ອນໄຫວ, ອຳນາດໃນການຕັດສິນບັນຫາແລະຄວາມຮັບຜິດຊອບຂອງຕົນ;
- ທົບທວນບັນດາກົດໝາຍແຫ່ງຊາດແລະຜົນກະທົບຂອງກົດໝາຍເຫຼົ່ານັ້ນທີ່ມີຕໍ່ວິສາຫະກິດ;
- ຄະນະກຳມະການ ປະເມີນຜົນກະທົບຂອງການແຜ່ລະບາດຂອງເຊື້ອໂລກເອດສ໌ທີ່ມີຕໍ່ສະຖານທີ່ເຮັດວຽກ ແລະ ປະເມີນເບິ່ງຄວາມຕ້ອງການຂອງຜູ້ອອກແຮງງານທີ່ຕິດເຊື້ອໂລກເອດສ໌ດ້ວຍການດຳເນີນການສຶກສາເອົາຂໍ້ມູນເບື້ອງຕົ້ນແບບປິດລັບ;
- ຄະນະກຳມະການ ລະບຸປະເພດບໍລິການສຸຂະພາບແລະຂໍ້ມູນຂ່າວສານທີ່ມີສະໜອງໃຫ້ແລ້ວທັງຢູ່ໃນສະຖານທີ່ເຮັດວຽກແລະຊຸມຊົນທ້ອງຖິ່ນ;
- ຄະນະກຳມະການ ຮ່າງນະໂຍບາຍ, ສົ່ງວຽນຮ່າງນະໂຍບາຍດັ່ງກ່າວເພື່ອຂໍຄຳຄິດເຫັນແລ້ວດັດແກ້ແລະຮັບຮອງເອົາເປັນນະໂຍບາຍ;
- ຄະນະກຳມະການ ຂຶ້ນງົບປະມານ, ຊອກຫາແຫຼ່ງທຶນຈາກທາງນອກວິສາຫະກິດຖ້າຈຳເປັນ ແລະ ລະບຸຊັບພະຍາກອນທີ່ມີຢູ່ພາຍໃນຊຸມຊົນທ້ອງຖິ່ນ;
- ຄະນະກຳມະການ ສ້າງແຜນດຳເນີນງານ ໂດຍມີຕາຕະລາງເວລາແລະສາຍຄວາມຮັບຜິດຊອບ, ຕະຫຼອດເຖິງນະໂຍບາຍຈັດຕັ້ງປະຕິບັດແຜນດັ່ງກ່າວ;
- ເຜີຍແຜ່ນະໂຍບາຍແລະແຜນດຳເນີນງານໃຫ້ກວ້າງຂວາງຜ່ານທາງຕົວຢ່າງ: ກະດານຂ່າວ, ຈົດໝາຍແຈ້ງ, ຂໍ້ຄວາມຄັດຕິດໃສ່ເງິນເດືອນ, ກອງປະຊຸມພິເສດ, ຫຼັກສູດແນະນຳ, ແລະ ການຝຶກອົບຮົມຕ່າງໆ;
- ຄະນະກຳມະການ ຕິດຕາມກວດກາເບິ່ງຜົນກະທົບຂອງນະໂຍບາຍ;
- ຄະນະກຳມະການ ທົບທວນນະໂຍບາຍດັ່ງກ່າວຢ່າງເປັນປົກກະຕິຕາມທັດສະນະຂອງການຕິດຕາມກວດກາພາຍໃນແລະຂໍ້ມູນຂ່າວສານຈາກພາຍນອກທີ່ມີກ່ຽວກັບເຊື້ອໂລກເອດສ໌ ແລະ ຜົນກະທົບຂອງໄວຣັດສ໌ດັ່ງກ່າວຕໍ່ສະຖານທີ່ເຮັດວຽກ.

ທຸກບາດກ້າວທີ່ອະທິບາຍໄວ້ໃນຂ້າງເທິງນັ້ນ ຄວນຖືກລວມເຂົ້າໃນນະໂຍບາຍທີ່ຄົບວົງຈອນຂອງວິສາຫະກິດທີ່ໄດ້ຮັບການຂຶ້ນແຜນ, ການຈັດຕັ້ງປະຕິບັດແລະການຕິດຕາມກວດກາໃນລັກສະນະທີ່ຍືນຍົງແລະຕໍ່ເນື່ອງ.